

# ຈີນ ລໍາປາ

## ງານກິລາໂອລິມປິກຄັ້ງທີ29ໄດ້ເປີດສາກທີ່ປັກກິ່ງຢ່າງຄຶກຄື້ນ

## ພະນະທ່ານຫູຈິນທາວປະທານປະເທດຈີນ ທ່ານອູປແກ້ວປະທານສະພາຜູ້ແທນປະຊາຊົນທົ່ວປະເທດຕ່ແກ່ພົບປະພະນະທ່ານຈູມມະລີ ໄຊຍະສອນປະທານປະເທດ ສ ປປ ລາວ

ລາຄາ: 13000 ກີບ ¥10

ISSN 1673-3266
08/2008
ສະບັບທີ 36

## ທ່ານລີເຄີຊຽງຮອງນາຍົກລັດຖະມົນຕີ ສ ປ ຈີນພົບປະທ່ານສົມສະຫວາດ ເລັ່ງສະຫວັດຮອງນາຍົກລັດຖະມົນຕີຜູ້ປະຈໍາການລັດຖະບານລາວ


MEKONG An Authoritative Magazine in Thai
AUSPICIOUS An Authoritative Magazine in Burmanese
CHAMPA An Authoritative Magazine in Lao
Preferential Activity for Advertisement Provided by the Three Publications
Foreign Media Overbalance Investment Overal Agent Lower Price
湄公河
แม่น้ำโขง
12/2006 เล่มที่ 55
吉祥
占芭
Same Investment Different Return
In order to thank old & new customers for their kindness in giving MEKONG, AUSPICIOUS & CHAMPA support for a long time, " The Three Publications " Golden Combination Suit advertisement has been specially worked out for customers.
Please contact the general agent for detailed information:
CHAMPA Magazine
Add:Education Garden,Extensionline of Xihua Road,
Kunming,Yunnan, China
Tel:86-871-8042593 Fax:86-871-8042591
E-meil:ynzhanba@163.com
http://la.yunnan.cn http://laos.cri.cn http://www.scio.gov.cn

# ແຈ້ງການ

### ກ່ຽວກັບການເຄື່ອນໄຫວ "ຈັດງານປະກວດຮ້ອງ ເພງຈີນ"

ເພື່ອປະສານສົມທົບການຮຽນພາສາຈີນຂອງຜູ້ອ່ານວາ ລະສານ "ຈຳປາ" (ຈີນ) ແລະ ເພື່ອນມິດຊາວລາວຈຳນວນຫລວງ ຫລາຍໃຫ້ໄດ້ຮັບຜົນດີກວ່າເກົ່າ, ສະຖານເອກອັກຄະລັດຖະທູດຈີນ ປະຈຳລາວ ແລະສຳນັກງານວາລະສານ "ຈຳປາ" (ຈີນ) ຮ່ວມ ກັນເປັນເຈົ້າພາບຈັດໃຫ້ມີການເຄື່ອນໄຫວ "ງານປະກວດຮ້ອງ ເພງຈີນ" ຂຶ້ນ, ຈຶ່ງຂໍແຈ້ງການມາຍັງທ່ານຜູ້ອ່ານທັງຫລາຍດັ່ງຕໍ່ ໄປນີ້:

1. ເປົ້າໝາຍຂອງຜູ້ເຂົ້າຮ່ວມງານປະກວດ: ຜູ້ອ່ານວາລະສານ "ຈຳປາ" (ຈີນ), ຜູ້ທີ່ພວມຮຽນພາສາຈີນ ຢູ່ລາວ, ນັກຮຽນນັກສຶກສາ, ຊາວລາວຜູ້ມັກຮ້ອງເພງຈີນ, ຈີນ ຕ່າງດ້າວແລະ ຊາວລາວທີ່ມີເຊື້ອສາຍຈີນ.

2. ຫົວໜ່ວຍທີ່ຮັບການຈັດງານປະກວດ: ສະມາຄົມຈີນນະຄອນຫລວງວຽງຈັນ.

3. ເພງທີ່ເຂົ້າຮ່ວມການປະກວດ: ໂດຍເອົາຊື່ເພງໃນ ຄໍລຳ "ຮຽນຮ້ອງເພງຈີນ" ໃນເວັບໄຊ "ຈຳປາ" (ຈີນ) ແລະ ເພງໃນແຜ່ນສຽງທີ່ສຳນັກງານວາລະສານ "ຈຳປາ" ແຈກຢາຍນັ້ນເປັນຫລັກ.

4. ການຈັດຕັ້ງການປະກວດຮອບທຳອິດ ແລະ ຮອບຄັດເລືອກພ້ອມທັງສະຖານທີ່ຂອງການປະກວດໃຫ້ແຕ່ລະພາກສ່ວນ, ແຕ່ລະຫົວໜ່ວຍແລະແຕ່ລະທ້ອງຖິ່ນຮັບຜິດຊອບເອງ, ປະກວດເອົາຜູ້ເຂົ້າຮ່ວມການແຂ່ງຂັນຮ້ອງເພງໃນຮອບຄັດ ເລືອກ 30 ຄົນເພື່ອເຂົ້າຮ່ວມການປະກວດຊີງຊະນະເລີດ.

5. ເວລາປະກວດຊີງຊະນະເລີດ: ກາງເດືອນທັນວາ ປີ2008.

6. ສະຖານທີ່ປະກວດຊີງຊະນະເລີດ: ຫໍວັດທະນະທຳ ແຫ່ງຊາດທີ່ນະຄອນຫລວງວຽງຈັນ ສປປ ລາວ.

7. ມາດຕະຖານຂອງການໃຫ້ຄະແນນ: ອອກສຽງສຳ ນຽງຊັດ, ອອກສຽງໄດ້ມາດຕະຖານ, ອາລົມຈິດທີ່ສະແດງອອກ ສວຍງາມ, ວາດຊົງຢູ່ເທິງເວທີສະຫງ່າ.

8. ງານປະກວດຊີງຊະນະເລີດໂດຍແມ່ນສະຖານເອກອັກຄະລັດຖະທູດຈີນປະຈຳລາວ, ສຳນັກງານວາລະສານ "ຈຳປາ" (ຈີນ)ແລະ ຫົວໜ່ວຍຮັບຈັດງານປະກວດຮ່ວມກັນຈັດຕັ້ງຂຶ້ນ.

ຜ່ານການປະກວດຊີງຊະນະເລີດແລ້ວ, ສຸດ ທ້າຍປະກວດອອກຜູ້ໄດ້ລາງວັນ ທີ 1: 5 ຄົນ, ລາງວັນທີ 2: 10 ຄົນ ແລະ ລາງວັນທີ 3: 15 ຄົນ. ເງິນລາງວັນທີ 1: 500 ຢວນ, ລາງວັນທີ 2: 300 ຢວນ, ລາງວັນທີ 3: 200 ຢວນ. ຜູ້ທີ່ເຂົ້າຮ່ວມການປະກວດຊີງຊະນະເລີດທັງໝົດລ້ວນແຕ່ໄດ້ຂອງລະນຶກ 1 ອັນ. ໃນນັ້ນ, ຜູ້ທີ່ໄດ້ລາງວັນທີ 1 ຈະຖືກສຳນັກພິມວາລະສານ "ຈຳປາ" ເຊື້ອເຊີນເດີນທາງໄປທັດສະນະສຶກສາ ແລະ ທ່ຽວຊົມທີ່ຄຸນມິງ ແລະ ແຫ່ງອື່ນໆຂອງຈີນ, ຄ່າໃຊ້ຈ່າຍແມ່ນສຳນັກງານວາລະສານ "ຈຳປາ" (ຈີນ)ເປັນຜູ້ຮັບຜິດຊອບ, ຈຶ່ງແຈ້ງການມາເພື່ອຊາບ.

ໂທລະສັບຫາບທານ: 0086-871-8042591 ຜູ້ຕິດຕໍ່ພົວພັນ: ຊູເອີນເອີນ

00856-21-214661 ຜູ້ຕິດຕໍ່ພົວພັນ: ເພິງເຈີ້ນຮົວ

ວັນທີ 18 ມິຖຸນາ ປີ 2008

ສະຖານເອກອັກຄະລັດຖະທູດ ສປ ຈີນ ປະຈຳ ສປປ ລາວ

ສຳນັກງານວາລະສານ "ຈຳປາ" ພາສາລາວ ແຫ່ງປະເທດຈີນ.

### 关于举办“学唱中文歌曲大赛”活动

## 公　告

为了更好地配合中国·《占芭》杂志读者和广大老挝朋友学习汉语，中国驻老挝大使馆、中国·《占芭》杂志社联合主办“学唱中文歌曲大赛”活动，现公告如下：

1. 参赛对象：中国·《占芭》杂志读者，老挝正在学习中文人员，青年学生，老挝中文歌曲爱好者，华人华侨。

2. 承办单位：老挝万象中华理事会。

3. 参赛歌曲：以中国·《占芭》网站“学唱中文歌曲”栏目中歌曲及杂志社发放的光盘歌曲为主要参赛曲目。

4. 初赛、复赛组织及地点由各系统、各单位、各地区负责，复赛后共选出 30 名选手参加决赛。

5. 决赛时间：2008 年 12 月中旬。

6. 决赛地点：老挝万象国家文化宫。

7. 评分标准：吐字清楚、发音准确，表情优美、台风庄重。

8. 决赛由中国驻老挝大使馆，中国·《占芭》杂志社，及承办单位共同组织。

通过大赛，最后决出一等奖 5 名，二等奖 10 名，三等奖 15 名。一等奖奖金人民币 500 元；二等奖奖金人民币 300 元；三等奖奖金人民币 200 元。凡参加决赛者均获纪念品一份。其中，一等奖获得者由中国·《占芭》杂志社邀请前往中国昆明等地观光考察，费用由《占芭》杂志社承担。

联系电话：0086—0871—8042591　联系人：苏雯雯

00856—21—214661　联系人：彭正华

中国驻老挝大使馆

中国·老挝文《占芭》杂志社

2008年7月

ເຈົ້າໜ້າທີ່ຄຸ້ມຄອງໂດຍ
ຫ້ອງການຂ່າວຄະນະລັດຖະບານສ ປຈີນ
ຈັດທຳໂດຍ
ສະມາຄົມແລກປ່ຽນວັດທະນະທຳກັບຕ່າງ
ປະເທດແຂວງຢູນນານສ ປຈີນ
ຮຽບຮຽງພິມຈຳໜ່າຍ
ສຳນັກພິມວາລະສານ《ຈຳປາ》
ຫົວໜ້າບັນນາທິການ
ໄຊຊຸນແຊງ
ຫົວໜ້າບັນນາທິການບໍລິຫານ
ຢາງຢູນ
ຫົວໜ້າພິມຈຳໜ່າຍ
ຢູຍເຈີງຢູຍ
ຜູ້ຄຸ້ມງານບັນນາທິການ
ຫວາງວັນລີ
ບັນນາທິການປະຈຳ
ຊູເວີນເວີນ
ຜູ້ຄຸ້ມງານຝ່າຍສິລະປະ
ຈູ້ສິນ
ຜູ້ແປພາສາລາວ
ທອງຂຽນ ຂໍາຕະກຸນ
ບັນນາທິການອ່ານກວດ ພາສາລາວ
ລີວເຢີນເຫີ
ຜູ້ພິມດີດພາສາລາວ
ຈັນເຫວີວັນ
ຜູ້ຄຸ້ມງານຝ່າຍອິນເຕີເນັດ
ຈາງເຊີຢີ
ບັນນາທິການຝ່າຍອິນເຕີເນັດ
ລີທາວ
ພະນັກງານຝ່າຍປົກຄອງ
ລູຢູຍ

ພິມຈຳໜ່າຍເປີດເຜີຍ:
ພາຍໃນແລະຕ່າງປະເທດ
ອອກຈຳໜ່າຍ:
ວັນທີ 5 ທຸກເດືອນ
ລະຫັດວາລະສານມາດຖານສາກົນ:
ISSN 1673–3266
ລະຫັດວາລະສານປະເທດຈີນ:
CN53–1200/D
http://www.r ivermk.com
E–mail: ynzhanba@163.com

ເລກໃບປາຕັງທຸລະກິດໂຄສະນາ: 5300004000052

ສະຖານທີ່: ສວນດອກໄມ້ສຶກສາສາຍທາງຕໍ່ຖະ
ໜົນຊີຮວາ ນ.ຄ.ຄຸນໝິງ ຂວ.ຢູນນານ
ລະຫັດໄປສະນີ: 650228
ໂທ: 86 - 871 - 8042593
ແຟັກ: 86 - 871 - 8042591




ຄະນະຜູ້ແທນກິລາໂອລິມປິກສ ປປ ລາວເຂົ້າສູ່ສະໜາມ
北京2008奥运会开幕式老挝代表团入场
新华社 图


主　　　管：中华人民共和国国务院新闻办公室
主　　　办：云南省对外文化交流协会
编 辑 出 版：《占芭》杂志社
总　编　辑：蔡春生
执行总编辑：杨　云
总编室主任：禹正玉
编 辑 总 监：王万里
责 任 编 辑：苏雯雯
美 术 总 监：祝　群
翻　　　译：通肯·坎达古温
老挝文译审：刘仁和
老挝文录入：杨思艳
网 络 总 监：张守义
网 络 编 辑：李　涛
编　　　务：陆　蕊

发行范围：国内外公开发行
出版日期：每月五日
邮发代号：64－36
国际标准刊号：ISSN 1673－3266
国内统一刊号：CN53－1200/D

广告经营许可证号 ：5300004000052

地址：云南省昆明市西华路延长线 教育花园三楼
编辑部电话：86 - 871 - 8042593
办公室电话：86 - 871 - 8042591
传真：86 - 871 - 8042591
邮编：650228


# ສາລະບານ

08/2008 ສະບັບທີ 36














## ສາລະຄະດີພິເສດ 本刊特稿


4. ງານກິລາໂອລິມປິກຄັ້ງທີ29ໄດ້ເປີດສາກທີ່ປັກກິ່ງຢ່າງຄຶກຄື້ນ

18. ປະມຸກລັດບັນດາປະເທດລວມສູນຢູ່ປັກກິ່ງ,ຈີນຈັດງານມະໂຫລານດ້ານການຕ່າງປະເທດກິລາໂອລິມປິກ

19. ພະນະທ່ານຫູຈິນທາວປະທານປະເທດຈີນ ທ່ານອູປາງກົວປະທານສະພາຜູ້ແທນປະຊາຊົນທົ່ວປະເທດຕ່າງກໍພົບປະພະນະທ່ານຈູມມະລີ ໄຊຍະສອນປະທານປະເທດ ສ ປປ ລາວ

21. ທ່ານລີເຄີຊຽງຮອງນາຍົກລັດຖະມົນຕີສ ປ ຈີນພົບປະທ່ານສົມສະຫວາດ ເລັ່ງສະຫວັດຮອງນາຍົກລັດຖະມົນຕີຜູ້ປະຈຳການລັດຖະບານລາວ

21. ທ່ານສົມສະຫວາດ ເລັ່ງສະຫວັດຮອງນາຍົກລັດຖະມົນຕີຜູ້ປະຈຳການລັດຖະບານລາວຍ້ອງຍໍສັນລະເສີນຢ່າງສູງຕໍ່ພິທີເປີກສາກງານກິລາໂອລິມປິກປັກກິ່ງ

22.ປະເທດຈີນທີ່ເປີດປະຕູສູ່ພາຍນອກຈະພາໃຫ້ງານກິລາໂອລິມປິກຍິ່ງມີຄວາມສະຫງ່າງາມ

26.6ຕົວເມືອງປະສານງານກິລາໂອລິມປິກປະດັບປະດາອັນສວຍງາມຢ່າງຄຶກຄື້ນເພື່ອຕ້ອນຮັບງານມະຫາກຳກິລາໂອລິມປິກ

30. ປັກກິ່ງເຂົ້າສູ່“ ຊ່ວງໄລຍະເວລາງານກິລາໂອລິມປິກ ” ຄຸນນະພາບຂອງອາກາດຖືກມາດຖານ

34. ສຸດຍອດຂອງງານມະຫາກຳກິລາໂອລິມປິກປັກກິ່ງປີ 2008

38. ປັກກິ່ງເຕັມໄປດ້ວຍບັນຍາກາດງານມະຫາກຳກິລາໂອລິມປິກຢູ່ທຸກຫົນທຸກແຫ່ງ


## ປະຕູເມືອງຈີນ 中国之窗


42. ຍຶດໝັ້ນການປະຕິຮູບເປີດປະຕູສູ່ພາຍນອກ ຊຸກດັນການຮ່ວມມື ແລະ ພ້ອມກັນເອົາຊະນະ






## ຫຼຽວເບິ່ງອາຊຽນ 东盟瞭望


46. ອາຊຽນກັບ 3 ປະເທດຈີນ, ຍີ່ປຸ່ນ ແລະສ. ເກົາຫລີ ພ້ອມກັນຊຸກດັນການຮ່ວມມືການເງິນການທະນາຄານອາຊີຕາເວັນອອກ


## ເມືອງລາວໃນວັນນີ້ 今日老挝


50. ເພີ່ມທະວີການຮ່ວມືລະຫວ່າງມະຫາວິທະຍາໄລຊົນເຜົ່າຢູນນານກັບມະຫາວິທະຍາໄລຊັ້ນສູງຂອງລາວ


## ລຽບຊົມວັດທະນະທຳ 文化博览


54. ສິ່ງປັກແສ່ວຊູໂຈວທີ່ປານິດວົດງາມ




## ປະຊາຊາດຈີນ 中华民族


58. ເສື້ອຜ້າອາພອນຊົນເຜົ່າອູຍອູເອີມີຫຼາຍຮູບແບບທີ່ສວຍງາມ


## ບໍລິການເພື່ອທ່ານ 为您服务


60. ອາຫານປະສົມກັນເປັນຄູ່,ທາດບຳລຸງຈະເພີ່ມຂຶ້ນ1ເທົ່າຕົວ


## ຮຽນພາສາຈີນ 学 汉 语


62.ພວກເຮົາພ້ອມກັນໄປເຊຍໃຫ້ງານມະຫະກຳ ກິລາໂອລິມປິກ


## ນິທານສຸພາສິດ 成语故事


64. ກາຍໜ້າປະຕູໄປກໍບໍ່ເຂົ້າເຮືອນ

# ງານກິລາໂອລິມປິກຄັ້ງ




ທ່ານຫູຈິນທາວປະທານປະເທດຈີນປະກາດງານກິລາໂອລິມປິກຄັ້ງທີ 29ເປີດສາກ

中国国家主席胡锦涛宣布第二十九届奥林匹克运动会开幕

新华社 图

## 第二十九届奥运会在北京隆重开幕

2008 年 8 月 8 日晚，举世瞩目的北京奥运会开幕式在中国国家体育场“ 鸟巢 ”隆重举行。具有两千多年历史的奥林匹克运动与五千多年的灿烂中华文化交相辉映，13 亿中国人民永难忘怀的时刻，一个古老民族的历史，5000 年浩然文明之光，人类发展的长河中曾留下多少永不磨灭的“ 中国印 ”。北京不眠之夜！今宵，世界同庆！

ຕອນຄໍ່າວັນທີ 8ສິງຫາປີ2008ງານກິລາໂອລິມປິກປັກກິ່ງທີ່ທົ່ວທັງໂລກຈັບຕາມອງນັ້ນໄດ້ເປີດສາກຢ່າງຄຶກຄື້ນທີ່ "ຮັງນົກ" ສະໜາມກິລາແຫ່ງຊາດ.ມະຫາກໍາກິລາໂອລິມປິກທີ່ມີປະຫວັດສາດ 2 ພັນກວ່າປີໄດ້ເຊື່ອມເຂົ້າກັນກັບວັດທະນະທໍາຈີນອັນຮຸ່ງເຮືອງທີ່ມີປະຫວັດສາດ 5 ພັນກວ່າປີ, ຂຽນບົດໃໝ່ປະຫວັດສາດອະລິຍະທໍາມະນຸດສາດ



新华社 图

# ທີ29ໄດ້ເປີດສາກທີ່ປັກກິ່ງຢ່າງຄຶກຄື້ນ





ທ່ານໜັກ ຣອກປະທານຄະນະກຳມະການກິລາໂອລິມປິກສາກົນ(ຊ້າຍ)ກ່າວຄຳປາໄສໃນພິທີເປີດງານກິລາໂອລິມປິກ
国际奥委会主席罗格（左）在开幕式上致辞　新华社 图



ທ່ານຫູຈິນທາວເປັນຕົ້ນເຂົ້າຮ່ວມພິທີເປີດງານກິລາໂອລິມປິກຄັ້ງທີ 29 ປັກກິ່ງ
胡锦涛出席北京第二十九届奥运会开幕式　新华社 图

ໃຕ້ຄ່ຳຄືນ,ຕັ່ງນັ່ງໃນ "ຮັງນົກ" ສະໜາມກິລາບໍ່ມີບ່ອນຫວ່າງ,ເຕັມໄປດ້ວຍອາລົມຈິດກະຕືລືລົ້ນ,ກ່ອນຈະເປີດພິທີ,ທີມຄະນະສິລະປະກອນສະແດງຟ້ອນລຳທຳເພງຊົນຊາດຊົນເຜົ່າທີ່ຈັບອົກຈັບໃຈ,ບັນຍາກາດໃນສະໜາກິລາຟົດຟື້ນຊື່ນໃຈທີ່ສຸດ.

ຜູ້ນຳພັກລັດທ່ານຫູຈິນທາວປະທານປະເທດ,ທ່ານເວີນເຈຍປາວນາຍົກລັດຖະມົນຕີຈີນ,ທ່ານໜັກ ຣອກປະທານຄະນະກຳມະການກິລາໂອລິມປິກສາກົນ,ທ່ານອັນໂຕນີໂອຊາມານ ປະທານກິຕິມະສັກຊົ່ວຊີວິດງານກິລາໂອລິມປິກແລະປະມຸກລັດຫລາຍປະເທະຄືະທ່ານຈູມມະລີໄຊຍະສອນປະທານປະເທດລາວເປັນຕົ້ນ,204ຄະນະ,ນັກກິລາແລະກຳມະການຕັດສິນມ16000ຄົນ ,ຜູ້ຊົມກັບທີ່1 ແສນກວ່າຄົນ,ຜູ້ຊົມໂທລະພາບເປັນຫລາຍຕື້ເປັນສັກຂີພິຍັນຢັ້ງຢືນຂະນະປະຫວັດສາດທີ່ຈັບອົກຈັບໃຈດັ່ງກ່າວນີ້.

ແສງຮຸ່ງທີ່ຈັບຕາເປັນຊໍ່ສ່ອງແສງເຖິງເຂັ້ມອາທິດໂພງທີ່ເກົ່າແກ່,ເຄື່ອງດົນຕີຕີເສບສະໄໝບູຮານຈີນສົ່ງສຽງຈັບຈິດຈັບໃຈອອກມາ,ຜູ້ຊົມທົ່ວສະໜາມຮ້ອງໂຮອຶກກະທຶກກຶກກ້ອງຕາມຕົວເລກເຂັມໂມງນັບເວລາຖອຍຫລັງ10,9,8,...2.1.ເວລາ 20ໂມງຕົງເປີດພິທີເປັນທາງການໃນທາມກາງຮ້ອງໂຮໄຊໂຍຊົມເຊີຍ.

"ເພງທຸງແດງ5ດາວປິວສະບັດໄປຕາມສາຍລົມ,ສຽງເພງໄຊໂຍ....." ອະນຸຊົນ 56ຄົນທີ່ນຸ່ງເຄື່ອງບັນດາຊົນເຜົ່າຈີນອົ້ມ



ຄະນະຜູ້ແທນກິລາໂອລິມປິກປະເທດຈີນເຂົ້າສູ່ສະໜາມ
中国代表团入场　CFP 图




ທ່ານຫູຈິນທາວເປັນຕົ້ນພົບປະກຳມະການ ໂອລິມປິກສາກົນຢ່າງສະໜິດສະໜົມແລະຖ່າຍຮູບນຳກັນເປັນທີ່ລະນຶກ
胡锦涛亲切会见国际奥委会委员并合影　新华社 图

ຊູທຸງແດງ5ດາວທີ່ສີແດງສົດເຂົ້າສູ່
ສະໜາມກິລາໃນທາມກາງສຽງເພງ
ເດັກຍິງທີ່ສົດໃສ.20ໂມງ12ນາທີ,ໝົດ

ທຸກຄົນລຸກຂຶ້ນ,ກອງດຸລິຍາງບັນເລງເພງ
ຊາດສ ປ ຈີນ,ທຸງຊາດຈີນຄ່ອຍໆຂຶ້ນ
ເສົາທຸງ,ສຽງເພງຊາດທີ່ແຈ້ມໃສກ້ອງ



ທຸງແດງ 5 ດາວເຂົ້າສູ່ສະໜາມໃນພິທີເປີດງານກິລາໂອລິມປິກ
开幕式上五星红旗入场　新华社 图

ກາງເວັນໃນສະໜາມກິລາ.

ແສງສະຫວ່າງຄ່ອຍໆປ່ຽນມືດ, ສຽງພິນບູຮານດັງຂຶ້ນ, ກໍ່ພາບຮູບະໜາດໃຫຍ່ຄ່ອຍໆເປີດອອກ, ການສະແດງສິລປະຂະໜາດໃຫຍ່ໂດຍແມ່ນ "ໂອລິມປິກທີ່ສວຍງາມ" ເປັນຫົວອໍ້ໄຂສາກອອກມາ......ຢູ່ບົນມ້ວນຍາວມ້ວນ


ທຸງງານກິລາໂອລິມປິກເຂົ້າສູ່ສະໜາມ
奥林匹克会旗入场　新华社 图



CFP 图


①


ພາບ1.2.ສະໜາມເປີດພິທີງານກິລາໂອລິມປິກ
图①②　开幕式现场　吴贵荣 摄



②

ຫນຶ່ງທີ່ມີເນື້ອຫາຈີນປູໄວ້ໃນສູນກິລາແຫ່ງຊາດຈີນ,ວັດທະນະທຳປະຫວັດສາດຈີນໃຫ້ທົ່ວທັງໂລກຜ່ານລາຕີທີ່ຈັບຕາຫຼົງໄຫລຄືນຫນຶ່ງ.ແຕ່ການສະແດງຕົວອັກສອນ



奥运五环在开幕式上升起　吴贵荣　摄



ເປັນພິມດີດ ໂຕໜັງສືຈີນເຖິງລູກສິດຂົງ ຈື້3000ຄົນອ່ານກາບກອນ,ແຕ່ງິ້ວປັກກິ່ງ ຮູບກາຕູນເຖິງສາຍທາງແຜ່ນໄໝ,ແຕ່ ສຸພາສະຕິເຖິງສຽງດົນຕີພິນ,ແຕ່ "ແຜນ ທີ່ຊີນມີງສັງເຮົາຖູ" ເຖິງ "ລາຕີດວງເດືອນ ມາລາຊູນຈຽງ" ທີ່ຈັບອົກຈັບໃຈ....ລວມ



ການສະແດງໃນພິທີເປີດງານກິລາໂອລິມປິກ.
开幕式上的演出新华社 图


ກອງສິລປະກອນຟ້ອນຮົວແອວວູຂອງເມືອງສືຜິນກິ່ງແຂວງຫົງເຫີແຂວງຢູນນານສະແດງການຟ້ອນຫຼິ້ນມັງກອນໃນພິທີເປີດງານກິລາໂອລິມປິກປັກກິ່ງ
云南省红河州石屏县“ 花腰彝 ”艺术团在北京奥运会开幕式上表演飞舞龙飞 吴贵荣 摄

ທັງອະລິຍະທຳທີ່ຮຸ່ງເຮືອງບູຮານຈີນ4ມະຫາປະດິດຄິດສ້າງ,ເຮັດໃຫ້ຄົນຈີນຮູ້ສຶກພາກພູມໃຈ,ຊາວໂລກຮູ້ສຶກມີຄວາມຊື່ນໃຈ.

ການສະແດງເຂົ້າສູ່ພາກປາຍ《ສະໄໝສະຫງ່າລາສີ》. ໃນເວທີສະແດງມີຮູບໜ່ວຍພິພົບ3ມິຕິ--"ຮັງນົກ" ແລະໃບໜ້າຍິ້ມແຍ້ມແຈ້ມໃສຂອງເດັກທີ່ໜ້າຮັກເປັນລ້ານເປັນໂກດອອກມາຢູ່ໃນຈໍຮູບເງົາຂະໜາດໃຫຍ່. "ໂລກດຽວກັນ,ຄວາມຝັນດຽວກັນ" ສະແດງອອກມາໝົດ.

"ຂ້ອຍກັບເຈົ້າ,ໃຈຕິດໃຈ...ເດີນພັນຫຼັກ,ພົບກັນຢູ່ປັກກິ່ງ.ຊ...ເປັນໄທເຮືອນດຽວກັນຈີນເທົ່າໃດໆ!" ທ່ານນັກຮ້ອງລິວຮອນ


ການສະແດງໃນພິທີເປີດງານກິລາໂອລິມປິກ.
开幕式上的演出 吴贵荣 摄



①

ກັບນາງຊາຣາບຸໄຣແມນນັກຮ້ອງອັງກິດທີ່ຊ່ວຍຮ້ອງເພງຫົວເລື່ອງງານໂອລິມປິກປັກກິ່ງທີ່ວ່າ《ຂ້ອຍກັບເຈົ້າ》.

21ໂມງ10ນາທີ,ເລີ່ມເປີດພິທີນັກກິລາສູ່ສະໜາມ,ຄະນະຜູ້ແທນເກຼັກທີ່ມາຈາກແຫຼ່ງກິລາໂອລິມປິກເຂົ້າສູ່ສະໜາມກ່ອນ,ຄະນະຜູ້ແທນອື່ນ202ປະເທດແລະເຂດແຄ້ວນເຂົ້າສູ່ສະໜາມເປັນລຳດັບຕາມລຳດັບໂຕອັກສອນຫຍໍ້ໜັງສືຈີນ.

23ໂມງ9ນາທີ,ຄະນະຜູ້ແທນຈີນທີ່ເປັນເຈົ້າພາບເຂົ້າສູ່ສະໜາມສຸດທ້າຍ.ທ່ານຢາວມີງຜູ້ຖືຄັນທຸງຈັບມືກັບລິນຮາວຜູ້ວິລາຊົນເດັກນ້ອຍຕ່ານໄພແຜ່ນດິນໄຫວເອີນຊວນໄປທາງໜ້າຄະນະຜູ້ແທນ.

ທ່ານລິວຊີປະທານຄະນະກຳມະການກິລາໂອລິມປິກປັກກິ່ງແລະທ່ານໜັກຣອກປະທານຄະນະກຳມະການງານກິລາໂອລິມປິກສາກົນກ່າວຄຳປາໄສໃນພິທີເປີດສາກເປັນລຳດັບ.

23ໂມງ36ນາທີ,ທ່ານຫູຈິນທາວປະທານປະເທດຈີນປະກາດໂດຍສຽງດັງດັງວ່າ:ງານມະຫາກຳກິລາໂອລິມປິກຄັ້ງທີ29ປັກກິ່ງເປີດສາກ!ຊົ່ວກະພິບຕາ,ໄຟດອກແວວວາວເບັ່ງບານຢູ່ກາງເວຫາທ່ຽງຄືນ,ທຸງສີປິວສະບັດ,ສຽງຮ້ອງໂຮໄຊໂຍບໍ່ຢຸດບໍ່ເຊົາ....

ນັກຖືທຸງ8ຄົນ ຖືທຸງງານກິລາໂອລິມປິກສູ່ສະໜາມ.ອະນຸຊົນນຸ່ງເຄື່ອງຊົນເຜົ່າ80ຄົນຮ້ອງເພງງານກີ





ພາບ 1.2.3.ແສງສະຫວ່າງແລະສຽງກ້ອງກາງເວັນທີ່ສະເທືອນໃຈໃນພິທີເປີດງານກິລາໂອລິມປິກທີ່ເຕັມໄປດ້ວຍອາລົມຈີນທີ່ດົງຫນາເຊິ່ງໄດ້ສະແດງວັດທະນະທຳຈີນຢ່າງເຕັມສ່ວນອອກມາ

图 ①②③ 开幕式上震撼的声光效果，充满了浓浓的中国风，将中国文化展现得淋漓尽致 新华社 图



ລາໂອລິມປິກ, ທຸງງານກິລາໂອລິມປິກຄ່ອຍໆຂຶ້ນເສົາທຸງປິວສະບັດຢູ່ກາງຫາວພ້ອມກັນກັບທຸງຊາດຈີນ, ນາງຈາງອີນິນນັກກິລາຈີນ, ທ່ານຮອງລີຜິນກຳມະການຕັດສິນຕ່າງກໍຕ່າງໜ້າບັນດານັກກິລາທີ່ເຂົ້າຮ່ວມການແຂ່ງຂັນແລະກຳມະການຕັດສິນປະຕິຍານຕົວຢູ່ໃຕ້ທຸງ5ວົງແຫວນ.

ຕໍ່ມາ, ໃນທາມກາງສຽງເພງທີ່ອອນຊອນ, ສາວໜຸ່ມນຸ່ງເສື້ອຂາວ 100ຄົນຟ້ອນດ້ວຍສອງແຂນໄຂ່ວກັນເໝືອນດັ່ງນົກກາງແກສີຂາວສະອາດບິນຢູ່ກາງຫາວນັກກິລາກັບຜູ້ຊົມກໍຟ້ອນດ້ວຍສອງແຂພ້ອມກັນ, ກາຍເປັນພາບວົງມະໂຫລານທີ່ນົກກາງແກຫລາຍພັນໂຕພ້ອມກັນບິນຂຶ້ນ. ສະແດງເຖິງຄວາມປາຖະໜາຂອງປະຊາຊົນຈີນທີ່ມີຕໍ່າສັນຕິພາບ.

23ໂມງ54ນາທີ, ທອນໄຟໂອລິມປິກມາສູ່ສະໜາມກິລາແຫ່ງຊາດ, ພິທີຈູດທອນໄຟທີ່ຈັບຈິດຈັບໃຈທີ່ຈະມາເຖິງ, ນັກຖືທອນໄຟ8ຄົນດຳເນີນການສົ່ງຕໍ່ສຸດທ້າຍໃນສະໜາມກິລາ. 0ໂມງຕົງວັນທີ 9, ທ່ານລີນິນນັກຖືທອນໄຟຜູ້ທີ 8ຊູທອນໄຟສູງບິນຂຶ້ນກາງຫາວ, ແລ່ນໄວໃນກາງຫາວສະໜາມກິລາດ້ວຍບາດກ້າວເດີນ. ພາບຮູບສົ່ງຕໍ່ທອນໄຟ ຢູ່ທົ່ວໂລກພ້ອມກັນສະແດງອອກມາ. 0ໂມງ4ນາທີ. ທ່ານລີນິນທີ່ແລ່ນຢູ່ກາງຫາວນັ້ນແລ່ນມາເຖິງແຄມແທ່ນທອນໄຟຈູດຂະນອນ, ທອນໄຟໂຄ່ງຖືກໄຕ້ລຸກຂຶ້ນ, ແປວໄຟງານກິລາໂອລິມປິກສ່ອງແສງສະຫວ່າງອັນຮຸ່ງ ໆເຮືອງໆ ເຮັດໃຫ້ ທ້ອງໄຟສະໜາມກິລາສະຫວ່າລາສີ. ສຽງດົນຕີທີ່ມ່ວນຫູ, ສຽງຮ້ອງໂຮໄຊໂຍສະເທືອນເກືອບຫູໜວກ, ບັນຍາ



ການສະແດງທີ່ສວຍສົດງົດງາມຂອງນັກສິລປິນໃນພິທີໄດ້ຮັບການຍ້ອງຍໍສັນລະເສີນໂດຍດີຈາກຜູ້ຊົມທັງມວນ　开幕式上演员精彩的表演获得观众一致好评　吴贵荣 摄





ພາບ 1.2.ຄະນະຜູ້ແທນກິລາໂອລິມປິກສ ປປ ລາວຈັດພິທີຊັກທຸງຂຶ້ນເສົາ
图 ①② 老挝奥运代表团举行升旗仪式 新华社 图



ຄະນະຜູ້ແທນກິລາໂອລິມປິກສ ປປ ລາວເຂົ້າສູ່ສະໜາມ 老挝代表团入场 新华社 图

ກາດກ້າວຂຶ້ນເຖິງກະແສສູງ.

ຂະນະທີ່ບໍ່ຫລົງລືມຈັກເທື່ອຂອງປະຊາຊົນຈີນ 1,3 ຕື້,ປະຫວັດສາດຂອງປະຊາຊາດຈີນທີ່ເກົ່າແກ່ຊາດໜຶ່ງ,ແສງສະຫວ່າງອະລິຍະທຳມະໂຫລານທີ່ມີ5000ປີ. "ກາຈີນ" ທີ່ດັບບໍ່ໄດ້ເຊິ່ງຈົ່ງໄວ້ຢູ່ໃນແມ່ນ້ຳຍືນຍົງມອນມະນຸດພັດທະນາເປັນຈຳນວນຫລວງຫລາຍ.ກາງຄືນປັກກິ່ງແຫ່ງການນອນບໍ່ຫລັບຄືນນີ້ຂໍອວຍໄຊໃຫ້ພອນທົ່ວໂລກພ້ອມກັນສະຫຼອງໄຊ !





ທ່ານລີນິນຈູດທອນໄຟຫຼັກງານກິລາໂອລິມປິກ 李宁点燃奥运主火炬 CFP 图



CFP 图



ທ່ານລິວຮ້ອນ(ຂວາ)ນັກຮ້ອງຈີນທີ່ຊ່າລືກັບທ່ານນາງຊາຣາ ບຸໄຣແມນນັກຮ້ອງທີ່ຊ່າລືອັງກິດຮ້ອງເພງຫົວເລື່ອງງານກິລາໂອລິມປິກປັກກິ່ງໃນພິທີເປີດສາກທີ່ວ່າ 《ຂ້ອຍກັບເຈົ້າ》

刘欢 ( 右 ) 和英国著名歌手沙拉 · 布莱曼在开幕式上演唱北京奥运会主题歌《我和你》CFP 图



ການສະແດງໄຟດອກໃນພິທີເປີດສາກ 开幕式焰火表演 新华社 图

# ປະມຸກລັດບັນດາປະເທດລວມສູນຢູ່ປັກກິ່ງ, ຈີນຈັດງານມະໂຫລານດ້ານການຕ່າງປະເທດກິລາໂອລິມປິກ



ໃນວັນທີ 8 ສິງຫາ, ທ່ານຫູຈິນທາວປະທານປະເທດຈີນພ້ອມດ້ວຍພັນລະຍາທ່ານນາງລີວຢົງຊິນຈັດງານລ້ຽງຮັບຮອງແຂກຜູ້ມີກຽດທີ່ມາຮ່ວມພິທີເປີດງານກິລາໂອລິມປິກປັກກິ່ງ. ນີ້ແມ່ນແຂກຜູ້ມີກຽດແລະຜູ້ເປັນເຈົ້າພາບຢ່າງເຂົ້າສູ່ຫໍງານລ້ຽງ

8 月 8 日，中国国家主席胡锦涛和夫人刘永清为出席北京奥运会的贵宾举行欢迎宴会，这是宾主步入宴会厅  新华社  图

## 各国政要云集北京
## 中国举行“奥运外交盛宴”

8 月 8 日中午，中国国家主席胡锦涛在北京人民大会堂举行宴会，欢迎 80 多个国家首脑出席北京奥运会开幕式。

从 8 月 7 日起，中国领导人举行了 70 多场首脑会谈。在一系列会谈中，中国对各国给予北京奥运会的支持及向四川大地震提供的援助表示感谢。

各国政要出席北京奥运会开幕式，充分说明了中国改革开放 30 年来取得的巨大成就，国家繁荣昌盛，人民生活富裕。北京奥运会不仅是各国运动员的大聚会，也成了国际政要聚首的舞台，标志着中国全面走向世界的一个新阶段。

ຕອນທ່ຽງວັນທີ 8 ສິງຫາ, ທ່ານຫູຈິນທາວປະທານປະເທດຈີນຈັດງານລ້ຽງຮັບຮອງປະມຸກລັດຂອງ 80ກວ່າປະເທດທີ່ມາຮ່ວມພິທີເປີດງານກິລາໂອລິມປິກປັກກິ່ງຢ່າງຄຶກຄື້ນທີ່ຫໍສະພາປະຊາຊົນປັກກິ່ງ.

ເລີ່ມແຕ່ວັນທີ 7 ສິງຫາເປັນຕົ້ນມາ, ຜູ້ນໍາຈີນໄດ້ດໍາເນີນການເຈລະຈາກັນລະຫວ່າງປະມຸກລັດ 70 ກວ່າເທື່ອ. ຢູ່ໃນການເຈລະຈາດັ່ງກ່າວນີ້, ຜູ້ນໍາຈີນໄດ້ສະແດງຄວາມຂອບອົກຂອບໃຈຕໍ່ການສະຫນັບສະຫນູນຂອງບັນດາປະເທດທີ່ສະຫນອງໃຫ້ງານກິລາໂອລິມປິກປັກກິ່ງແລະການຊ່ວຍເຫຼືອທີ່ສະຫນອງໃຫ້ການກູ້ໄພຕ້ານແຜ່ນດິນໄຫວອະຫນາດໃຫຍ່ເສຊວນ.

ການທີ່ປະມຸກລັດບັນດາປະເທດທີ່ມາເຂົ້າຮ່ວມພິທີເປີດງານກິລາໂອລິມປິກປັກກິ່ງສະແດງໃຫ້ເຫັນວ່າ, ການປະຕິຮູບແລະເປີດປະຕູສູ່ພາຍນອກຂອງຈີນເປັນເວລາ 30 ກວ່າປີໄດ້ຮັບຜົນສໍາເລັດຢ່າງໃຫຍ່ຫລວງ, ປະເທດຈະເລີນຮຸ່ງເຮືອງ, ປະຊາຊົນອຸດົມຮັ່ງມີ. ງານກິລາໂອລິມປິກປັກກິ່ງບໍ່ພຽງແຕ່ແມ່ນງານລວມສູນຂອງນັກກິລາຂອງບັນນາປະເທດເທົ່ານັ້ນ, ຍັງແມ່ນເວທີລວມສູນປະມຸກລັດສາກົນອີກດ້ວຍ, ເປັນສັນຍາລັກປະເທດຈີນໄປສູ່ທົ່ວໂລກໄລຍະໃຫມ່ຢ່າງຮອບດ້ານ.



ໃນວັນທີ 8 ສິງຫາ, ທ່ານຫູຈິນທາວປະທານປະເທດຈີນພ້ອມດ້ວຍພັນລະຍາທ່ານນາງລີວຢົງຊິນຈັດງານລ້ຽງຮັບຮອງແຂກຜູ້ມີກຽດທີ່ມາຮ່ວມພິທີເປີດງານກິລາໂອລິມປິກປັກກິ່ງ

2008年8月8日，中国国家主席胡锦涛和夫人刘永清为出席北京奥运会的贵宾举行欢迎宴会　新华社 图



ວັນທີ7 ສິງຫາ, ທ່ານຫູຈິນທາວປະທານປະເທດຈີນພົບປະທ່ານຈູມມະລີ ໄຊຍາສອນປະທານປະເທດສ ປປ ລາວທີ່ມາເຂົ້າຮ່ວມພິທີເປີດງານກິລາໂອລິມປິກປັກກິ່ງທີ່ຫໍສະພາປະຊາຊົນປັກກິ່ງ

2008 年 8 月 7 日，中国国家主席胡锦涛在北京人民大会堂会见前来出席北京奥运会开幕式的老挝国家主席朱马利 · 赛雅贡 新华社 图

# ພະນະທ່ານຫູຈິນທາວປະທານປະເທດຈີນ ທ່ານອູປາງກົວປະທານສະພາຜູ້ແທນປະຊາຊົນທົ່ວປະເທດຕ່າງກໍພົບປະພະນະທ່ານຈູມມະລີ ໄຊຍະສອນປະທານປະເທດ ສ ປປ ລາວ

## 中国国家主席胡锦涛、全国人大常委会委员长吴邦国分别会见老挝国家主席朱马利 · 赛雅贡

中国国家主席胡锦涛、全国人大常委会委员长吴邦国在北京分别会见老挝国家主席朱马利 · 赛雅贡，热烈欢迎老挝国家主席朱马利 · 赛雅贡出席北京奥运会开幕式。

ວັນທີ7ສິງຫາ, ທ່ານຫູຈິນທາວປະທານປະເທດສ ປ ຈີນຕ່າງກໍ່ພົບປະຜູ້ນຳຕ່າງປະເທດຈຳນວນຫນຶ່ງເຊິ່ງມາເຂົ້າຮ່ວມພິທີເປີດສາກງານມະຫາກຳກິລາໂອລິມປິກປັກກິ່ງ. ທ່ານຫູຈິນທາວສະແດງຄວາມຍິນດີຕ້ອນຮັບຜູ້ນຳບັນດາປະເທດທີ່ມາຮ່ວມພິທີເປີດສາກງານມະຫາກຳກິລາໂອລິມປິກປັກກິ່ງຢ່າງສຸດອົກສຸດໃຈ. ແລະຂໍສະແດງຄວາມຂອບອົກຂອບໃຈຢ່າງສຸດອົກສຸດໃຈຕໍ່ການສະຫນັບສະຫນູນອັນປະເສີດຂອງບັນດາປະເທດແລະປະຊາຊົນສະຫນອງໃຫ້ແກ່ການກະກຽມແລະການຈັດງານກິລາໂອລິມປິກປັກກິ່ງຂອງຈີນ. ອວຍພອນນັກກິລາບັນດາປະເທດ ໄດ້ຮັບຜົນສຳເລັດຢ່າງຈົບງາມໃນການແຂ່ງຂັນກິລາໂອລິມປິກ.

ຜູ້ນຳບັນດາປະເທດທີ່ເຂົ້າຮ່ວມການພົບປະນັ້ນຕີລາສູງຕໍ່ວຽກງານທີ່ໄດ້ຮັບຜົນດີເດັ່ນຂອງຈີນເພື່ອຈັດງານກິລາໂອລິມປິກປັກກິ່ງ, ອວຍພອນແລະເຊື່ອຫມັ້ນໃຈຕໍ່ງານກິລາໂອລິມປິກປັກກິ່ງຈະໄດ້ຮັບຜົນສຳເລັດຢ່າງຈົບງາມ.

ທ່ານຫູຈິນທາວຕ່າງຫນ້າລັດຖະບານຈີນແລະປະຊາຊົນຈີນສະແດງຄວາມຂອບອົກຂອບໃຈນຳການສະຫນັບສະຫນູນແລະການຊ່ວຍເຫຼືອອັນປະເສີດຂອງລັດຖະບານແລະປະຊາຊົນບັນດາປະເທດສະຫນອງໃຫ້ແກ່ການກູ້ໄພຕ້ານແຜ່ນດິນໄຫວອະຫນາດໃຫຍ່ເວີນຊວນແຂວງເສຊວນຢ່າງສຸດອົກສຸດໃຈ.

ທ່ານຫູຈິນທາວກັບຜູ້ນຳປະເທດທີ່ກ່ຽວຂ້ອງນັ້ນໄດ້ແລກປ່ຽນຄວາມຄິດຄວາມເຫັນກ່ຽວກັບສາຍພົວພັນທະວິພາຄີແລະບັນຫາສາກົນແລະເຂດແຄ້ວນທີ່ສຳຄັນເຊິ່ງທັງສອງຝ່າຍມີຄວາມສົນໃຈນຳກັນ.

ເມື່ອເວລາທ່ານຫູຈິນທາວພົບປະທ່ານຈູມມະລີໄຊຍະສອນປະທານປະເທດສ ປປ ລາວ ເຊິ່ງມາເຂົ້າຮ່ວມພິທີເປີດສາກງານກິລາໂອລິມປິກປັກກິ່ງນັ້ນ,ທ່ານສະແດງວ່າ,ປະເທດຈີນກັບປະເທດລາວເປັນເພື່ອນບ້ານໃກ້ຄຽງທີ່ດີ,ເພື່ອນມິດສະຫາຍທີ່ດີ,ຄູ່ຮ່ວມມືທີ່ດີ.ປະເທດຈີນຍິນດີພ້ອມກັນພະຍາຍາມເສີມຂະຫຍາຍມິດຕະພາບທີ່ເປັນມູນເຊື້ອ,ຂະຫຍາຍການຮ່ວມມືກັນຕ່າງຝ່າຍຕ່າງມີຜົນປະໂຫຍດໄປທາງລວງເລິກ.ທ່ານຫູຈິນທາວຊີ້ອອກວ່າ,ການຮ່ວມມືເສດຖະກິດການຄ້າລະຫວ່າງຈີນ-ລາວຕ້ອງປະສານສົມທົບກັບແຜນແມ່ບົດພັດທະນາທັງສອງປະເທດ,ເອົາຍຸດທະສາດທັນຊັບພະຍາກອນເປັນທຶນຂອງລາວປະສານສົມທົບກັບຍຸດທະສາດ "ອອກໄປນອກ" ຂອງຈີນ,ເອົາຊັບພະຍາກອນ,ແຮງງານຂອງລາວປະສານສົມທົບກັບທຶນຮອນ,ເຕັກນິກແລະການຕະຫລາດຂອງຈີນ,ບັນລຸເຖິງທົດແທນທ່າແຮງເຊິ່ງກັນແລະກັນ,ຕ່າງຝ່າຍຕ່າງມີຜົນປະໂຫຍດແລະໄດ້ຮັບໄຊຊະນະຮ່ວມກັນປະກົດເປັນຈິງ.

ທ່ານຈູມມະລີສະແດງວ່າ,ສາຍພົວພັນລະຫວ່າງລາວ-ຈີນໄດ້ຮັບການຂະຫຍາຍຢ່າງຕັ້ງໜ້າຕໍ່ເນື່ອງກັນ,ຄວາມເຂົ້າໃຈກັນທີ່ຜູ້ນໍາທັງສອງປະເທດຕົກລົງກັນນັ້ນພວມໄດ້ຮັບການປະຕິບັດ,ທັງສອງຝ່າຍໃຫ້ການສະໜັບສະໜູນເຊິ່ງກັນແລະກັນແລະປະສານສົມທົບກັນໃນກິດຈະການສາກົນແລະເຂດແຄ້ວນ.ທ່ານຈູມມະລີສະແດງຄວາມຂອບອົກຂອບໃຈນໍາການສະໜັບສະໜູນແລະການຊ່ວຍເຫຼືອອັນປະເສີດທີ່ປະເທດຈີນສະໜອງໃຫ້ແກ່ການພັດທະນາເສດຖະກິດສັງຄົມຂອງລາວ.



ວັນທີ7 ສິງຫາ,ທ່ານອູປາງກົວປະທານສະພາຜູ້ແທນປະຊາຊົນທົ່ວປະເທດພົບປະທ່ານຈູມມະລີ ໄຊຍາສອນປະທານປະເທດສ ປປ ລາວທີ່ມາເຂົ້າຮ່ວມພິທີເປີດງານກິລາໂອລິມປິກປັກກິ່ງທີ່ຫໍສະພາປະຊາຊົນປັກກິ່ງ

8 月 7 日，全国人大常委会委员长吴邦国在北京人民大会堂会见前来参加北京奥运会开幕式和相关活动的老挝国家主席朱马利 · 赛雅贡　新华社 图



# ທ່ານລີເຄີຊຽງຮອງນາຍົກລັດຖະມົນຕີສ ປ ຈີນພົບປະທ່ານສົມສະຫວາດ ເລັ່ງສະຫວັດຮອງນາຍົກລັດຖະມົນຕີຜູ້ປະຈຳການລັດຖະບານລາວ

## 中国国务院副总理李克强会见老挝常务副总理宋沙瓦 · 凌沙瓦

8 月 9 日，中国国务院副总理李克强在北京人民大会堂会见了前来出席北京奥运会开幕式的老挝常务副总理宋沙瓦 · 凌沙瓦。

ວັນທີ 9 ສິງຫາ, ທ່ານລີເຄີຊຽງຮອງນາຍົກລັດຖະມົນຕີສປ ຈີນພົບປະທ່ານສົມສະຫວາດ ເລັ່ງສະຫວັດຮອງນາຍົກລັດຖະມົນຕີຜູ້ປະຈຳການລັດຖະບານລາວທີ່ມາເຂົ້າຮ່ວມພິທີເປີດສາກງານກິລາໂອລິມປິກປັກກິ່ງທີ່ຫໍສະພາປະຊາຊົນປັກກິ່ງ.



ທ່ານລີເຄີຊຽງຮອງນາຍົກລັດຖະມົນຕີຈີນພົບປະທ່ານສົມສະຫາວດ ເລັ່ງສະຫວັດຮອງນາຍົກລັດຖະມົນຕີຜູ້ປະຈຳການລັດຖະບານລາວທີ່ມາຮ່ວມພິທີເປີດງານກິລາໂອລິມປິກປັກກິ່ງທີ່ຫໍສະພາປະຊາຊົນປັກກິ່ງ

中国国务院副总理李克强在北京人民大会堂会见前来出席北京奥运会开幕式的老挝常务副总理宋沙瓦 · 凌沙瓦　新华社 图

# ທ່ານສົມສະຫວາດ ເລັ່ງສະຫວັດຮອງນາຍົກລັດຖະມົນຕີຜູ້ປະຈຳການລັດຖະບານລາວ ຍ້ອງຍໍສັນລະເສີນຢ່າງສູງຕໍ່ພິທີເປີດສາກງານກິລາໂອລິມປິກປັກກິ່ງ



## 老挝常务副总理宋沙瓦 · 凌沙瓦盛赞北京奥运会开幕式

8 月 9 日上午，老挝常务副总理宋沙瓦 · 凌沙瓦一行与中国国家体育总局副局长王钧进行了友好的交谈并签署了中老体育合作谅解备忘录。老挝常务副总理宋沙瓦 · 凌沙瓦一行盛赞北京奥运会开幕式。



ທ່ານສົມສະຫວາດ ເລັ່ງສະຫວັດຮອງນາຍົກລັດຖະມົນຕີຜູ້ປະຈຳການລັດຖະບານລາວດຳເນີນການເຈລະຈາຢ່າງມິດຕະພາບໄມ້ຕີຈິດກັບທ່ານຫວາງຈູນຮອງຫົວໜ້າກົມໃຫຍ່ກິລາແຫ່ງຊາດຈີນ

老挝常务副总理宋沙瓦 · 凌沙瓦与中国国家体育总局副局长王钧进行友好会谈

傅　珊　摄

# ປະເທດຈີນທີ່ເປີດປະຕູ ແມ່ນກິລາໂອລິມປິກຍິ່ງມີ



ເຂດໃຈກາງງານກິລາໂອລິມປິກທີ່ມອງທາງອາກາດ
鸟瞰北京奥林匹克中心区　新华社 图

ຕອນເຊົ້າວັນທີ 9ສິງຫາ, ທ່ານສົມສະຫວາດ ເລັ່ງສະຫວັດ ຮອງນາຍົກລັດຖະມົນຕີຜູ້ປະຈຳການລັດຖະບານລາວພ້ອມດ້ວຍຄະນະໄດ້ດຳເນີນການເຈລະຈາກັນຢ່າງໄມ້ຕີຈິດກັບທ່ານຫວາງຈູນ ຮອງຫົວໜ້າກົມໃຫຍ່ກິລາແຫ່ງຊາດຈີນແລະລົງເຊັນບົດບັນທຶກຊ່ວຍຈຳເຂົ້າໃຈກັນໃນການຮ່ວມມືດ້ານການກິລາລະຫວ່າງຈີນ ລາວ

ໄລຍະເຂົ້າຮ່ວມພິທີງານກິລາໂອລິມປິກປັກກິ່ງ, ທ່ານສົມສະຫວາດເລັ່ງສະຫວັດຮອງນາຍົກລັດຖະມົນຕີຜູ້ປະຈຳການລັດຖະບານລາວແລະທ່ານພູທອງ ແສງອາຄົມປະທານຄະນະກຳມະການກິລາແຫ່ງຊາວລາວທັງເປັນປະທານຄະນະກຳມະການງານກິລາໂອລິມປິກລາວ,ຍ້ອງຍໍສັນລະເສີນຢ່າງສູງຕໍ່ພິທີເປີກສາກງານກິລາໂອລິມປິກປັກກິ່ງ.

ທ່ານສົມສະຫວາດ ເລັ່ງສະຫວັດສະແດງວ່າ,ການສະແດງໃນພິທີເປີດສາກງານກິລາໂອລິມປິກປັກກິ່ງສະແດງເຖິງປະຊາຊົນຈີນທີ່ຮັກຫອມສັນຕິພາບ,ນັບຖືຄວາມຖືກຕ້ອງປອງດອງແລະຢູ່ຮ່ວມກັນໂດຍຄວາມກົມກຽວກັນຢູ່ຕະຫລອດມາ.ທ່ານເຊື່ອໝັ້ນວ່າ,ຜ່ານງານກິລາໂອລິມປິກຄັ້ງນີ້,ຈະມີຄົນເປັນຈຳນວນຫລວງຫຼາຍເຂົ້າໃຈຈີນແລະສະໜັບສະໜູນຈີນນັບມື້ນັບຫລາຍຍິ່ງຂຶ້ນ.

ທ່ານພູທອງ ແສງອາຄົມສະແດງວ່າ,ການສະແດງໃນພິທີເປີດສາກເອົາປະເທດຈີນບູຮານແລະຍຸກສະໄໝປັດຈຸບັນສະແດງຢູ່ຕໍ່ໜ້າຊາວໂລກຢ່າງຈົບງາມ. ໂດຍສະເພາະແມ່ນພາບວິວທີ່ຜູ້ຊົມທົ່ວສະ ໜາມຟ້ອນດ້ວຍສອງແຂນແບບນົກກາງແກສັນຕິພາບບິນຂຶ້ນໄດ້ປະທັບໃຈຢ່າງເລິກເຊິ່ງແກ່ທ່ານ,ນອກນັ້ນ,ພິທີໄຕ້ທອນໄຟສະເທືອນໃຈຄົນ,ເຕັມໄປດ້ວຍນ້ຳໃຈໂອລິມປິກ.

## 开放的中国让奥运更精彩

举办一届“ 有特色、高水平 ”的奥运会，这是中国对国际社会的郑重承诺。为此，北京奥运会为媒体提供优质、便捷的服务，满足媒体采访报道奥运会的需求。安排好、服务好庞大的采访队伍，是一大挑战，但更是一次展示中国改革开放新形象的良好机遇。三十年的改革开放发展进步，让中国面对世界的镜头更加自信。

ການຈັດງານກິລາໂອລິມປິກທີ່ມີສີສັນພິເສດແລະລະດັບສູງນັ້ນແມ່ນຄຳໝັ້ນສັນຍາເປັນທາງການຂອງຈີນຕໍ່ປະຊາຄົມໂລກ. ດັ່ງນັ້ນ,ງານກິລາໂອລິມປິກຈະສະໜອງບໍລິການທີ່ມີຄຸນນະພາບແລະຄວາມສະດວກອັນດີໃຫ້ແກ່ບັນດາສື່ມວນຊົນເພື່ອຕອບສະໜອງຄວາມຕ້ອງການຂອງບັນດາສື່ມວນຊົນໃນການສຳພາດຕໍ່ເລື່ອງງານກິລາໂອລິມປິກ.

ການວາງຂໍ້ກຳນົດການສຳພາດຂ່າວຕໍ່ນັກຂ່າວຕ່າງປະເທດໃນໄລຍະການກະກຽມແລະດຳເນີນງານກິລາໂອລິມປິກ,ການ

# ສູ່ພາຍນອກຈະພາໃຫ້ ຄວາມສະຫງ່າງາມ



ປະກາດໃຊ້ປຶ້ມຄູ່ມືກ່ຽວກັບການສຳພາດຂ່າວຂອງນັກຂ່າວຕ່າງປະເທດ, ການດັດແປງຫລືລົບລ້າງຂໍ້ກຳນົດຈຳນວນຫນຶ່ງທີ່ບໍ່ຖືກຊຸກັບປະເພນີງານໂອລິມປິກ, ການກໍ່ສ້າງສູນການຂ່າວສາມແຫ່ງຊຶ່ງສູນການຂ່າວງານໂອລິມປິກປັກກິ່ງ, ສູນການຂ່າວງານໂອລິມປິກຄົນພິການປັກກິ່ງແລະສູນການຂ່າວຫຼັກ.....ລະບອບອັນເປີດເຜີຍ, ບໍລິການອັນຄົບຊຸດ, ເຕັກນິກອັນຊຳນານແລະອຸປະກອນທັນສະໄຫມນັ້ນລ້ວນແຕ່ເຮັດໃຫ້ນັກຂ່າວຂອງບັນດາສຳນັກຂ່າວສານຕ່າງປະເທດມີຄວາມສະດວກແລະປະສິດທິຜົນສູງໃນວຽກງານຕ່າງໆ

ໃນງານກິລາໂອລິມປິກປັກກິ່ງຄັ້ງນີ້ລວມມີນັກຂ່າວຕ່າງປະເທດປະມານ50ພັນກວ່າຄົນ, ທຽບໃສ່ກັບງານກິລາໂອລິມປິກອາແຕນຄັ້ງທີ່ແລ້ວມີນັກຂ່າວ21ພັນ500ຄົນນັ້ນໄດ້ເພີ່ມຂຶ້ນປະມານ1ເທົ່າ. ການຈັດວາງແລະຮັບໃຊ້ຖັນແຖວນັກຂ່າວຈຳນວນຫລວງຫລາຍເປັນການທ້າທາຍຂອງປະເທດຈີນ, ທັງເປັນກາລະໂອກາດອັນດີງາມຂອງປະເທດຈີນ, ຍ້ອນເຫດວ່າງານໂອລິມປິກຄັ້ງນີ້ສາມາດສະແດງເຖິງພາບພົດໃຫມ່ຂອງປະເທດຈີນໃນການປະຕິຮູບ



ນ້ຳພຸດົນຕີສະຫນາມແຂ່ງຂັນຍິງປືນ
射击赛场的音乐喷泉　新华社 图



ຜູ້ອາສາສະໝັກສື່ມວນຊົນງານກິລາໂອລິມປິກໄດ້ຮັບ " ຄູ່ມືເຮັດວຽກ "
奥运媒体运行志愿者获赠 " 工作手册 " 新华社 图

ແລະເປີດປະຕູສູ່ພາຍນອກ. ຜ່ານການພັດທະນາໃນການປະຕິຮູບແລະເປີດປະຕູສູ່ພາຍນອກເປັນເວລາ30ປີ, ເຮັດໃຫ້ປະເທດຈີນຍິ່ງມີຄວາມໝັ້ນເຊື່ອໃຈຢູ່ໃນສາຍຕາຂອງປະຊາກອນໂລກ

ກ່ອນອື່ນ, ປະຊາທິປະໄຕຂອງປະເທດຈີນໄດ້ເລັ່ງລັດພັດທະນາໃຫ້ໄວຂຶ້ນຕື່ມອີກກ້າວໜຶ່ງ. ຜ່ານການປະຕິຮູບແລະເປີດປະຕູສູ່ພາຍນອກເປັນເວລາ30ປີມານີ້, ປະເທດຈີນບໍ່ພຽງແຕ່ໄດ້ຮັບຜົນສຳເລັດທີ່ທົ່ວໂລກສົ່ງສາຍຕາເບິ່ງໃນການພັດທະນາເສດຖະກິດ, ເສດຖະກິດແຫ່ງຊາດຂອງຈີນໃກ້ຊິລົ້ມລະລາຍໄປ, ແຕ່ປະຈຸບັນນີ້, ຍອດປະລິທານເສດຖະກິດຂອງປະເທດຈີນໄດ້ເພີ່ມສູງຂຶ້ນເປັນອັນດັບທີ4ຂອງໂລກ. ພ້ອມກັນນັ້ນ, ການກໍ່ສ້າງປະຊາທິປະໄຕການເມືອງຂອງປະເທດຈີນໄດ້ກ້າວໜ້າຢ່າງບໍ່ຢຸດຢັ້ງ. "ຮັບປະກັນໃຫ້ປະຊາຊົນມີສິດຮັບຮູ້, ສິດສ່ວນຮ່ວມ, ສິດປະກອບຄຳເຫັນແລະສິດກວດການ", ສິດດັ່ງກ່າວໄດ້ຂຽນເຂົ້າໃນເອກະສານການເມືອງຂອງພັກຢ່າງຊັດແຈ້ງ, ປະຊາຊົນມີຄວາມຈູບຈ້າວຫ້າວຫັນໃນການເຂົ້າຮ່ວມວຽກງານການເມືອງ, ຄວາມສາມາດໄດ້ນັບມື້ນັບເພີ່ມຂຶ້ນ. ປະຊາຊົນສາມັນມັກສ່ອງແສງສະທ້ອນແລະປະກອບຄຳເຫັນຢູ່ເຄືອຂ່າຍອິນເຕີແນດ, ເຈົ້າໜ້າທີ່ທຸກຂັ້ນຮັບຟັງສຽງປະຊາຊົນແລະນຳໃຊ້ສະຕິປັນຍາຂອງປະຊາຊົນຢູ່ອິນເຕີແນດ, ສະພາບນີ້ນັບມື້ນັບກາຍເປັນສະພາບທົ່ວໄປໃນຊີວິດການເມືອງຂອງປະເທດຈີນ.

ຖັດທາ, ສັງຄົມຈີນຍິ່ງມີຄວາມໂປ່ງໃສກວ່າເກົ່າ. ແຕ່ປີ2003ເປັນຕົ້ນມາລັດຖະບານຈີນໄດ້ສ້າງລະບອບໂຄສົກຖະແຫຼງຂ່າວຢ່າງຮອບດ້ານ, ປັດຈຸບັນນີ້, ນອກຈາກລັດຖະບານສູນກາງ. ກະຊວງແລະກຳແພງນະຄອນແລະແຂວງໄດ້ສາງຕັ້ງລະບອບໂຄສົກຖະແຫຼງຂ່າວອັນຄົບຖ້ວນແລ້ວນັ້ນ, ອົງການຣາກຖານທີ່ຂື້ນກັບແຂວງຈຳນວນທີ່ງກໍ່ໄດ້ສ້າງຕັ້ງລະບອບໂຄສົກຖະແຫຼງຂ່າວຕໍ່ນັກຂ່າວແລ້ວ. ວັນທີ1ເດືອນ5ປີ2008, ລັດຖະບານຈີນໄດ້ເລີ່ມປະຕິບັດ "ບັນຍັດກ່ຽວກັບການເປີດເຜີຍຂໍ້ມູນຂ່າວສານຂອງລັດຖະບານ" ຢ່າງເປັນທາງການ. ຫລັງຈາກແຜ່ນດິນໄຫວເມືອງເວິນຊວນ, ລັດຖະບານຈີນໄດ້ເປີດເຜີຍຂໍ້ທູນຂ່າວສານທີ່

ກ່ຽວກັບການກູ້ໄພແຜ່ນດິນໄຫວທີ່ຄວາມໂປ່ງໃສຢ່າງສູງ, ໄດ້ຮັບການຕີລາຄາຢ່າງສູງຈາກທົ່ວໂລກ. ໃນໄລຍະງານໂອລິມປິກ, ໂຄສົກຖະແຫລງຂ່າວງານໂອລິມປິກສີ່ຄົນທີ່ອອກໜ້າແລ້ວນັ້ນຈະຈັດງານສຳພາດຂ່າວເປັນປະຈຳເພື່ອປະກາດຂ່າວສານງານໂອລິມປິກຢ່າງຖືກຕ້ອງແລະທັນເວລາ.

ດ້ານທີສາມ, "ໂອລິມປິກສີຂຽວ, ໂອລິມປິກເຕັກນິກວິທະຍາສາດ, ໂອລິມປິກມະນຸດສາດ", ຈິດສຳນຶກທັງສາມນີ້ໄດ້ເສີມຂະຫຍາຍຢ່າງເຕັມສ່ວນ. ເຂົ້າໃນການກໍ່ສ້າງສະໜາມກິລາແລະຫໍກິລາ, ການສະສາງສະພາບແວດລ້ອມ. ການສົ່ງຕໍ່ທອນໄຟໂອລິມປິກຂຶ້ນຈອມພູໂຈມລຸງມາຢ່າງສຳເລັດ, ຈິດສຳນຶກທັງສາທກໍ່ໄດ້ເຊື່ອມເຂົ້າສູ່ທຸກຕ່ອງຂໍ້ຂອງວຽກງານກະກຽມ. ຄຳໝັ້ນສັນຍາຂອງຈີນຕໍ່ໂລກນັ້ນໄດ້ບັນລຸຜົນເປັນຈິງເປັນລຳດັບ. ຄະນະກຳມະການໂອລິມປິກສາກົນໄດ້ຍ້ອງຍໍວ່າຄຸນນະພາບວຽກງານການກະກຽມງານໂອລິມປິກແມ່ນ "ມາດຕະຖານຫລຽນຄຳ". ປະເທດຈີນມີຄວາມສາມາດແລະຄວາມໝັ້ນເຊື່ອໃຈຈັດງານກິລາໂອລິມປິກຄັ້ງນີ້ໃຫ້ສຳເລັດຜົນ, "ໂລກດຽວກັນ, ຄວາມຝັນດຽວກັນ", ຄົງຈະກາຍເປັນຄວາມຫວັງດຽວກັນຂອງມວນມະນຸດ.

ງານກິລາໂອລິມປິກປັກກິ່ງປີ2008ເປັນງານມະຫາກຳຂອງປະເທດຈີນ, ທັງເປັນເລື່ອງມະຫາກຳຂອງໂລກ! ໃນໄລຍະງານໂອລິມປິກ, ກ້ອງຖ່າຍແລະພາບຮູບອັນສວຍງາທຂອງນັກຂ່າວຈະບັນທຶກແລະຢັ້ງຢືນປະຫວັດສາດຕອນນີ້ວ່າະປະເທດຈີນທີ່ເຄີຍເປັນປະເທດບູຮານຫລ້າສະໃໝແລະປິດປະຕູຢູ່ພາກຕາເວັນອອກນັ້ນພວມນັບມື້ນັບກາຍເປັນປະເທດທີ່ມີຄວາມກົມກຽວ, ເປີດກ້ວາງແລະອະລິຍະທຳ.



ນັກຊ່ຽວຊານສື່ມວນຊົນຕ່າງປະເທດຜູ້ໜຶ່ງເຮັດການທຳນຽມຈົດທະບຽນເຂົ້າພັກຢູ່ບ້ານສື່ມວນຊົນ
一位外国媒体专家在媒体村办理入住手续　新华社 图



ພາບໃນຫ້ອງອາຫານໃນໝູ່ບ້ານກິລາໂອລິມປິກປັກກິ່ງ
北京奥运村餐厅内景　新华社 图


ນັກຂ່າວຈີນແລະຕ່າງປະເທດຮ້ອຍກວ່າຄົນໄດ້ປະສົບການກວດກາຄວາມປອດໄພໃນງານກິລາໂອລິມປິກດ້ວຍຕົນເອງ
百余中外记者亲历“ 奥运安保 ” 新华社 图



ຖານທີ່ໝັ້ນແຂ່ງຂັນເຮືອໃບກິລາໂອລິມປິກຊິນຕາວ
青岛奥帆赛基地　苏雯雯 摄

**六个协办城市盛装迎奥运**

香港、青岛、天津、上海、沈阳、秦皇岛这 6 个北京奥运会协办城市，经过精心筹备，已经发出了共同的声音——奥运，我们准备好了！

# 6ຕົວເມືອງປະສານງານຈັດງານກິລາໂອລິມປິກປະດັບປະດາອັນສວຍງາມຢ່າງຄຶກຄື້ນເພື່ອຕ້ອນຮັບງານມະຫາກຳກິລາໂອລິມປິກ



ສູນກິລາໂອລິມປິກທຽນສິນ 天津奥林匹克中心　CFP 图

ຕົວເມືອງຮົງກົງ, ຊິນຕາວ, ທຽນສິນ, ຊຽງໄຮ, ເສິນຢາງ, ຊິນຮວງຕາວ6ຕົວເມືອງເຊິ່ງເປັນຕົວເມືອງທີ່ປະສາພງານຈັດງານກິລາໂອລິມປິກນັ້ນ, ໂດຍຜ່ານການກະກຽມລະອຽດລະອໍ, ໄດ້ອອກສຽງຮ່ວມກັນສຽງດຽວ--ງານກິລາໂອລິມປິກ, ພວກເຮົາກຽມພ້ອມລຽບຮ້ອຍດີແລ້ວ!

## ຄຸນນະພາບສະໜາມແລະຫໍກິລາທີ່ເປັນໜຶ່ງ ເພື່ອຕ້ອນຮັບແຂກຜູ້ມີກຽດ

ງານມະຫາກຳກິລາໂອລິມປິກປັກກິ່ງທີ່ຈະເປີດສາກໃນວັນທີ 8 ເດືອນ 8 ນີ້, ນອກຈາກການແຂ່ງຂັນສ່ວນຫລາຍຈັດຂຶ້ນຢູ່ປັກກິ່ງ, ການແຂ່ງມ້າ, ແຂ່ງເຮືອໃບແລະການແຂ່ງບານເຕະຕ່າງກໍຈັດຂຶ້ນຢູ່ຮົງກົງ, ຊິນຕາວ, ທຽນສິນ, ຊຽງໄຮ, ເສິນຢາງແລະຊິນຮວງຕາວເປັນຕົ້ນ. ໜ່າງມໍ່ໆປີມານີ້, 6 ຕົວເມືອງດັ່ງກ່າວນີ້ໄດ້ດຳເນີນການກໍ່ສ້າງໂຄງລ່າງພື້ນຖານໃຫ້ຄົບຖ້ວນສົມບູນຢ່າງຕໍ່ເນື່ອງກັນ, ໄດ້ສະແດງໃຫ້ເຫັນສະໜາມແລະຫໍກິລາແຂ່ງຂັນໂອລິມປິກທີ່ທັນສະໄໝເປັນຫລັງເປັນຫລັງອອກມາຕໍ່ທົ່ວໂລກ.

ຈັດການແຂ່ງຂັນມ້າໂອລິມປິກແຕ່ວັນທີ 9 ເດືອນ 8 ຫາວັນທີ 21 ທີ່ຮົງກົງເຂດພິເສດປົກຄອງຕົນເອງ. ທ່ານລິນຫອນກວາງປະທານບໍລິສັດບໍລິຫານ(ຮົງກົງ)ແຂ່ງມ້າງານກິລາໂອລິມປິກຄັ້ງທີ 29 ແນະນຳວ່າ, ຮົງກົງໃຊ້ເວລາສອງປີເຄິ່ງໄດ້ສ້າງສຳເລັດສະໜາມແລະຫໍແຂ່ງຂັນທີ່ມີລະດັບສູງສອງແຫ່ງ, ລວມທັງຄອກມ້າທີ່ມີແອແລະປ້ອງກັນສິ່ງແວດລ້ອມ, ຄຸນນະພາບສະໜາມຊາຍ



ການແຂ່ງມ້າຮົງກົງໄດ້ກຽມພ້ອມລຽບຮ້ອຍດີແລ້ວ
香港马术比赛准备就绪　CFP 图

ແຂ່ງຂັນທີ່ເປັນໜຶ່ງ, ຍັງມີລະບົບລະບາຍນ້ຳຂອງທາງແຂ່ງຂັນທາງໄກທີ່ຄົບຖ້ວນສົມບູນພ້ອມ, ໂຕມ້າທີ່ເຂົ້າຮ່ວມການແຂ່ງຂັນນັ້ນ, ຈະເຂົ້າພັກຢູ່ໃນ "ຄອກມ້າສະຖຽນທີ່ເປັນດາວ", ອຸນຫະພູມຮັກສາໄວ້23°C. ເພື່ອຮັບປະກັນໂຕມ້າມີຄວາມປອດໄພແລະສະໜຸກສະບາຍ.

ສູນແຂ່ງຂັນເຮືອໃບຂອງງານກິລາໂອລິມປິກຊິນຕາວຈະກຳເນີດຫລຽນຄຳແຂ່ງຂັນເຮືອໃບ 11 ຫລຽນ, ຍອດມູນຄ່າລົງທຶນກໍ່ສ້າງສູນແຂ່ງຂັນນີ້ 3,28 ຕື້ຢວນຈີນກວມເນື້ອທີ່ 45 ເຮັກຕາ, ອົງເຂດນ້ຳແຂ່ງຂັນປະມານ 50 ກິໂລແມັດມົນທົນ, ມີທີມແຂ່ງຂັນເຮືອໃບ 47 ປະເທດແລະເຂດແຄວນໄດ້ມາຝຶກຊ້ອມຢູ່ທີ່ນີ້ເປັນລຳດັບ.

ສະໜາມແຂ່ງຂັນຫຼັກແລະສະໜາມແລະຫໍຝຶກຊ້ອມຂອງ





ສະໜາມກິລາຂອງສູນກິລາໂອລິມປິກຊິນຮວງຕາວໄດ້ກຽມພ້ອມລຽບຮ້ອຍດີໝົດ
秦皇岛奥体中心体育场全部准备就绪　CFP 图

ຕົວເມືອງທຽນສິນ, ຊຽງໄຮ, ເສິນຢາງ, ຊິນຮວງຕາວເຊິ່ງເປັນຕົວເມືອງປະສານງານຈັດງານ ແຂ່ງຂັນເຕະບານໂອລິມປິກນັ້ນ, ລ້ວນແຕ່ຖືກມາດຖານທີ່ຈັດງານກິລາໂອລິມປິກໄດ້ໝົດ. ສະໜາມກິລາຊຽງໄຮໄດ້ດຳເນີນການດັດສ້າງໃຫ້ດີຂຶ້ນ. ສະໜາມກິລາວູລິເຮີຂອງສູນກິລາໂອລິມປິກເສິນຢາງທີ່ສາມາດບັນຈຸໄດ້ 60 ພັນຄົນກໍ່ສ້າງໃໝ່ໄດ້ສຳເລັດແຕ່ເດືອນ 7 ປີກາຍນີ້, ໄດ້ນາມມະຍົດ "ມຸງກຸດມະນີ". ຂຸມຂົນຖືສະໜາມແລະຫໍກິລາດັ່ງກ່າວນີ້ເປັນການສະແດງຄວາມສະຫງ່າອົງອາດຂອງງານກິລາໂອລິມປິກທີ່ສວຍສົດງົດງາມ.

ເພື່ອບັນລຸເຖິງມາດຖານຂອງງານກິລາໂອລິມປິກ, ບັນດາຕົວເມືອງທີ່ປະສານງານຈັດງານໂອລິມປິກນັ້ນ, ຍັງຮັບພະລາຈັດການແຂ່ງຂັນສາກົນເປັນລະບົບໜຶ່ງ, ດຳເນີນການວັດແທກສະໜາມແລະຫໍກິລາຢ່າງຮອບດ້ານ, ກວດເບິ່ງຈຸດບົກພ່ອງແລະຄົງຄ້າງທຸກດ້ານ, ເພື່ອສະໜອງບໍລິການຍິ່ງດີກວ່າເກົ່າແກ່ງານກິລາໂອລິມປິກ.

## ບໍລິການທີ່ຄົບກ້ອນບໍລິບູນ, ກຽມພ້ອມທຸກເມື່ອ ທຸກເວລາຮັບເອົາການກວດສອບ

"ງານກິລາໂອລິມປິກທີ່ສຸກສັນ" ແມ່ນເປົ້າໝາຍທີ່ສຳຄັນຂອງງານກິລາໂອລິມປິກປັກກິ່ງ, 6 ຕົວເມືອງທີ່ປະສານງານຈັດງານກິລາໂອລິມປິກໄດ້ວາງແຜນປ້ອງກັນຄວາມປອດໄພຢ່າງລະອຽດໜາແໜ້ນ, ທຸກຕົວເມືອງກໍໄດ້ຈັດສັນກຳລັງປ້ອງກັນຄວາມປອດໄພຢ່າງເໝາະສົມ, ໄດ້ເປີດການຊ້ອມຮົບຕົວຈິງຫລາຍຄັ້ງ, ເພື່ອຮັບປະກັນດຳເນີນການແຂ່ງຂັນຢ່າງສະດວກໂດຍຄວາມປອດໄພ. ບັນລຸເຖິງເປົ້າໝາຍ "ງານກິລາໂອລິມປິກທີ່ສຸກສັນ" ປາກົດເປັນຈິງ.

ຕົວເມືອງຊິນຕາວໄດ້ຈັດວາງກຳລັງປ້ອງກັນຄວາມປອດໄພແບບສາມມິຕິດ້ານທາງບົກ, ທາງນ້ຳ, ທາງອາກາດແລະທາງໃຕ້ນ້ຳຢູ່ໃນອົງເຂດແຂ່ງຂັນ, ເມືອງຊຽງໄຮປະຕິບັດຕາມການຕິດຕາມຄວບຄຸມແບບສາມມິຕິທີ່ສະໜາມແລະຫໍແຂ່ງຂັນແລະທີ່ພັກເຊົາຂອງນັກກິລາຕາມຫຼັກການ "ຕິດຕາມຄວບຄຸມຕາມເຂດ

ແຄວນທີ່ເປັນຈຸດສຸມ "ຕົວເມືອງເສີນຢາງເຊັນບົດສັນຍາຮັບຜິດຊອບທຸກ ໆຂັ້ນ, ດຳເນີນການຊ້ອມຮົບເພື່ອຮັບມືສຸກເສີນ, ຫ້າມບໍ່ໃຫ້ເກີດກໍລະນີກໍ່ການຮ້າຍແລະກໍລະນີປັ່ນປ່ວນລັກສະນະມອນຊົນຢ່າງເດັດຂາດ. ຄວາມປອດໄພທາງອາຫານຂາດເຂີນບໍ່ໄດ້. ຢູ່ເຂດແຂ່ງຂັນທຽນສິນແມ່ນຫລາຍອົງການຄື: ພະແນກກະສິກຳ, ສາທາລະນະສຸກ, ຕິດຕາມຄຸ້ມຄອງອາຫານແລະການຢາ, ກວດການຄຸນນະພາບເຕັກນິກ, ແບ່ງວຽກປະສານງານເພື່ອຮັບຜິດຊອບວຽກງານຂອງໃຜລາວ, ດຳເນີນການຕິດຕາມກວດກາແຕ່ແຫຼ່ງທີ່ມາຂອງອາຫານແລະວັດຖຸດິບເຊິ່ງສະໜອງໃຫ້ການແຂ່ງຂັນ. ຢູ່ເຂດເມືອງຊຽງໄຮໄດ້ຈັດຕັ້ງພະແນກຮັບປະກັນຄວາມປອດໄພທາງອາຫານແລະການຢາ, ດຳເນີນການຕິດຕາມຄວບຄຸມອາຫານແລະຜັກທັງໝົດແຕ່ໄຮ່ນາເຖິງພາເຂົ້າ, ດຳເນີນການຕິດຕາມກວດກາປະຈຳໂຮງງານທົ່ວທັງໄລຍະຜ່ານຢ່າງບໍ່ຂາດໄລຍະເພື່ອຮັບປະກັນອາຫານມີຄວາມປອດໄພ, ສາມາດຄວບຄຸມໄດ້.

ວຽກງານຕ້ອນຮັບແຂກຂອງໂຮງແຮມ, ການຮັບປະກັນປິ່ນປົວພະຍາດ, ການບໍລິການຂອງຜູ້ອາສາສະໝັກ, ການຮັບປະກັນຄົມມະນາຄົມ, ການບໍລິການດິນຟ້າອາກາດທຸກໆຕ່ອງຂໍ້ກໍໄດ້ສະແດງຄວາມພະຍາຍາມປະກອບສ່ວນຂອງຕົວເມືອງດັ່ງກ່າວນີ້. ຖະໜົນຫົນທາງບໍລິເວນສະໜາມແລະຫໍແຂ່ງຂັນຂອງຊິນຮວງຕາວໄດ້ປະຕິບັດການເດີນລົດຕາມເລກຄູ່ເລກຄີກ, ມີຜູ້ອາສາສະໝັກ 2200 ກວ່າຄົນເຮັດວຽກຢູ່ໃນສະໜາມແລະຫໍກິລາ. ນອກຈາກນັ້ນ, ຍັງມີຜູ້ອາສາສະໝັກຕົວເມືອງເກືອບ 1 ແສນຄົນແຈກຢາຍຢູ່ບ່ອນຕ່າງໆຂອງຕົວເມືອງ. ເຂດພິເສດປົກຄອງຕົນເອງຮົງກົງບົ່ງໄວ້ໂຮງໝໍໂອລິມປິກ3ແຫ່ງ, ມີທ່ານໝໍແພດແລະນາງພະຍາບານ 1300 ກວ່າຄົນສະໜອງບໍລິການປິ່ນປົວທີ່ມີລະດັບສູງ ໂດຍບໍ່ເສຍຄ່າໃຫ້ແກ່ຜູ້ມີສ່ວນຮ່ວມງານກິລາໂອລິມປິກ.

ບັນດາຕົວເມືອງດັ່ງກ່າວນີ້ລ້ວນແຕ່ຍິນດີຕ້ອນຮັບແຂກຜູ້ມີກຽດທີ່ມາຈາກທາງໄກດ້ວຍບໍລິການຄົບຖ້ວນບໍລິບູນ 6ຕົວເມືອງຕິດພັນທຸງ 5 ວົງໂອລິມປິກ, ຈັດງານມະຫາກຳກິລາໂອລິມປິກທີ່ມີ "ສີສັນພິເສດແລະລະດັບສູງ" ຄັ້ງໜຶ່ງ, ຕົວເມືອງຮົງກົງ, ຊິນຕາວ, ທຽນສິນ, ຊຽງໄຮ, ເສີນຢາງ, ຊິນຮວງຕາວ 6 ຕົວເມືອງໄດ້ຜ່ານການກະກຽມທີ່ເຄັ່ງຮ້ອນເປັນເວລາຫລາຍປີ, ພ້ອມກັນກັບປັກກິ່ງອ້າແຂນຍິນດີຕ້ອນຮັບນັກກິລາແລະນັກທ່ອງທ່ຽວທີ່ຈະມາເຖິງ.


ຊຽງໄຮໄດ້ເພີ່ມກຳລັງແຮງດຳເນີນການຕິດຕາມກວດກາການຜະລິດອາຫານຂອງງານກິລາໂອລິມປິກ
上海加大奥运食品生产监管检查力度　新华社 图


ເສີນຢາງເຕັມໄປດ້ວຍບັນຍາກາດອັນຟົດຟື້ນດ້ານງານກິລາໂອລິມປິກ
沈阳奥运氛围浓　新华社 图


ໝູ່ບ້ານງານກິລາໂອລິມປິກຮົງກົງ
香港奥运村　新华社 图

### 北京进入“奥运时间”空气质量达标

7 月 20 日，北京进入“奥运时间”。随着百余家重点污染企业暂时停产，机动车采取“单双号”限行，为确保奥运期间空气质量良好，开始全面实施相应的减排措施，北京市大气污染的治理效果颇为明显，7 月北京市空气质量好于去年同期。相关人士表示，尽管一些强制性管控措施在奥运后将中止，但北京 10 年来实施的一系列综合措施将是长效的，将为改善北京空气质量发挥长期作用。据悉，这样的空气质量完全适合运动员比赛。

ວັນທີ20ກໍລະກົດ,ປັກກິ່ງໄດ້ເຂົ້າສູ່"ຊ່ວງໄລຍະເວລາງານກິລາໂອລິມປິກ"ຄຽງຄູ່ກັບວິສາຫະກິດທີ່ມີມົນລະພິດເຊິ່ງເປັນຈຸດສຸມເປັນຈຳນວນຮ້ອຍກວ່າແຫ່ງໄດ້ໂຈະການຜະລິດຊົ່ວຄາວ,ພາຫະນະລົດຊະນິດຕ່າງໆນຳໃຊ້ວິທີການຈຳກັດເວລາເດີນລົດຕາມ"ເລກຄູ່ເລກຄີກຂອງປ້າຍລົດ"ເພື່ອຮັບປະກັນຄຸນນະພາບຂອງອາກາດດີເລີດໃນຊ່ວງໄລຍະເວລາງານກິລາໂອລິມປິກ,ແລະປະຕິບັດເລີ່ມໃຊ້ມາດຕາການຫລຸດຜ່ອນການລະບາຍມົນລະພິດຢ່າງຮອບດ້ານ.ການນຳໃຊ້ມາດຕາການສະສາງມົນລະພິດອາກາດໃນນະຄອນປັກກິ່ງໄດ້ຮັບໝາກຜົນຢ່າງເດັ່ນຊັດ,ຄຸນນະພາບຂອງອາກາດນະຄອນປັກກິ່ງໃນເດືອນ7ດີກວ່າເວລາດຽວກັນຂອງປີທີ່ຜ່ານມາ.

ບຸກຄົນທີ່ກ່ຽວຂ້ອງສະແດງວ່າ,ເຖິງແມ່ນວ່າ,ຈະຢຸດຕິການນຳໃຊ້ມາດຕາການຄຸ້ມຄອງແລະຄວບຄຸມແບບບັງຄັບບັງຢ່າງ



# ປັກກິ່ງເຂົ້າສູ່"ຊ່ວງໄລຍະເວລາງານກິລາໂອລິມປິກ" ຄຸນນະພາບຂອງອາກາດດີກົງຕາມເກນ

ຫລັງປິດງານກິລາໂອລິມປິກ, ແຕ່ວ່າ, ມາດຕາການສັງລວມເປັນລະບົບທີ່ໄດ້ປະຕິບັດຢູ່ໃນປັກກິ່ງເປັນເວລາ10ປີ, ມີຜົນຍືນຍົງ, ຈະເກີດມີບົດບາດຍາວນານເພື່ອດັດສົມຄຸນນະພາບອາກາດຂອງປັກກິ່ງໃຫ້ດີຂື້ນ. ຕາມຂ່າວໃຫ້ຮູ້ວ່າ, ຄຸນນະພາບຂອງອາກາດແບບນີ້ເຫມາະສົມກັບການແຂ່ງຂັນຂອງນັກກິລາໄດ້ຫມົດ.

### "ວິສາຫະກິດລະບາຍມົນລະພິດຂະຫນາດໃຫຍ່ຮ້ອຍກວ່າແຫ່ງ" ຈະຢຸດຕິການຜະລິດຊົ່ວຄາວ

ເພື່ອຫລຸດຜ່ອນການລະບາຍມົນລະພິດແລະສິ່ງເປື້ອນເປິະໃຫ້ນ້ອຍລົງໄລຍະງານກິລາໂອລິມປິກແລະງານກິລາໂອລິມປິກຄົນພິການ, ເລີ່ມແຕ່ວັນທີ 20 ເດືອນ7ຫາວັນທີ 20ເດືອນ9, ວິສາຫະກິດທີ່ລະບາຍມົນລະພິດຫລາຍທີ່ປັກກິ່ງຄືະວິສາຫະກິດໂລຫະ, ວັດສະດຸກໍ່ສ້າງ, ນ້ຳມັນເຊື້ອເພີງແລະເຄມີຈະຢຸດຕິການຜະລິດຊົ່ວຄາວ.



ເວທີດອກໄມ້ສະຫນາມຫຼວງທຽນອານເຫມິນປັກກິ່ງ

北京天安门 杨 云图



ປັກກິ່ງລິເລີ່ມນຳໃຊ້ລົດບັດແບບໃຫມ່ທີ່ປ້ອງກັນສິ່ງແວດລ້ອມ

北京公交启用新型环保车辆 新华社 图

ຕົ້ນປີປີນີ້, ກົມປ້ອງກັນສິ່ງແວດລ້ອມປັກກິ່ງໄດ້ສົ່ງໃບແຈ້ງການຢຸດຕິການຜະລິດຫຼືຫລຸດຜ່ອນການຜະລິດໄລຍະງານກິລາໂອລິມປິກແລະງານກິລາໂອລິມປິກຄົນພິການໃຫ້ບັນດາວິສາຫະກິດແລ້ວ, ຮ້ອງຂໍວິສາຫະກິດທີ່ມີມົນລະພິດເປັນຈຸດສຸມນັ້ນປັບປຸງແຜນການຜະລິດ. ຈົນເຖິງວັນທີ 20 ເດືອນ9, ໃນນະຄອນປັກກິ່ງໄດ້ມີວິສາຫະກິດຊີມັງ27ຫລັງແລະໂຮງງານຄົບຫີນ ແລະໂຮງງານຜະລິດປູນຂາວ106ຫລັງໄດ້ຢຸດຕິການຜະລິດເປັນລຳດັບ.

### ມົນລະພິດລະບາຍອອກຈາກພາຫະນະຈະຫລຸດຜ່ອນ 63%

ນອກຈາກວິສາຫະກິດທີ່ມີມົນລະພິດຢຸດຕິການຜະລິດແລ້ວ, ເລີ່ມແຕ່ວັນທີ 20 ເດືອນ 7 ຫາວັນທີ 20 ເດືອນ 9 ພາຍໃນສອງເດືອນ, ປັກກິ່ງຍັງນຳໃຊ້ວິທີການຈຳກັດເວລາເດີນລົດຕາມ "ເລກຄູ່ເລກຄີກ", ຍອດປະລິມານມົນລະພິດທີ່ລະບາຍອອກຈາກພາຫະນະປັກກິ່ງນັ້ນຈະຫລຸດຜ່ອນ60%ກວ່າ. ເລີ່ມຈາກວັນທີ20ເດືອນ 7 ຕອນທ່ຽງຄືນ 3 ໂມງເປັນຕົ້ນໄປ, ພາຫະນະປັກກິ່ງແລະລົດຂອງທ້ອງຖິ່ນຕ່າງ ໆເຂົ້າສູ່ນະຄອນປັກກິ່ງໄດ້ນຳໃຊ້ວິທີການຈຳກັດເວລາເດີນລົດຕາມ "ເລກຄູ່ເລກຄີກ" ເປັນທາງການ. ຂໍ້ມູນຂອງສູນວັດແທກຕິດຕາມກວດກາສິ່ງແວດລ້ອມນະຄອນປັກກິ່ງສະແດງໃຫ້ເຫັນວ່າ, ຄຸນນະພາບຂອງອາກາດປັກກິ່ງໃນວັນທີ20 ແມ່ນດີເລີດຂັ້ນ 2. ບັນລຸເຖິງມາດຖານທີ່ໃນເວລາຮ້ອງຂໍຈັດງານກິລາໂອລິມປິກທີ່ເປັນຄຳຫມັ້ນສັນຍາ.

ກ່ອນຫນ້ານີ້, ນະຄອນປັກກິ່ງໄດ້ນຳໃຊ້ມາດຕາການຄວບຄຸມມົນລະພິດຂອງລົດເປັນລະບົບຫນຶ່ງ, ເລີ່ມແຕ່ວັນທີ 23 ເດືອນ



ການຄົມມະນາຄົມສີຂຽວທີ່ເຂດສູນກິລາໂອລິມປິກ
奥林匹克体育中心区的绿色交通　新华社 图



ພະນັກງານຮັບມືສຸກເສີນຄົມມະນາຄົມປັກກິ່ງຕິດຕາມຄວບຄຸມຖະໜົນຫົນທາງນັ່ງຢູ່ໃນລົດບັນຊາ
北京交通应急指挥中心工作人员在交通应急指挥车内对路面进行监控　新华社 图

6ເປັນຕົ້ນໄປ,ລົດຂອງອົງການລັດແລະປົກຄອງ,ຫົວໜ່ວຍວິສາຫະກິດໃນທົ່ວນະຄອນປັກກິ່ງຢຸດຕິການໃຊ້ລົດ50%,ແຕ່ວັນທີ 1 ເດືອນ7ເປັນຕົ້ນໄປ,ລົດທີ່ຕິດປ້າຍສີເຫລືອງ 3 ແສນຄັນ,ຫ້າມບໍ່ໃຫ້ແລ່ນລົດຢູ່ທາງຖະໜົນ.ຕາມຄາດຄະເນຈາກນັກຊ່ຽວຊານວ່າ,ເມື່ອນຳໃຊ້ມາດຕາການດັ່ງກ່າວນີ້ແລ້ວ,ຍອດປະລິມານມົນລະພິດຂອງລົດລະບາຍອອກໃນຊ່ວງໄລຍະນີ້ຈະຫລຸດຜ່ອນລົງ 63%,ປະມານ 118 ພັນໂຕນ.ຕາມຂໍ້ມູນການວັດແທກສະແດງໃຫ້ເຫັນວ່າ,ການຈຳກັດເວລາເດີນລົດມີຜົນປະໂຫຍດແກ່ການດັດສົມຄຸນນະພາບຂອງອາກາດໃຫ້ດີຂຶ້ນ.

## "ທ້ອງຟ້າສີຄາມ" ມາຈາກຜົນການສະສາງມົນລະພິດເປັນເວລາ10ປີ

ການສະສາງມົນລະພິດອາກາດໃນນະຄອນປັກກິ່ງໄດ້ຮັບຜົນຢ່າງເດັ່ນຊັດ.ຕາມກົມປ້ອງກັນສິ່ງແວດລ້ອມນະຄອນປັກກິ່ງເຜີຍອອກວ່າ,ຈົນເຖິງວັນທີ 21 ເດືອນ 7,ຄຸນນະພາບຂອງອາກາດນະຄອນປັກກິ່ງໃນປີ 2008 ແມ່ນຂັ້ນ 2,ຈຳນວນມື້ທີ່ດີກວ່າລະດັບຂັ້ນ 2 ເຖິງ 143 ວັນ.ປັດຈຸບັນນີ້,ມີບັງບຸກຄົນເປັນຫວ່ງໃຍວ່າ,ຫລັງຈາກງານກິລາໂອລິມປິກສິ້ນສຸດລົງແລ້ວ,ມາດຕາການຄວບຄຸມທີ່ກ່ຽວຂ້ອງກໍຢຸດຕິການໃຊ້ແລ້ວ,ບັນຫາມົນລະພິດອາກາດປັກກິ່ງຍັງຊິກັບຄືນຄືເກົ່າບໍ່?

ສຳລັບເລື່ອງນີ້,ບຸກຄົນທີ່ກ່ຽວຂ້ອງຂອງກົມປ້ອງກັນສິ່ງແວດລ້ອມປັກກິ່ງເວົ້າວ່າ,ການທີ່ຮັບປະກັນຄຸນນະພາບອາກາດປັກກິ່ງບໍ່ແມ່ນວ່າອາໄສແຕ່ນຳໃຊ້ມາດຕາການເປັນເວລາສັ້ນໆສອງເດືອນແຕ່ວັນທີ 20 ເດືອນ 7 ຫາວັນທີ 20 ເດືອນ 9 ເທົ່ານັ້ນ,ນັບຕັ້ງແຕ່ປະເທດຈີນຮ້ອງຂໍຈັດງານກິລາໂອລິມປິກເປັນທາງການໃນປີ 1998ມານີ້ໄດ້ປະຕິບັດນຳໃຊ້ມາດຕາການປ້ອງກັນມົນລະພິດທາງອາກາດ 200 ກວ່າລາຍເປັນ14 ຂັ້ນຕອນຢ່າງລຽນຕິດ,ຄຸນນະພາບຂອງອາກາດປັກກິ່ງໄດ້ຮັບການດັດສົມໃຫ້ດີຂຶ້ນເປັນເວລາ9ປີຢ່າງລຽນຕິດ.ຈຳນວນມື້"ທ້ອງຟ້າສີຄາມ" 100 ວັນໃນປີ1998 ເພີ່ມຂຶ້ນເຖິງ 246 ວັນໃນປີ 2007.10ປີທີ່ຜ່ານມາ,ປັກກິ່ງໄດ້ປະຕິບັດມາດຕາການຄຸ້ມຄອງສັງລວມເປັນລະບົບໜຶ່ງ,ໃນນັ້ນ,ມີຫລາຍມາດຕາການລ້ວນແຕ່ແມ່ນມີຜົນຍືນຍົງ,ສິ່ງເຫຼົ່ານີ້ລ້ວນແຕ່ມີບົດບາດຍາວນານທີ່ມີຕໍ່ການດັດສົມຄຸນນະພາບອາກາດຂອງປັກກິ່ງໃຫ້ດີຂຶ້ນ.



ຄົນທັງຫລາຍສ່ວນມາກອອກເດີນເລືອກເອົາລົດໄຟໃຕ້ດິນ
更多的人选择地铁出行　新华社 图




ອາກາດປອດໂປ່ງຂອງປັກກິ່ງຫລັງຝົນຕົກ

雨后的北京天气晴朗　新华社 图

# ສຸດຍອດຂອງງານມະຫາກຳ ກິລາໂອລິມປິກປັກກິ່ງປີ 2008

## 北京奥运之最

北京奥运顺利开幕，北京奥运会已经创造出许多之最了，而且新的记录还在继续……中国人民对奥运的投入可谓空前，这是中国对奥运的一大贡献。现在来数数已经创造了哪些之最吧。



“ ຮັງນົກ ” ສະໜາມກິລາແຫ່ງຊາດ
中国国家体育场“ 鸟巢 ” 吴贵荣 摄

ງານກິລາໂອລິມປິກປັກກິ່ງປີ 2008 ໄດ້ໄຂຂື້ນຢ່າງຄຶກຄື້ນ, ເຊິ່ງໄດ້ສ້າງສຸດຍອດນາໆປະການ, ສະຖິຕິໃຫມ່ກໍ່ໄດ້ພາກັນປະດິດສ້າງຂື້ນຢ່າງບໍ່ຂາດສາຍ.....ການປະກອບສ່ວນຂອງປະຊາຊົນຈີນເຂົ້າສູ່ງານກິລາໂອລິມປິກປັກກິ່ງ 2008 ໃນຄັ້ງນີ້ກໍ່ອາດຈະເວົ້າໄດ້ວ່າໃຫຍ່ຫຼວງທີ່ສຸດບໍ່ເຄີຍມີມາກ່ອນປະຫວັດສາດງານກິລາໂອລິມປິກ, ເຊິ່ງໄດ້ເປັນການປະກອບສ່ວນອັນຍິ່ງໃຫຍ່ຂອງຜູ້ເປັນຄົນຈີນຕໍ່ກິລາໂອລິມປິກໂລກ. ຕໍ່ໄປນີ້ເຊີນທ່ານມັບເບິ່ງສິ່ງສຸດຍອດໃນງານກິລາໂອລິມປິກກິ່ງຄືດັ່ງລຸ່ມນີ້ :

1. ສຸດຍອດໃນການສົ່ງຕໍ່ທອນໄຟງານກິລາໂອລິມປິກປັກປິ່ງປີ2008, ການສົ່ງຕໍ່ທອນໄຟງານກິລາໂອລິມປິກເປັນເວລາແລະໄລຍະທາງຍາວທີ່ສຸດ, ຕົວເມືອງແລະຜູ້ເຂົ້າຮ່ວມສົ່ງຕໍ່ທອນໄຟຫຼາຍທີ່ສຸດ, ລະດັບນ້ຳທະເລຂອງການສົ່ງຕໍ່ທອນໄຟສູງທີ່ສຸດໃນປະຫວັດສາດ

ຜູ້ຖືທອນໄຟຫຼາຍທີ່ສຸດ, ຜູ້ຊົມກັບທີ່ຫຼາຍທີ່ສຸດ, ຖ່າຍທອດສົດການສົ່ງຕໍ່ທອນໄຟທີ່ມີຜູ້ຊົມຫຼາຍທີ່ສຸດ, ເປັນເທື່ອທໍອິດນຳໃຊ້ໂທລະທັດດີຕີຕອນຢ່າງຈະແຈ້ງທີ່ສຸດ, ທໍາການຖ່າຍທອດສົດການສົ່ງຕໍ່ທອນໄຟ, ຖ່າຍທອດສົດການສົ່ງຕໍ່ທອນໄຟໂອລິມປິກສະຖານທີ່ສູງສຸດໃນໂລກ, ເທື່ອທໍາອິດໂດຍປະເທດເຈົ້າພາບເປັນຜູ້ຮັບ "ທອນໄຟຄ້ອນທີ່ໜຶ່ງ", ຮູບແບບຕ້ອນຮັບທອນໄຟທີ່ມີຄວາມໝາຍປະດິດສ້າງຫຼາຍທີ່ສຸດ, ການສົ່ງຕໍ່ທອນໄຟງານກິລາໂອລິມປິກປັກກິ່ງຟົດຟື້ນທີ່ສຸດ......

2. ເທື່ອທໍາອິດເພງງານກິລາໂອລິມປິກຫຼາຍທີ່ສຸດໃນປະຫວັດສາດ, ເພງຮັບສະໝັກມີຫຼາຍພັນເພງ, ຮັບເຂົ້າຮອບໄດ້ມີຫຼາຍສິບເພງ.

3. ງານກິລາໂອລິມປິກເທື່ອທໍາອິດຈັດຂື້ນຢູ່ໃນປະເທດທີ່ມີພົນລະເມືອງຫຼາຍທີ່ສູດ.

4. ງານກິລາໂອລິມປິກເຊິ່ງເປັນເທື່ອທໍາອິດຊົມໃຊ້ເຕັກນິກໂທລະທັດດີຕີຕອນຈະແຈ້ງທີ່ສຸດ, ທໍາການຖ່າຍທອດສົດງານກິລາໂອລິມປິກແຕ່ກົກສຸດປາຍຢ່າງຮອບດ້ານໃນປະຫວັດສາດ.

5. ງານກິລາໂອລິມປິກຄັ້ງໜຶ່ງທີ່ມີຕົວເມືອງປະສານງານຫຼາຍທີ່ສຸດໃນປະຫວັດສາດ.

6. ເປັນສະໜາມກິລາຫຼັກທີ່ກໍ່ສ້າງດ້ວຍໂຄງສ້າງເຫຼັກກ້າຊຸທີ່ໃຫຍ່ທີ່ສຸດໃນປະຫວັດສາດງານກິລາໂອລິມປິກ.

7. "ແມັດກ້ອນນ້ຳ" ເຊິ່ງເປັນຫໍລອຍນ້ຳທີ່ກໍ່ສ້າງດ້ວຍໂຄງສ້າງເຍື່ອເທື່ອທໍາອິດໃນປະຫວັດສາດງານກິລາໂອລິມປິກ.

8. ງານກິລາໂອລິມປິກຄັ້ງໜຶ່ງທີ່ມີວັດຖຸສິລິມຸງຄຸນຫຼາຍທີ່ສຸດໃນປະຫວັດສາດງານກິລາໂອລິມປິກ 5 ໂຕ.

9. ງານກິລາໂອລິມປິກທີ່ມີປະເທດແລະຄະນະຜູ້ແທນກິລາເຂົ້າຮ່ວມຫຼາຍທີ່ສຸດໃນປະຫວັດສາດ.

10. ງານກິລາໂອລິມປິກຄັ້ງໜຶ່ງທີ່ສິ້ນເປືອງທຶນຮອນຫຼາຍຊຸ





ເປີດສູນການຂ່າວຂະໜາດໃຫຍ່ສາມແຫ່ງໄດ້ປະດິດຄິດສ້າງສຸດຍອດຂອງ
ງານກິລາໂອລິມປິກຫລາຍລາຍ
奥运三大新闻中心开放 创造多项奥运之最 CFP 图

ທີ່ສຸດໃນປະຫວັດສາດ.

11.ງານກິລາໂອລິມປິກປັກກິ່ງທີ່ເລືອກເອົາເລກ 8 ຫຼາຍທີ່ສຸດທີ່ມີຄວາມໝາຍສິລິມຸງຄຸນຄືເວລາ 8 ໂມງແລງວັນທີ 8 ເດືອນ8 ປີ2008ໃນປະຫວັດສາດ.

12.ງານກິລາໂອລິມປິກຄັ້ງໜຶ່ງທີ່ມີຈຳນວນຄົນຫຼາງທີ່ສຸດເຂົ້າຮ່ວມການຄັດເລືອກຜູ້ອາສາສະໝັກໃນປະຫວັດສາດ.

13.ເທື່ອທຳອິດນຳໃຊ້ໂລຫະມີຄ່າປະສົມຢົກເຮັດເປັນຫຼຽນໄຊຂອງງານກິລາໂອລິມປິກໃນປະຫວັດສາດ.

14.ງານກິລາໂອລິມປິກຄັ້ງໜຶ່ງທີ່ມີປີ້ຜ່ານປະຕູຫຼາຍທີ່ສຸດໃນປະຫວັດສາດ.

15.ງານກິລາໂອລິມປິກທີ່ມີຄະນະນັກຂ່າວຫຼາຍທີ່ສຸດໃນປະຫວັດສາດ: ມີນັກຂ່າວ40ພັນຄົນຈະທຳການເກັບຂ່າວງານກິລາໂອລິມປິກັບທີ່.

16.ງານກິລາໂອລິມປິກທີ່ມີຜູ້ຊົມຫຼາຍທີ່ສຸດເບິ່ງການແຂ່ງຂັນໃນເວລາດຽວກັນໃນປະຫວັດສາດ:ທົ່ວໂລກຈະມີປະຊາກອນ 4ຕື້ຄົນພ້ອມກັນຊົມເບິ່ງການຖ່າຍທອດສົດກິລາໂອລິມປິກ.

17.ເວລາຖ່າຍທອດງານກິລາໂອລິມປິກຍາວນານທີ່ສຸດໃນປະຫວັດສາດ:ງານໂອລິມປິກປັກກິ່ງຈະຖ່າຍທອດສົດການແຂ່ງຂັນກິລາໂອລິມປິກທຸກລາຍການເປັນເວລາ 5400ຊົ່ວໂມງ, ຫຼາຍກວ່າງານກິລາໂອລິມປິກອາແຕນປີ2004ປະມານ2000 ຊົ່ວໂມງ.

18.ເທື່ອທຳອິດໂອນກຳມະສິດຖ່າຍທອດໃຫ້ແກ່ສື່ມວນຊົນ



“ ນ້ຳແມັດກ້ອນ ” ສູນລອຍນ້ຳແຫ່ງຊາດ
中国国家游泳中心“ 水立方 ” 新华社 图



ງານກິລາໂອລິມປິກປັກກິ່ງສະໜອງການຖ່າຍທອດສົດດ້ວຍໂທລະທັດສັນຍານ
ຊັດແຈ້ງສູງເປັນຄັ້ງປະຖົມມະເລີກ
北京奥运会首次全部提供高清电视信号转播 新华社 图



ໃໝ່ຂະນະກຳມະການກິລາໂອລິມປິກສາກົນໄດ້ໂອນກຳມະສິດຖ່າຍທອດໃຫ້ແກ່ເຄືອຂ່າຍຄອມພິວເຕີແລະເຄືອຂ່າຍໂທລະສັບເຄື່ອນທີ່ເປັນຕົ້ນເປັນເທື່ອທຳອິດ.

19.ການກວດກາວັດແທກຢາກະຕຸ້ນຢ່າງເຂັ້ມງວດທີ່ສຸດໃນປະຫວັດສາດ:ຫຼາຍກວ່າງານກິລາໂອລິມປິກອາແຕນ25%.

20.ງານກິລາໂອລິມປິກຄັ້ງໜຶ່ງທີ່ໄດ້ຮັບຜົນສຳເລັດຫຼາຍທີ່ສຸດດ້ານການຕະຫຼາດໃນປະຫັວດສາດ.

21."ສວນກິລາໂອລິມປິກ"ເຊິ່ງເປັນສວນໃຫຍ່ທີ່ສຸດໃນໂລກຈະກາຍເປັນ"ໂຮງບາອິກຊີໃໝ່ຂອງປັກກິ່ງ".

22.ສູນການຂ່າວຫຼັກງານກິລາໂອລິມປິກປັກກິ່ງເປັນສູນການຂ່າວຫຼັກທີ່ໃຫຍ່ທີ່ສຸດໃນປະຫວັດສາດງານກິລາໂອລິມປິກ, ສູນວິທະຍຸກະຈາຍສຽງສາກົນປັກກິ່ງກໍ່ເປັນສູນວິທະຍຸກະຈາຍສຽງສາກົນທີ່ໃຫຍ່ທີ່ສຸດໃນປະຫວັດສາດງານກິລາໂອລິມປິກ.

……

ການຈັດງານກິລາໂອລິມປິກປັກກິ່ງໄດ້ເຮັດໃຫ້ປະຫວັດສາດຂອງງານກິລາໂອລິມປິກມີການປ່ຽນແປງ,ປະຫວັດສາດໃໝ່ຍິ່ງຫຼາຍກວ່ານີ້ຈະກຳເນີດເກີດຂຶ້ນອີກ,ອວຍພອນງານກິລາໂອລິມປິກປັກກິ່ງຈະກາຍເປັນງານມະຫາກຳກິລາໂອລິມປິກຄັ້ງໜຶ່ງທີ່ຮັບຜົນສຳເລັດທີ່ໃຫຍ່ຫຼວງທີ່ສຸດໃນປະຫວັດສາດ."ງານກິລາໂອລິມປິກສູ້ !ປະເທດຈີນສູ້!"




ງານກິລາໂອລິມປິກທີ່ມີຈຳນວນຄົນເຂົ້າຮ່ວມຄັດເລືອກຜູ້ອາສາສະໝັກຫລາຍກວ່າໝູ່ສະໄໝໜຶ່ງໃນປະຫວັດສາດແລະກໍແມ່ນງານກິລາໂອລິມປິກທີ່ມີຜູ້ອາສາສະໝັກຫລາຍກວ່າໝູ່ຄັ້ງໜຶ່ງ

历史上参加义工选拔最多的一届奥运会，也是义工人数最多的一届奥运会 CFP 图

# ປັກກິ່ງເຕັມໄປດ້ວຍບັນຍາກາດງານມະຫາກຳກິລາໂອລິມປິກຢູ່ທຸກຫົນທຸກແຫ່ງ

## 北京处处都能感受到奥运气息

随着奥运会的临近，随处可见的彩旗和广告牌使北京这座城市的每个角落都能感受到奥运的气息，天安门广场上的花坛装饰、修缮一新的故宫和流光溢彩的照明设备都令游客眼前一亮。

ຄ່ຽງຄູ່ກັບງານກິລາໂອລິມປິກໃກ້ຊິມາເຖິງແລ້ວ, ພວກເຮົາສາມາດເຫັນໄດ້ທຸງສີແລະປ້າຍໂຄສະນາຢູ່ທຸກແຫ່ງ, ເຊິ່ງເຮັດໃຫ້ຕົວເມືອງປັກກິ່ງເຕັມໄປດ້ວຍບັນຍາກາດງານກິລາໂອລິມປິກຢູ່ທຸກບ່ອນທຸກແຈ, ການປະດັບເອ້ຍ້ອງເວທີດອກໄມ້ໃນສະໜາມຫຼວງທຽນອານເໝີນແລະພະລາຊະວັງກູ້ກົງທີ່ປະຕິສັງຂອນໃໝ່ແລະອຸປະກອນແສງສະຫວ່າງທີ່ແວວວາວເຮັດໃຫ້ນັກທ່ອງທ່ຽວຮູ້ສຶກສາຍຕາແຈ້ງສະຫວ່າງແລະເບີກບານມ່ວນຊື່ນ.

ຜູ້ອາສາສະໝັກທີ່ລັດຖະບານຈີນໄດ້ເລືອກອອກມານັ້ນໄດ້ຊ່ວຍເຫຼືອແລະອຳນວຍຄວາມສະດວກແລະຊີ້ບອກທາງແກ່ນັກທ່ອງທ່ຽວທີ່ມາທ່ຽວຊົມງານກິລາໂອລິມປິກປັກກິ່ງ. ຜູ້ອາສາສະໝັກກໍ່ເປັນສ່ວນປະກອບຂອງວຽກງານຮ້ອງຂໍເປັນເຈົ້າພາບຈັດງານກິລາໂອລິມປິກເຊິ່ງໄດ້ຮັບຜົນສຳເລັດ. ວຽກງານເຫຼົ່ານີ້ໄດ້ເຮັດໃຫ້ໂສມໜ້າຂອງຕົວເມືອງນີ້ຍິ່ງງາມກວ່າເກົ່າ.

ສະໜາມແລະຫໍກິລາໂອລິມປິກໄດ້ພາໃຫ້ນັກທ່ອງທ່ຽວທັງຫຼາຍມີຄວາມໄຝ່ຝັນ




ພາບວິວແສງສະຫວ່າງໄຟນີອອນຈຸງານກິລາໂອລິມປິກສະໜາມຫລວງທຽນອານເໝີນປັກກິ່ງ
北京天安门广场奥运组灯景观　新华社 图

ຫຼາຍຮູບຫຼາຍແບບ, ພວກເຂົາສາມາດອີງຕາມຮູບນອກຂອງຫໍກິລາຮັງນົກທີ່ໃຫຍ່ໂຕມະໂຫລານຄິດເຖິງໄດ້ຄວາມສະຫງ່າລາສີພາຍໃນຫໍ. ຮັງນົກຕັ້ງຢູ່ທິດເໜືອຕົວເມືອງປັກກິ່ງ, ຢູ່ຕາມຖະໜົນຄຸ້ມບານໃໝ່ທຸກແຫ່ງກໍໄດ້ຕິດປ້າຍຄຳຂວັນຍິນດີຕ້ອນຮັບນັກທ່ອງທ່ຽວຢ່າງອົບອຸ່ນ.

ໃນຕົວເມືອງນະຄອນຫຼວງທີ່ຈະຮັບຕ້ອນນັກທ່ອງທ່ຽວຕ່າງປະເທດ4ແສນ50ພັນຄົນແລະນັກທ່ອງທ່ຽວພາຍໃນປະເທດຢ່າງໜ້ອຍ2ລ້ານຄົນຢູ່ແຫ່ງນີ້, ອຸນນະພູມໃນປະຈຸບັນຢູ່ໃນລະດັບ33ອົງສາເຊຂຶ້ນໄປ, ຮອດເວລາຕອນທ່ຽງອາດຈະສູງຂຶ້ນເຖິງ38ອົງສາເຊ. ບັນຫາຮ້ອນເອົ້າແລະເຮັດໃຫ້ຮູບພາບອອກສີກໍ່ເປັນການທ້າທາຍຢ່າງໃຫຍ່ຕໍ່ພວກເຮົາ.




ແຕ່ຄວາມຮ້ອນເອົ້າທີ່ອົດຍາກກໍບໍ່ໄດ້ກີດກັ້ນບາດກ້າວຂອງຕຳຫຼວດແລະຜູ້ປ້ອງກັນຄວາມສະຫງົບທີ່ລາດຕະເວນຕາມຖະໜົນເປັນພັນໆຄົນໄດ້. ນອກຈາກນັ້ນ. ຢູ່ປັກກິ່ງໄດ້ສ້າງໂຮງແຮມຮັບໃຊ້ງານກິລາໂອລິມປິກ110ແຫ່ງແລະສະຖານທີ່ກ່ຽວຂ້ອງງານມະຫາກຳຄັ້ງນີ້2000ແຫ່ງ.

ເມື່ອນັກທ່ອງທ່ຽວເຂົ້າສູ່ຕົວເມືອງປະສານງານກິລາໂອລິມປິກຄືປັກກິ່ງ, ຮົງກົງແລະຊຽງໄຮແລ້ວກໍ່ສາມາດຮູ້ສຶກໄດ້ມາດຕາການຮັກສາຄວາມປອດໄພອັນເຂັ້ມງວດ. ໃນຕົວເມືອງເຫຼົ່ານີ້, ດ້ານໜຶ່ງສາມາດເຫັນໄດ້ປ້າຍຄຳຂວັນທີ່ເຕັມໄປດ້ວຍບັນຍາກາດມິດຕະພາບຍິນດີຕ້ອນຮັບແລະກະຕືກລືລົ້ນຢູ່ແຕ່ລະບ່ອນ, ອີກດ້ານໜຶ່ງກໍ່ສາມາດປະກົດເຫັນການກວດກາເຄື່ອງຖືແລະລະບົບວົງຈອນປິດຢ່າງເຄັ່ງຄັດຢູ່ສະໜາມບິນ. ໄລຍະໄຂພິທີງານກິລາໂອລິມປິກ, ສະໜາມບິນນະຄອນຫຼວງປັກກິ່ງຈະປິດຊົ່ວຄາວ.

ຕາມຂໍ້ມູນສະຖິຕິຂອງເຈົ້າໜ້າທີ່ຈີນສະແດງໃຫ້ເຫັນວ່າລັດຖະບານຈີນໃນການກະກຽມງານກິລາໂອລິມປິກຄັ້ງນີ້ໄດ້ລົງທຶນ3.3ຕື້ປອນເອີລົບ, ໃນນັ້ນ, 500ລ້ານປອນເອີລົບໃຊ້ໃນການກໍ່ສ້າງສະໜາມກິລາໂອລິມປິກ. ມັນເປັນໂອກາດສະແດງປະເທດຈີນຕໍ່ພາຍນອກເທື່ອໜຶ່ງ, ດັ່ງນັ້ນປະເທດຈີນຕ້ອງຈັດງານກິລາໂອລິມປິກຄັ້ງນີ້ໃຫ້ມີຮູບມີສີ.

ນອກຈາກສະໜາມແລະຫໍກິລາໂອລິມປິກແລ້ວ, ຢູ່ສະໜາມບິນນະຄອນຫຼວງປັກກິ່ງຍັງໄດ້ກໍ່ສ້າງອາຄານໂດຍສານຂະໜາດໃຫຍ່ແລະສະຖານີລົດໄຟໃຕ້ດິນໃໝ່. ສ້ອມແປງໜ້າທາງສະໜາມບິນແລະທາງເຂົ້າອອກ. ນອກຈາກນັ້ນ, ເພື່ອຫຼຸດຜ່ອນສິ່ງເປື້ອນເປິ, ປັກກິ່ງຍັງໄດ້ປູກຕົ້ນໄມ້ຫຼາຍຫຼາຍຕົ້ນ, ພ້ອມທັງໄດ້ວາງນະໂຍບາຍໃໝ່ກ່ຽວກັບການອອກເດີນທາງ, ເພື່ອຫຼຸດຜ່ອນຈຳນວນລົດຢູ່ຖະໜົນຫົນທາງໃນໄລຍະງານກິລາໂອລິມປິກ.

ຍັງໄດ້ໃຊ້ທຶນສ່ວນໃຫຍ່ກ້ອນໜຶ່ງເຂົ້າໃນການຍົກລະດັບອະລິຍະທຳແລະສຸພາບະມີຜູ້ຂັບລົດປະມານ90ພັນຄົນໄດ້ເຂົ້າຮ່ວມຊຸດຝຶກອົບຮົມພາສາອັງກິດທີ່ເລີ່ມຈັດຂຶ້ນແຕ່ປີ2006, ມີຄອບຄົວ4ລ້ານ3ແສນກວ່າຄົວເຮືອນໄດ້ຮັບປື້ມຄູ່ມືຊ່ວຍນັກທ່ອງທ່ຽວ. ມີຜູຊີ້ທາງ8ແສນ70ພັນຄົນໄດ້ຜ່ານການອົບຮົມກຽມພ້ອມຮັບໃຊ້ນັກທ່ອງທ່ຽວຢູ່ສະເໝີ.


CATIC




ຕ້ອນຮັບງານກິລາໂອລິມປິກ ພິຖີພິຖັນມາລະຍາດ ສ້າງແບບແຜນທຳນອງໃໝ່

迎奥运 讲文明 树新风

Beijing 2008



“ ຈິດສຳນຶກໂລກກົມກຽວກັນ ” ເຊື່ອມເຂົ້າສູ່ປຶ້ມບັນທຶກລາຍວັນທຸກໆໜ້າຂອງການຕ່າງປະເທດຈີນໃນປີມໍ່ໆມານີ້. ຄຳສັບນີ້ເຕັມໄປດ້ວຍສະຕິປັນຍາບູລະພາໄດ້ປະກົດເຫັນຢູ່ໃນເວທີສາກົນທີ່ສຳຄັນເລື້ອຍໆ. ຈິດສຳນຶກໃໝ່ທີ່ຄຳສັບນີ້ສະແດງອອກນັ້ນໄດ້ຮັບຄວາມນິຍົມຊົມຊອບຈາກປະເທດນັບມື້ນັບຫລາຍຍິ່ງຂຶ້ນ

“ 和谐世界 ” 的理念，贯穿于近年来中国外交的每一页日志上。这个充满东方智慧的名词频频出现在重大国际场合，它所阐释的国际关系新理念在越来越多的国家引起共鸣　新华社 图

# ຍຶດໝັ້ນການປະຕິຮູບເປີດປະຕູສູ່ພາຍນອກ ຊຸກດັນການຮ່ວມມື ແລະ ພ້ອມກັນເອົາຊະນະ

## 坚持改革开放　推进合作共赢

对中国而言，2008 年是一个具有特殊意义的年份。30 年前，在邓小平先生倡导和带领下，中国人民毅然决然地踏上了改革开放的历史征程。这是中国在新的历史条件下进行的新的伟大革命。30 年来，中国人民以一往无前的进取精神和波澜壮阔的创新实践，坚定不移地推进改革开放和社会主义现代化建设，中国的经济实力、综合国力、人民生活水平都上了大台阶，中国的面貌发生了历史性变化。

ເວົ້າສຳລັບຈີນແລ້ວ, ປີ 2008 ເປັນປີໜຶ່ງທີ່ມີຄວາມໝາຍພິເສດ. ກ່ອນໜ້ານີ້ 30 ປີ, ຢູ່ໃຕ້ການລິເລີ່ມ ແລະ ນຳພາຂອງພະນະທ່ານເຕິ້ງຊຽວຜິງ, ປະຊາຊົນຈີນໄດ້ຕັດສິນໃຈຢ່າງແນວ ແນ່ກ້າວເດີນໄປສູ່ເສັ້ນທາງປະຫວັດສາດຂອງການປະຕິຮູບຊເປີດປະຕູສູ່ພາຍນອກ. ນີ້ແມ່ນຈີນໄດ້ດຳເນີນການປະຕິວັດອັນຍິ່ງໃຫຍ່ຢູ່ໃຕ້ເງື່ອນໄຂປະຫວັດສາດໃໝ່

30 ປີຜ່ານມາ, ປະຊາຊົນຈີນອາໄສນ້ຳໃຈບຸກບືນກ້າວເດີນໄປໜ້າຢ່າງບໍ່ຢຸດຢັ້ງ ແລະ ກະແສຄື້ນ ອັນກວ້າງໄກຂອງຜຶດຕິກຳລິເລີ່ມໃໝ່ອັນສະຫງ່າລາສີ, ໄດ້ຢຶດໝັ້ນຢ່າງແນວແນ່ຕໍ່

ການຊຸກຍູ້ການປະຕິຮູບເປີດປະຕູສູ່ພາຍນອກ ແລະ ການສ້າງສາສັງຄົມນິຍົມແບບທັນສະໄໝ, ກຳລັງຕົວຈິງທາງເສດຖະກິດ, ກຳລັງສັງລວມແຫ່ງຊາດ ແລະ ລະດັບຊີວິດການເປັນຢູ່ຂອງປະຊາຊົນຈີນລ້ວນແຕ່ໄດ້ກ້າວກະໂດດເຂົ້າສູ່ລະດັບຂັ້ນໃໝ່ທີ່ສູງກວ່າເກົ່າ, ໂສມໜ້າຂອງຈີນໄດ້ເກີດມີການປ່ຽນແປງລັກສະນະປະຫວັດສາດ. ຈີນໄດ້ເຮັດໃຫ້ກົນໄກເສດຖະກິດແຜນການທີ່ລວມສູນໃນລະດັບສູງເມື່ອການຫັນປ່ຽນມາເປັນກົນໄກເສດຖະກິດຕະຫລາດ ສັງຄົມນິຍົມທີ່ເຕັມໄປດ້ວຍກຳລັງວັງຊາທີ່ມີຊີວິດຊີວາ, ຈາກສະ ພາບອັງປິດ, ເຄິ່ງອັງປິດໄປສູ່ການເປີດປະຕູສູ່ພາຍນອກທົ່ວສາລະ ທິດ, ຊຶ່ງເປັນການຫັນປ່ຽນແບບຫົວລ້ຽວຫົວຕໍ່ທາງປະຫວັດສາດ ອັນຍິ່ງໃຫຍ່, ເສດຖະກິດຂອງຈີນໄດ້ພັດທະນາໄປຢ່າງໄວວາ, ຊີວິດການເປັນຢູ່ຂອງປະຊາຊົນຈາກບໍ່ພໍກັບການກິນອີ່ມນຸ່ງອຸ່ນ ພັດທະນາໄປເປັນການພໍຢູ່ພໍກິນໂດຍກວມລວມ, ປະຊາກອນທຸກ ຍາກໃນຊົນນະບົດຈາກ 250 ກວ່າລ້ານຫລຸດລົງ ຍັງເຫລືອແຕ່ 10 ກວ່າລ້ານ, ໃນຂົງເຂດການບູລະນະກໍ່ສ້າງດ້ານການເມືອງ, ການ ກໍ່ສ້າງວັດທະນະທຳ, ການສ້າງສາສັງຄົມ ແລະ ອື່ນໆກໍຍາດໄດ້ ໝາກຜົນ ແຫ່ງການພັດທະນາທີ່ທັງໂລກຈັບຕາມອງ.

ໃນພຶດຕິກຳອັນຍິ່ງໃຫຍ່ແຫ່ງການປະຕິຮູບເປີດປະຕູສູ່ ພາຍນອກນັ້ນ, ຊາວຈີນໄດ້ຮັບຮູ້ຢ່າງເລິກເຊິ່ງວ່າ: ທ່າມກາງການ ແກ້ງແຍ້ງທີ່ນັບມື້ນັບດຸເດືອດຂອງໂລກປະຈຸບັນ, ປະເທດໜຶ່ງ, ປະຊາຊາດໜຶ່ງຢາກພັດທະນາຂຶ້ນມາ, ຈຳຕ້ອງກ້າວເດີນໄປໜ້າພ້ອມກາລະເວລາ, ປະຕິຮູບເປີດປະຕູສູ່ພາຍນອກ, ພັດທະນາດ້ວຍກຳລັງເນັ້ນໜັກ, ຖືຄົນເປັນກົກ ແລະ ຊຸກຍູ້ຄວາມກົມກຽວກັນ.

ປະຫວັດສາດແມ່ນພື້ນຖານແຫ່ງຄວາມກ້າວໄປໜ້າຢ່າງ ຕໍ່ເນື່ອງ, ແລະ ກໍແມ່ນເປັນການໄຂໃຫ້ເຫັນແຈ້ງການລິເລີ່ມ ສ້າງໃນອະນາຄົດ. ຈີນຍັງແມ່ນປະເທດພວມພັດທະນາທີ່ໃຫຍ່ທີ່ສຸດຂອງໂລກ, ການທີ່ຈີນເຮັດໃຫ້ເປັນແບບທັນສະໄໝປະກົດເປັນຈິງໂດຍພື້ນຖານ, ເຮັດໃຫ້ໝົດທັງປະຊາຊົນຈີນພ້ອມກັນມັ່ງຄັ່ງສົມບູນໃຫ້ປະກົດເປັນຈິງນັ້ນຍັງຕ້ອງເດີນທາງອັນໄກແສນໄກ. ການພັດທະນາຢ່າງວ່ອງໄວໃນ 30 ປີທີ່ຜ່ານມາຂອງຈີນນັ້ນ, ສິ່ງທີ່ອີງອາໄສນັ້ນແມ່ນການປະຕິຮູບເປີດປະຕູສູ່ພາຍນອກ. ການພັດທະ ນາໃນອະນາຄົດຂອງຈີນກໍຈຳຕ້ອງແມ່ນອີງອາໄສການປະຕິຮູບເປີດປະຕູສູ່ພາຍນອກ. ການປະຕິຮູບເປີດປະຕູສູ່ພາຍນອກເປັນການເລືອກເຟັ້ນທີ່ມີລັກສະນະກຸນແຈຫົວລ້ຽວຫົວຕໍ່ຂອງການຕັດສິນ ໂຊກຊະຕາກຳຂອງຈີນໃນຍຸກປະຈຸບັນ, ແລະ ກໍແມ່ນເປັນການເລືອກເຟັ້ນຮ່ວມກັນຂອງປະຊາຊົນຈີນ 1.300 ລ້ານຄົນ. ປະຊາ



ການຕ່າງປະເທດຈີນຍຶດຖື " ໂລກກົມກຽວກັນ "
中国外交倡导 " 和谐世界 " 新华社 图

ຊົນຈີນຈະຢຶດໝັ້ນຢ່າງແນວແນ່ເດີນໄປຕາມເສັ້ນທາງປະຕິ ຮູບເປີດປະຕູສູ່ພາຍນອກທີ່ຍິ່ງໃຫຍ່, ບາກບັ່ນຕໍ່ສູ້ເພື່ອສືບຕໍ່ການສ້າງສາສັງຄົມແບບພໍຢູ່ພໍກິນຢ່າງຮອບດ້ານ ແລະ ກ້າວເຂົ້າໄປສູ່ຫັນເປັນແບບທັນສະໄໝໃຫ້ປະກົດເປັນຈິງໂດຍພື້ນຖານ, ສືບຕໍ່ບາກບັ່ນຕໍ່ສູ້ເພື່ອພາລະກິດອັນສູງສົ່ງຂອງສັນຕິພາບ ແລະ ການພັດ ທະນາຂອງມວນມະນຸດ.

ຜ່ານການປະຕິຮູບເປີດປະຕູສູ່ພາຍນອກ 30 ປີມານີ້, ການພົວພັນຊຶ່ງກັນແລະກັນລະຫວ່າງຈີນກັບໂລກໄດ້ເກີດມີການ

ປ່ຽນແປງລັກສະນະປະຫວັດສາດ.ເສດຖະກິດຂອງຈີນໄດ້ກາຍເປັນສ່ວນປະກອບອັນສຳຄັນຂອງເສດຖະກິດໂລກ. ມູນຄ່າລວມການຜະລິດພາຍໃນປະເທດຂອງຈີນໄດ້ຢຶດຄອງອັດຕາສ່ວນທົ່ວທັງໂລກ ຈາກ 1% ຂອງປີ 1978 ເພີ່ມຂຶ້ນເປັນ 5% ຂຶ້ນໄປຂອງປີ 2007, ມູນຄ່າລວມຂອງກິດຈະກຳຂາເຂົ້າ-ຂາອອກຂອງຈີນຢຶດ ອັດຕາສ່ວນຂອງທົ່ວທັງໂລກຈາກບໍ່ເຖິງ 1% ຂອງປີ 1978 ຍົກ ສູງມາເປັນປະມານ 8% ຂອງປີ 2007. ການພັດທະນາຂອງຈີນ ໄດ້ເປັນການສະໜອງຕະຫລາດອັນກວ້າງຂວາງຂອງທຶນສາກົນ, ການຄິດໄລ່ທະວີບວກການນຳໃຊ້ທຶນຕ່າງປະເທດຕົວຈິງຂອງ ຈີນ ໄດ້ເກີນກວ່າ780 ຕື້ໂດລາສະຫະລັດ, ວິສາຫະກິດຂອງຈີນ ໄປລົງທຶນຢູ່ຕ່າງປະເທດໂດຍກົງກໍມີການເພີ່ມຂຶ້ນໃນອັດຕາການ ແກວ່ງຕົວໃນລະດັບສູງ.

ການພັດທະນາຂອງຈີນໄດ້ເປັນການຊຸກຍູ້ການເພີ່ມຂຶ້ນ ດ້ານເສດຖະກິດ ແລະ ການຄ້າຂອງໂລກຢ່າງແຂງແຮງ. ນັບແຕ່ປີ 1978 ເປັນຕົ້ນມາຄວາມໄວຂອງການເພີ່ມການນຳ ເຂົ້າສະເລ່ຍຕໍ່ປີຂອງຈີນໄດ້ບັນລຸເຖິງ 16,7%, ໄດ້ກາຍເປັນຕະ ຫລາດນຳເຂົ້າໃຫຍ່ອັນດັບທີ່ 3 ຂອງໂລກ ແລະ ອັນດັບທີ່ 1 ຂອງ ອາຊີ. ອັດຕາສ່ວນຂອງການປະກອບສ່ວນດ້ານເສດຖະກິດຈີນຕໍ່ ການເພີ່ມຂຶ້ນຂອງເສດຖະກິດໂລກໄດ້ເກີນກວ່າ 10%, ອັດຕາສ່ວນ ຂອງຊການປະກອບສ່ວນເພີ່ມຂຶ້ນຂອງການຄ້າສາກົນເກີນກວ່າ 12% ນັບແຕ່ປີ 2001 ເປັນຕົ້ນມາມູນຄ່ານຳເຂົ້າສະເລ່ຍຕໍ່ປີຂອງຈີນເກືອບມີເຖິງ 560 ຕື້ໂດລາສະຫະລັດ, ເປັນການສ້າງໂອກາດການຫາວຽກເຮັດງານທຳໃຫ້ແກ່ປະເທດ ແລະ ເຂດແຄວ້ນທີ່ມີສ່ວນກ່ຽວຂ້ອງ 10 ລ້ານຄົນ.

ຈີນໄດ້ກາຍເປັນສະມາຊິກອັນສຳຄັນໃນລະບົບສາກົນ. ຈີນໄດ້ລົງນາມໃນສົນທິສັນຍາສາກົນ 300 ກວ່າສະບັບກັບ 100 ກວ່າລັດຖະບານ ແລະ ອົງການຈັດຕັ້ງສາກົນ. ຈີນໄດ້ມີສ່ວນຮ່ວມ ຢ່າງຕັ້ງໜ້າກັບກິດຈະກຳສາກົນ ແລະ ພາກພື້ນ, ໄດ້ປະຕິບັດຄວາມຮັບຜິດຊອບທາງສາກົນທີ່ມີສ່ວນກ່ຽວຂ້ອງຢ່າງຈິງໃຈ. ໄລ່ມາຮອດປະຈຸບັນ, ຈີນໄດ້ເຂົ້າຮ່ວມການເຄື່ອນໄຫວປົກປັກຮັກສາສັນຕິພາບຂອງອົງການສະຫະປະຊາຊາດ 22 ໂຄງການ, ໄດ້ແຕ່ງຕັ້ງບຸກຄະລາກອນຮັກສາສັນຕິພາບໄປຕ່າງປະເທດດ້ວຍການຄິດໄລ່ທະວີບວກມີເຖິງຫຼາຍສິບພັນເທື່ອຄົນ, ປະຈຸບັນພວມປະຕິບັດໜ້າທີ່ປົກປັກຮັກສາສັນຕິພາບນັ້ນຍັງມີ 1900 ກວ່າຄົນ, ເປັນປະເທດທີ່ສົ່ງບຸກຄະລາກອນປົກປັກຮັກສາສັນຕິພາບຫລາຍກວ່າເພີ່ນໃນ 5 ປະ ເທດທີ່ເປັນຄະນະມົນຕີຄວາມໝັ້ນຄົງຖາວອນຂອງອົງການສະຫະປະຊາຊາດ.

ພຶດຕິກຳຂອງການປະຕິຮູບເປີດປະຕູສູ່ພາຍນອກ 30 ປີມານີ້ໄດ້ບອກໃຫ້ພວກເຮົາຮູ້ວ່າ, ການພັດທະນາກ້າວໜ້າຂອງ ຈີນປາສະຈາກໂລກບໍ່ໄດ້, ການຈະເລີນສີວິໄລ ແລະ ຄວາມ ໝັ້ນທ່ຽງຂອງໂລກກໍປາສະຈາກຈີນບໍ່ໄດ້ຄືກັນ.ຢູ່ໃຕ້ທ່າອຽງໃຫຍ່ຂອງໂລກຊຶ່ງແມ່ນໂລກໄດ້ຫັນເປັນແບບຫລາຍຂົ້ວທີ່ບໍ່ອາດຕ້ານ ປີ້ນໄດ້ນັ້ນ, ເສດຖະກິດໂລກາພິວັດໄດ້ພັດທະນາເຂົ້າສູ່ລວງເລິກ, ການປະຕິວັດວິທະຍາສາດເຕັກນິກໄດ້ເລັ່ງລັດຊຸກຍູ້ໄປໜ້າ, ໂຊກ ຊະຕາອະນາຄົດຂອງຈີນນັບມື້ນັບ ພົວພັນກັນກັບໂຊກຊະຕາອະນາ ຄົດຂອງໂລກຢ່າງສະໜິດແໜ້ນ.

ຈີນຈະປະຕິບັດແຜນຍຸດທະສາດເປີດປະຕູສູ່ພາຍນອກພ້ອມກັນເອົາຊະນະຢ່າງບໍ່ລົດລະ ແລະ ສຸດກົກສຸດປາຍ. ຈີນໄດ້ສຸມ ກຳລັງໃສ່ການຊຸກດັນເສດຖະກິດຂອງໂລກມີການເພີ່ມຂຶ້ນຢ່າງຕໍ່ເນື່ອງ ແລະ ໝັ້ນທ່ຽງ. ໃນຂະນະມີການພັດທະນາພາຍໃນ ປະເທດຕົນໃຫ້ປະກົດເປັນຈິງນັ້ນໄດ້ຢຶດໝັ້ນປະຕິບັດຕາມລະບຽບການທາງເສດຖະກິດການຄ້າຂອງສາກົນທີ່ນຳໃຊ້ທົ່ວໄປຂະຫຍາຍກວ້າງຕໍ່ການອະນຸຍາດໃຫ້ເຂົ້າສູ່ຕະຫລາດ ແລະ ສອດສ່ອງດູແລກັບຝ່າຍກົງກັນຂ້າມໂດຍສະເພາະແມ່ນການເປັນຫ່ວງເປັນໃຍອັນ

ຊອບທຳຕໍ່ປະເທດພວມພັດທະນາ, ສະໜັບສະໜູນປະຊາຄົມໂລກຊ່ວຍເຫລືອປະເທດພວມພັດທະນາ, ເພີ່ມທະວີຄວາມສາມາດແຫ່ງການພັດທະນາດ້ວຍຕົນເອງໃຫ້ເຂັ້ມແຂງ, ປົວແປງການຄອງຊີບໃຫ້ດີຂຶ້ນ, ສະໜັບສະໜູນເຮັດໃຫ້ກົນໄກການຄ້າ ແລະ ການເງິນການທະນາຄານຂອງສາກົນໃຫ້ຄືບຖ້ວນບໍລິບູນ ແລະ ເຮັດໃຫ້ ການລົງທຶນທັນເປັນແບບເສລີ ແລະ ທັນເປັນແບບສະດວກສະບາຍ, ສະໜັບສະໜູນບັນດາປະເທດພ້ອມກັນປ້ອງກັນຄວາມສ່ຽງໄພທາງການເງິນການທະນາຄານ, ປົກປັກຮັກສາຄວາມປອດໄພຂອງພະລັງງານ, ຍຶດໝັ້ນທ່ານທາງການປຶກສາຫາລືຮ່ວມມືປະສານງານມາແກ້ໄຂການຜິດອ້ອງຕ້ອງຖຽງກັນທາງເສດຖະກິດການຄ້າໃຫ້ໄດ້ຮັບຜົນດີ, ຊຸກດັນໃຫ້ບັນດາປະ ເທດພ້ອມກັນມາຮັບຊົມກາລະໂອກາດຂອງການພັດທະນາ, ພ້ອມກັນຮັບມືກັບການທ້າທາຍຂອງແຕ່ລະປະເພດ.

ຈີນຈະຊຸກດັນການສ້າງສາໂລກທີ່ກົມກຽວກັນດ້ວຍສັນຕິ ພາບຢ່າງຍາວນານ ແລະ ພ້ອມກັນວັດທະນະຖາວອນຢ່າງແນວ ແນ່ ແລະ ສຸດກົກສຸດປາຍ. ຈີນປະຕິບັດຕາມວັດຖຸປະສົງແລະ ຫລັກການຂອງກົດບັດສະຫະປະຊາຊາດປະຕິບັດຢ່າງເຄັ່ງຄັດຕໍ່ກົດໝາຍ ສາກົນ ແລະ ຫລັກມາດຕະຖານການພົວພັນຊຶ່ງກັນແລະກັນທີ່ສາ ກົນຍອມຮັບທົ່ວໄປລະຫວ່າງປະເທດ, ກ່ຽວກັບການພົວພັນສາກົນ ນັ້ນເສີມຂະຫຍາຍນ້ຳໃຈປະຊາທິປະໄຕ, ຄວາມຖືກຕ້ອງປອງດອງ, ການປະສານງານ ແລະ ພ້ອມກັນໄດ້ຊະນະ, ເຄົາລົບນັບຖືອະລິຍະ ທຳຂອງມວນມະນຸດທີ່ມີລັກສະນະຫລາຍຮູບຫລາຍແບບ, ສືບຕໍ່ຊຸກ ຍູ້ການພົວພັນສາກົນໃຫ້ເປັນແບບປະຊາທິປະໄຕ, ມີສ່ວນຮ່ວມຢ່າງ ຕັ້ງໜ້າກັບການຮ່ວມມືສາກົນໃນຂົງເຂດຕ້ານລັດທິກໍ່ການຮ້າຍ,ປ້ອງກັນການແຜ່ຂະຫຍາຍກວ້າງຂອງອາວຸດນິວເຄຼຍ, ການຜັນ ແປຂອງພູມອາກາດ, ການປົກປັກຮັກສາສິ່ງແວດລ້ອມ, ການ ປ້ອງກັນ ແລະ ປິ່ນປົວພະຍາດຕິດແປດ, ຊຸກດັນຄວາມເປັນລະ ບຽບຮຽບຮ້ອຍຂອງສາກົນໃຫ້ພັດທະນາໄປຕາມທິດທາງຍຸຕິທຳ ແລະ ສົມເຫດສົມຜົນກວ່າເກົ່າ.



ໃນປີ 2007 ,ຍອດປະລິມານສະບຽງອາຫານຈີນໄດ້ລື່ນກາຍ500ຕື້ກິໂລກຼາມ ເພື່ອຮັບປະກັນສະຖຽນລະພາບຂອງທ້ອງຕະຫລາດ
2007 年，中国粮食总产量再超 1 万亿斤，为稳定市场提供了保障　新华社 图

# ອາຊຽນກັບ 3 ປະເທດຈີນ, ຍີ່ປຸ່ນ ແລະສ. ເກົາຫລີ ພ້ອມກັນຊຸກດັນການຮ່ວມມືການເງິນການທະນາຄານອາຊີຕາເວັນອອກ.

## 东盟和中日韩三国共同推动东亚金融合作

东南亚国家联盟（东盟）十国以及中国、日本和韩国三国的财政部长在马德里举行会议，就进一步推动东亚金融合作进行磋商。

ລັດຖະມົນຕີກະຊວງການເງິນ 10 ປະເທດຂອງອາຊຽນ ແລະ 3 ປະເທດຈີນ, ຍີ່ປຸ່ນ ແລະ ສ.ເກົາຫລີໄດ້ປະຊຸມກັນຢູ່ Madid, ເພື່ອປຶກສາຫາລື ແລະ ຊຸກດັນການຮ່ວມມືດ້ານການເງິນ ການທະນາຄານຂອງອາຊີຕາເວັນອອກອີກຕື່ມກ້າວໜຶ່ງ.

ກອງປະຊຸມເທື່ອນີ້ໄດ້ຮັບໝາກຜົນອັນໜຶ່ງ ທີ່ຖືກວົງ ການພາຍນອກຈັບຕາມອງກວ່າເພິ່ນນັ້ນກໍຄືລັດຖະມົນຕີຂອງອາຊຽນກັບຈີນ, ຍີ່ປຸ່ນ ແລະ ສ. ເກົາຫລີ ກ່ຽວກັບຂະໜາດຂອງ ການກະກຽມສ້າງກອງທຶນເງິນສຳຮອງເງິນຕາຕ່າງປະເທດຮ່ວມ ກັນໄດ້ບັນລຸຄວາມເປັນເອກະພາບກັນ. ນັບແຕ່ມີການເຈລະຈາທີ່ມີສ່ວນກ່ຽວຂ້ອງຊຶ່ງເລີ່ມດຳເນີນແຕ່ປີທີ່ແລ້ວນັ້ນມາຮອດປະຈຸບັນ ກອງທຶນເງິນສຳຮອງເງິນຕາຕ່າງປະເທດຮ່ວມກັນທີ່ມີມູນຄ່າລວມບໍ່ໜ້ອຍກວ່າ 80 ຕື້ໂດລາສະຫະລັດນັ້ນໄດ້ເລີ່ມກໍ່ຕົວເປັນຮູບເປັນ ຮ່າງຂຶ້ນແລ້ວ.

ໃນກອງປະຊຸມລັດຖະມົນຕີການເງິນອາຊຽນກັບຈີນ, ຍີ່ ປຸ່ນ ແລະ ສ. ເກົາຫລີທີ່ຈັດຂຶ້ນຢູ່ໂຕກ່ຽວປະເທດຍີ່ປຸ່ນໃນເດືອນພຶດສະພາປີ 2007 ນັ້ນ, ແຕ່ລະຝ່າຍທີ່ເຂົ້າຮ່ວມກອງປະຊຸມໄດ້ສະເໜີຄວາມຄາດຄິດສ້າງກອງທຶນເງິນສຳຮອງເງິນຕາຕ່າງປະເທດຮ່ວມກັນ, ໄດ້ສະເໜີອອກເອົາ "ຂໍ້ລິເລີ່ມຊຽງໃໝ່" ຊຶ່ງຕົວຂໍ້ທີ ເອົາກົນໄກແລກປ່ຽນເງິນຕາຊຶ່ງກັນແລະກັນຂອງສອງຝ່າຍເປັນ ພື້ນຖານ, ແນໃສ່ຮັບມືກັບວິກິດການຂາດແຄນເງິນທຶນທີ່ເປັນເງິນຕາຕ່າງປະເທດນັ້ນ, ຫັນມາເປັນກົນໄກຫລາຍຝ່າຍ.

ກົນໄກຫລາຍຝ່າຍຂອງ "ຂໍ້ລິເລີ່ມຊຽງໃໝ່" ທີ່ສະເໜີອອກມາໃໝ່ນັ້ນເນື້ອໃນຕົ້ນຕໍຂອງມັນຕົວຈິງແລ້ວແມ່ນໃຫ້ອາຊຽນ 10 ປະເທດ ກັບຈີນ, ຍີ່ປຸ່ນ ແລະ ສ.ເກົາຫລີ 3 ປະເທດຕ່າງເອົາເງິນສຳຮອງເປັນເງິນຕາຕ່າງປະເທດສ່ວນໜຶ່ງອອກມາສ້າງເປັນກອງທຶນ, ເພື່ອໃຊ້ເຂົ້າໃນການຊ່ວຍເຫລືອແຕ່ລະປະເທດທີ່ ເຂົ້າຮ່ວມສາມາດຕອບຕ້ານກັບວິກິດການດ້ານການເງິນທີ່ອາດຈະເກີດຂຶ້ນເປັນຢ່າງດີ, ຈະເປັນການຊ່ວຍປົກປັກຮັກສາຮັດໃຫ້ການ ເງິນການທະນາຄານຂອງພາກພື້ນອາຊີຕາເວັນອອກທັງໝົດມີສະ ຖຽນລະພາບ.

ອີງຕາມການຕົກລົງໃນສັນຍາຂອງກອງປະຊຸມລັດຖະມົນຕີການເງິນຄັ້ງນີ້, ມູນຄ່າ 80% ຂອງກອງທຶນເງິນສຳຮອງເງິນຕາຕ່າງປະເທດຮ່ວມກັນຈັດແບ່ງໃຫ້ຈີນ, ຍີ່ປຸ່ນ ສ. ເກົາຫລີ 3 ປະ ເທດເປັນຜູ້ສະໜອງ, ນອກນັ້ນ 20% ມອບໃຫ້ປະເທດອາຊຽນເປັນ ຜູ້ຮັບພາລະ. ກອງປະຊຸມຄັ້ງນີ້ຍັງກ່ຽວຂ້ອງເຖິງເງື່ອນໄຂຂອງ ການເໝາະສົມໃຊ້ກ່ຽວກັບການກູ້ຢືມທຶນຂອງປະເທດປະສົບເຄາະ ຮ້າຍໃນອະນາຄົດ ແລະ ການດຳເນີນງານຂອງກົນໄກເປັນຕົ້ນ. ຊຶ່ງເປັນບັນຫາຂອດກຸນແຈນັ້ນຍາດໄດ້ຄວາມເຫັນເປັນເອກະ ພາບອີກຕື່ມກ້າວໜຶ່ງ. ເມື່ອເງື່ອນໄຂອັນເປັນຮູບປະທຳຂອງການ ກູ້ຢືມເງິນ ແລະ ເນື້ອໃນອັນເປັນຮູບປະທຳຂອງຂໍ້ຄວາມໃນສັນຍາ ກູ້ຢືມເຈລະຈາກັນຢ່າງຮຽບຮ້ອຍແລ້ວ,ກອງທຶນດັ່ງກ່າວມີຄວາມຫວັງວ່າຈະໄດ້ດຳເນີນກິດຈະການໄວທີ່ສຸດຊຶ່ງຈະແມ່ນປີໜ້າ.

ບັນດາທ່ານຜູ້ທຳການວິໄຈໄດ້ຊີ້ອອກວ່າ: ການທີ່ພາກ ພື້ນອາຊີຕາເວັນອອກສ້າງກອງທຶນເງິນສຳຮອງເງິນຕາຕ່າງປະເທດຂຶ້ນຮ່ວມກັນມີສາເຫດທາງປະຫວັດສາດຂອງມັນ ແລະ ກໍມີ ຄວາມໝາຍຂອງຄວາມເປັນຈິງຂອງມັນ.ເພື່ອເປັນການເພີ່ມທະວີເນື້ອໃນສຳຄັນຂອງການຮ່ວມມືການເງິນ ແລະ ການທະນາຄານຂອງອາຊີຕາເວັນອອກໃຫ້ໝັ້ນແຂງ, "ຄຳລິເລີ່ມຊຽງໃໝ່" ໄດ້ ດຳເນີນງານໃນປີ 2000. ເວລານັ້ນ, ປະເທດໃນອາຊີຕາເວັນ ອອກຫາກໍປະສົບກັບການບຸກໂຈມຕີຢ່າງຮ້າຍແຮງຈາກນໍລະສຸມ ການ

ເງິນອາຊີຂອງປີ 1997, ມີຄວາມຮຽກຮ້ອງຕ້ອງການອັນ ຮີບດ່ວນສ້າງແນວປ້ອງກັນເພື່ອປ້ອງກັນວິກິດການທາງການເງິນລະເບີດຂຶ້ນອີກ, ບັນດາປະເທດອາຊີຕາເວັນອອກໄດ້ຮັບຮູ້ວ່າ: ມີ ແຕ່ລວມຕົວກັນເຂົ້າຈຶ່ງສາມາດສະກັດກັ້ນທຶນລອຍຂອງສາກົນທີ່ "ບໍ່ຫວັງດີ" ຈຳນວນຫນຶ່ງມາປັ່ນປ່ວນໃນຕະຫລາດເງິນຕາຕ່າງປະເທດຂອງປະເທດຕົນ.

ຍິ່ງສຳຄັນໄປກວ່ານັ້ນກໍຄື, ເນື່ອງຈາກວ່າອົງການກອງທຶນເງິນຕາສາກົນ ຯ, ໃນໄລຍະນັ້ນກ່ຽວກັບການຊ່ວຍເຫລືອປະເທດອາຊີຕາເວັນອອກຕ້ານຢັນກັບວິກິດການການເງິນມັກມີເງື່ອນ ໄຂອັນຮ້າຍກາດຕ່າງໆອອກມາ, ອັນນີ້ມັນກໍເປັນການເລັ່ງເຮັດໃຫ້ປະເທດອາຊີຕາເວັນອອກມີຄວາມສຳນຶກຕັ້ງຕຸ້ຕັ້ງເຕົາຂຶ້ນ ໂດຍຕົນ ເອງ. ດັ່ງນັ້ນຈຶ່ງມີຄົນເອົາເລື່ອງພວມກະກຽມສ້າງກອງທຶນເງິນ ສຳຮອງເງິນຕາຕ່າງປະເທດຮ່ວມກັນໃນເວລານັ້ນອຸປະມາເປັນ "ອົງການກອງທຶນເງິນ ຕາສາກົນຂອງອາຊີຕາເວັນອອກ".

ແຕ່ຢູ່ໃຕ້ສະພາບການໃນປະຈຸບັນ, ການຊຸກຍູ້ຮ່ວມມືດ້ານການເງິນອາຊີຕາເວັນອອກນັ້ນ, ມັນຍິ່ງມີຄວາມຫມາຍໃນພາກຕົວ ຈິງອັນຮີບດ່ວນທີ່ສຸດ. ດັ່ງທີ່ ທ່ານວໍວັນນິງລັດຖະມົນຕີການເງິນ ຫວຽດນາມຊຶ່ງແມ່ນ 1 ໃນ ປະທານຮ່ວມຂອງກອງງປະຊຸມລັດ ຖະມົນຕີການເງິນຄັ້ງນີ້ໄດ້ກ່າວວ່າ: ໃນຂະນະທີ່ວໂລກໃນປະຈຸບັນ ພວມປະເຊີນຫນ້າກັບການທ້າທາຍຢ່າງຮ້າຍແຮງຂອງເສດຖະກິດ ຍ້ອນການກະທົບກະເທືອນຈາກຕະຫລາດການເງິນ ແລະ ການເພີ່ມ ຂຶ້ນຢ່າງຮຸນແຮງຂອງເງິນເຟີ້,ການເພີ່ມທະວີການຊ່ວຍເຫລືອຊຶ່ງ ກັນແລະກັນຂອງພາກພື້ນອາຊີຕາເວັນອອກຍິ່ງສະແດງອອກໃຫ້ ເຫັນຄວາມສຳຄັນຂອງມັນ.

ຢູ່ໃຕ້ຂອບຂອງ "ຄຳລິເລີ່ມຊຽງໃຫມ່" ໃນມືດຽວກັນ ນັ້ນລັດຖະມົນຕີການເງິນອາຊຽນ ແລະ ຈີນ, ຍີ່ ປຸ່ນ, ສ.ເກົາຫລີ ຍັງເຫັນດີສ້າງຕັ້ງລະບົບສະຫນັບສະຫນູນທີ່ເຊື່ອຖືໄດ້ຂອງການດຳ ເນີນການຕິດຕາມກວດກາຕໍ່ສະຖານະການເສດຖະກິດການເງິນຂອງປະເທດສະມາຊິກຂຶ້ນ. ຊຶ່ງຖືເປັນຈຸດເລີ່ມຕົ້ນ, ກອງປະຊຸມໄດ້ຕົກລົງໃຊ້ມາດຕະການເພື່ອເພີ່ມທະວີໃສ່ກົນໄກ "ປະເມີນຕີລາຄາດ້ານເສດຖະກິດ ແລະ ການເຈລະຈາດ້ານນະໂຍບາຍ "ທີ່ມີຢູ່ ແລ້ວໃນປະຈຸບັນ.




ທີ່ປະຊຸມລັດຖະມົນຕີກະຊວງການເງິນອາຊຽນແລະຈີນ,ຍີ່ປຸ່ນ,ສ.ເກົາຫລີ
东盟和中日韩财长会议会场 新华社 图

ນອກຈາກເອົາໃຈໃສ່ປົກປັກຮັກສາສະຖຽນລະພາບທາງຕະຫລາດເງິນຕາແລ້ວ, ບັນດາລັດຖະມົນຕີການເງິນຂອງແຕ່ລະ ປະເທດເພື່ອພັດທະນາຕະຫລາດພັນທະບັດອາຊີອີກຕື່ມກ້າວຫນຶ່ງ, ໄດ້ຮັບຮອງເອົາ "ແຜນວາດແນວທາງໃຫມ່" ສະບັບຫນຶ່ງ. ບັນ ດາລັດຖະມົນຕີການເງິນທີ່ເຂົ້າຮ່ວມກອງປະຊຸມໄດ້ຊີ້ອອກວ່າ: ປີນີ້ ເປັນການລິເລີ່ມສະເຫນີດຳເນີນງານດ້ານຕະຫລາດພັນທະບັດອາຊີ ຂອງປະເທດອາຊີຕາເວັນອອກຄົບຮອບ 5 ປີ. 5 ປີທີ່ຜ່ານມາຕະ ຫລາດພັນທະບັດອາຊີໃນດ້ານຂະຫນາດ ແລະອົງປະກອບຫລັກຂອງ ການຈຳຫນ່າຍເປັນແບບຫລາຍຂື້ນນັ້ນລ້ວນແຕ່ຍາດໄດ້ຫມາກຜົນອັນເດັ່ນຊັດ, ຢູ່ໃຕ້ຂໍ້ສະເຫນີລິເລີ່ມຂອງຕະຫລາດພັນທະບັດອາຊີ, ກ່ຽວກັບຊະນິດຜະລິດຕະພັນພັນທະບັດທັນເປັນບັດຫລັກຊັບຊັບສິນໃຫມ່, ການຄ້ຳປະກັນຄວາມເຊື່ອຖືໄດ້ ແລະ ກົນໄກການລົງ ທຶນ, ມາດຕະຖານພັນທະບັດອາຊີ ແລະ ອອກແຮງເພີ່ມທະວີສ້າງ ຊື່ສຽງທີ່ເຊື່ອຖືໄດ້ຂອງອົງກອນປະກວດຊັ້ນເຊື່ອຖືໄດ້ຢູ່ພາຍໃນປະ ເທດ ແລະ ອື່ນໆຍາດໄດ້ຄວາມຄືບຫນ້າໃນລະດັບອັນແນ່ນອນ.

"ແຜນວາດແນວທາງໃຫມ່" ຂອງຕະຫລາດພັນທະບັດອາ ຊີດັ່ງກ່າວຈະເນັ້ນຫນັກຊຸກດັນການຈຳຫນ່າຍພັນທະບັດດ້ວຍເງິນຕາພາຍໃນປະເທດຂອງຕົນ, ຂະຫຍາຍກວ້າງຕໍ່ຄວາມຮຽກຮ້ອງຕ້ອງການຂອງພັນທະບັດທີ່ເປັນເງິນຕາພາຍໃນປະເທດຂອງຕົນ, ດັດແປງແກ້ໄຂຂອບການຕິດຕາມຄຸ້ມຄອງ ແລະ ໂຄງສ້າງພື້ນ ຖານທີ່ມີສ່ວນກ່ຽວຂ້ອງກັບຕະຫລາດພັນທະບັດໃຫ້ດີຂຶ້ນກວ່າເກົ່າ. ນອກນັ້ນ, ອາຊຽນ 10 ປະເທດ ແລະ ຈີນ, ຍີ່ປຸ່ນ, ສ. ເກົາຫລີ ທັງ 3 ປະເທດຍັງຈະຊຸກຍູ້ການພັດທະນາຂອງຕະຫລາດພັນທະບັດ ພາກພື້ນ.










ຕ້ອງການຂໍ້ມູນລະອຽດ ເຊີນຕິດຕໍ່ ບໍລິສັດທ່ອງທ່ຽວ ຈຳປາລາວ

For more information, Please contact CHAMPA LAO TRAVEL

TEL:(856.21).216616. FAX:(++856.21)215260.

# ຈຳປາລາວ





ເຊີນທ່ານ ທ່ອງທ່ຽວ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.
ດິນແດນທີ່ສວຍງາມ ດ້ວຍທຳມະຊາດ,ອຸດົມຮັ່ງມີທາງ ດ້ານປະຫວັດສາດ,
ວັດທະນະທຳ ແລະຫລາຍຊົນຊາດ ຊົນເຜົ່າ,
ເປັນຕົ້ນ: ນະຄອນຫລວງວຽງຈັນ-ເມືອງມໍລະດົກໂລກຫລວງພະບາງ-
ວັດພູຈຳປາສັກ-ທົ່ງໄຫຫີນ-ນ້ຳຕົກຄອນພະເພັງ-ຫລີ່ຜີ ແລະອື່ນໆ .



主要有：
首都万象市
世界文化遗产——
琅勃拉邦
占芭色瓦普寺
查尔平原（石缸平原）
宽帕盆大瀑布
里皮等名胜古迹

*Visit Laos P,D,R, one of the premier holiday destination, with its sunny, the beautiful nature, the rivers and the warm smiles of the local people, Rich tradition and culture and many ethnic groups. Visit Vientiane, the capitale, LuangPrabang, wat Phou temple, the plain of Jars: The world heritage sites and the big water falls KhonPhaPheng, LiPhi etc... Contact us today and you will be welcome.*

# ເພີ່ມທະວີການຮ່ວມມືລະຫວ່າງ ມະຫາວິທະຍາໄລຊົນເຜົ່າຢູນນານ ກັບມະຫາວິທະຍາໄລຊັ້ນສູງຂອງລາວ




ທ່ານຫົວໜ້າກົມສຶກສາຊັ້ນສູງກະຊວງສຶກສາທິການສ ປປ ລາວຖ່າຍຮູບຮ່ວມກັນກັບ
ທ່ານຈຶນຊາວຕັງຜູ້ອຳນວຍການມະຫາວິທະຍາໄລຊົນເຜົ່າຢູນນານ
老挝教育部高等教育局局长康奇申尼先生与云南民族大学校长甄朝党合影 .



ທ່ານຈຶນຊາວຕັງຜູ້ອຳນວຍການມະຫາວິທະຍາໄລຊົນເຜົ່າຢູນນານມອບຂອງຂວັນ
ໃຫ້ທ່ານຮອງເຈົ້າແຂວງຫລວງພະບາງສ ປປ ລາວ
云南民族大学校长甄朝党向老挝琅勃拉邦省副省长赠送礼品




ມະຫາວິທະຍາໄລຊົນເຜົ່າຢູນນານມອບປ້າຍແດ່ມະຫາວິທະຍາໄລສຸພານຸວົງຫລວງພະບາງ
云南民族大学向老挝琅勃拉邦苏发努冯大学授牌



ມະຫາວິທະຍາໄລຊົນເຜົ່າຢູນນານລົງເຊັນສັນຍາຮ່ວມມືກັນກັບມະຫາວິທະຍາໄລ
ສຸພານຸວົງຫລວງພະບາງ
云南民族大学与老挝琅勃拉邦苏发努冯大学签署合作协议 .

## 云南民族大学与老挝高等院校加强合作

云南民族大学与老挝高等院校之间的合作由来已久且富于成果，得到了中、老双方的赞许，双方都同意加强更进一步的合作关系，提高教学质量、扩大合作领域。

ມະຫະວິທະຍາໄລຊົນເຜົ່າຢູນນານຕັ້ງຢູ່ເມືອງຄຸນຫິງທີ່ມີທິວທັດສວຍສົດງົດງາມແລະດິນຟ້າອາກາດໃນເມືອງນີ້ກໍຖືເປັນລະດູບານໃໝ່ຕະຫຼອດປີ. ໂຮງຮຽນແຫ່ງນີ້ສ້າງຕັ້ງຂຶ້ນໃນວັນທີ1ເດືອນ 8ປີ1951ເປີຍເຊິ່ງເປັນໂຮງຮຽງແຫ່ງໜຶ່ງໃນຈຳນວນໂຮງຮຽນຊົນເຜົ່າທີ່ສ້າງຕັ້ງຂຶ້ນກ່ອນກ່ວາໝູ່ຂອງສ. ປຈີນ. ພ້ອມດຽວກັນນັ້ນໂຮງຮຽນດັ່ງກ່າວກໍເປັນມະຫາວິທະຍາໄລສຳຄັນທີ່ຂຶ້ນກັບແຂວງແລະໄດ້ຮັບການສັ່ງຕັ້ງຂຶ້ນໂດຍອຳນາດການປົກຄອງແຂວງຢູນນານແລະຄະນະກຳມະການກິດຈະການຊົນເຜົ່າ. ນັບແຕ່ການເປີດຮັບເອົານັກສຶກສາຕ່າງປະເທດມາຮຽນຢູ່ຢູນນານໃນປີ1983ເປັນຕົ້ນມາ, ພະແນການສຶກສາສາກົນນີ້ໄດ້ຮັບເອົານັກສຶກສາເປັນຈຳນວນພັນກ່ວາຄົນທີ່ມາຈາກປະເທດຍີ່ປຸ່ນ, ສ. ເກົາລີ, ຝະລັ່ງ, ເຢຍລະມັນ, ອາເມລິກາ, ສຸອິດ, ແຝງລັງ, ນອກແວ, ໂຮນລັງ, ອີຕາລີ, ນູແວນເຊລັງ, ເປຣູຊີນ, ອິດສະລາແອນ, ໄທ, ມຽນມ້າ, ລາວ, ຫວຽດນາມ, ປາກີສະຖານ, ຮົງກົງແລະໄຕ້ຫວັນຊຶ່ງມີຫລາຍສິບກວ່າປະເທດຫຼືເຂດແຄວັນ, ປະຈຸດບັນນີ້, ນັກສຶກສາຕ່າງປະເທດສາມາດເລືອກຮຽນທຸກວິຊາທີ່ມີຢູ່ໃນໂຮງຮຽນ.

ການຮ່ວມມືລະຫວ່າງມະຫາວິທະຍາໄລຊົນເຜົ່າຢູນນານກັບໂຮງຮຽນຊັ້ນສູງຂອງລາວມາແຕ່ດົນນານແລ້ວ, ກໍ່ໄດ້ຮັບໝາກຜົນອັນອຸດົມສົມບູນ, ແລະການຍ້ອງຍໍຢ່າງສູງຈາກຝ່າຍຈີນ-ລາວ. ທັງສອງຝ່າຍກໍ່ຍິນດີຊຸກຍູ້ສາຍພົວພັນໃຫ້ແໜ້ນແຟ້ນຂຶ້ນອີກເພື່ອຍົກສູງຄຸນນະພາບທາງດ້ານການສຶກສາແລະເປີດກ້ວາງຂອບເຂດທາງດ້ານການຮ່ວມມື. ໃນຕົ້ນປີນີ້, ທ່ານຈຶງຈາວຕັງຜູ້ອຳນວຍການຂອງມະຫາວິທະຍາໄລຊົນເຜົ່າຢູນນານພ້ອມດ້ວຍຄະນະໄດ້ໄປຢ້ຽມຢາມກະຊວງສຶກສາທິການແຫ່ງຊາດລາວ, ມະຫາວິທະຍາໄລແຫ່ງຊາດລາວທີ່ຢູ່ນະຄອນຫລວງວຽງຈັນແລະແຂວງຫຼວງພະບາງ. ພ້ອມກັນນັ້ນກໍ່ໄດ້ເຊັນສັນຍາກ່ຽວກັບການຮ່ວມມືເພື່ອເພີ່ມທະວີການຮ່ວມມືແລະການແລກປ່ຽນລະຫວ່າງມະຫາວິທະຍາໄລຊົນເຜົ່າຢູນນານກັບບັນດາຂະແໜງທີ່ກ່ຽວຂ້ອງຂອງສປປລາວ. ນັກສຶກສາທີ່ມາຈາກປະເທດລາວນັ້ນສາມາດເລືອກຮຽນທຸກວິຊາທີ່ມີຢູ່ໃນມະຫາວິທະຍາໄລຊົນເຜົ່າແຂວງຢູນນານ.

ເວັບໄຊຂອງມະຫາວິທະຍາໄລຊົນເຜົ່າຢູນນານ:

WWW.ynni.edu.cn

ສະຖານທີ່ຮັບນັກສຶກສາປະຈຳປີຢູ່ລາວ: ບໍລິສັດທີ່ປຶກສາດ້ານການຄ້າລາວ (ສຳນັກງານວິທະຍາຄານການສຶກສາສາກົນຂອງມະຫາວິທະຍາໄລຊົນເຜົ່າຢູນນານປະຈຳລາວ)ຢູ່ທີ່ພະແນກການຄຸ້ມຄອງນັກສຶກສາກົມສຶກສາຊັ້ນສູງຫລັງທີ 3ກະຊວງສຶກສາທິການສ ປປ ລາວ.

ເບີໂທ:00856.21.412908



# ແສງດາວຂາຍປຶ້ມ

## 老挝万象向导书屋




















ບໍລິການນຳທ່ຽວພາຍໃນແລະຕ່າງປະເທດ

ບໍລິການຂາຍປີ້ຍົນພາຍໃນແລະຕ່າງປະເທດ

ບໍລິການຂາຍປີ້ລົດໄຟ ລົດບັດໄປປະເທດໄທ,ຫວຽດນາມ

ບໍລິການເຊົ່າລົດເກັ໋ງ ລົດຈີບຖo. ລົດຕູ້12,15ບ່ອນນັ່ງ ລົດບັດ25,35,45 ບ່ອນນັ່ງ

ບໍລິການແລ່ນວີຊາໄປຕ່າງປະເທດ





ສົນໃຈເຊີນຕິດຕໍ່: ບໍລິສັດທ່ອງທ່ຽວຄໍາຫລ້າຈໍາກັດ

042/3 ຖະໜົນຟ້າງຸ່ມ ບ້ານມີໄຊ ເມືອງຈັນທະບູລີ

ແຂວງນະຄອນຫລວງວຽງຈັນ ສ.ປ.ປ.ລາວ

Tel/Fax: (856-21) 218677, 218107

Mobile: (856-20) 5606000, 5620161, 5519334

E-mail: khamlatours39@yahoo.com

www.khamla.com

**Inbound Tour**

We provide:

- Tour in Vientiane
- Tour in VangViene
- Tour in Luangprabang
- Tour in Pakze
- Tour in Northern Laos
- Tour in Southern Laos

**Outbound Tour**

We provide:

- Tour to China
- Tour to Malaysia
- Tour to VietNam
- Tour to Cambodia
- Tour to Thailand
- Tour to asia



## 精美的苏绣

苏绣是以江苏苏州为中心的刺绣产品的总称。苏绣是中国著名的手工艺品，素以绣工精细，针法活泼，图案秀丽，色彩雅洁弛名中外，多次被国家领导人作为国家级礼品送给外宾。

“ 12ນາງງາມໃນຝັນຫໍແດງ ” ເຊິ່ງເປັນກຳບັງປັກແສ່ວຊູໂຈວທັງສອງໜ້າ
双面苏绣屏风 “ 红楼梦十二金钗 ” 新华社图

# ສິ່ງປັກແສ່ວຊູ່ໂຈວທີ່ປານີດງົດງາມ



ແຂກທ່ອງທ່ຽວຕ່າງປະເທດຮຽນປັກແສ່ວຊູໂຈວ
外国游客学苏绣 新华社图

ສິ່ງປັກແສ່ວຊູໂຈວເປັນຊື່ລວມຂອງຜະລິດຕະພັນປັກແສ່ວຊຶ່ງເອົາຊູໂຈວຂອງຈ່ຽງຊູເປັນໃຈກາງ. ສິລະປະກຳມະວິທີຂອງຜະລິດຕະພັນປັກແສ່ວຊູໂຈວ ໂດຍແມ່ນເອົາໄໝສີແສ່ວໃສ່ຜ້າໄໝຫລືຜ້າຝ້າຍຕາມລວດລາຍ ແລະ ສີສັນຂອງການອອກແບບໄວ້ກ່ອນທີ່ເທິງຜ້າໄໝ ແລະ ຜ້າຝ້າຍ ໂດຍຜ່ານການແສ່ວປະກອບເຂົ້າກັນເປັນຮູບດອກໄມ້, ຮູບສັດສາວາສິ່ງ, ຮູບອື່ນໆ ແລະ ຮູບຕົວອັກສອນເພື່ອໃຫ້ໄດ້ຮັບຜົນທາງສິລະປະ. ສິ່ງປັກແສ່ວຊູເປັນຜະລິດຕະພັນສິລະປະຫັດຖະກຳທີ່ລືຊື່ຂອງຈີນ, ແຕ່ໃດມາໄດ້ຂຶ້ນຊື່ລືນາມຢູ່ພາຍໃນ ແລະ ຕ່າງປະເທດຍ້ອນວ່າກຳມະວິທີຂອງການປັກແສ່ວລະອຽດອ່ອນ, ວິທີປັກແສ່ວມີຊີວິດຊີວາ, ຮູບພາບສວຍງາມ ແລະ ຈັບສີໃສ່ເໝາະເຈາະ, ມັກຖືກຜູ້ນຳຂອງປະເທດເອົາເປັນຂອງຂວັນຂັ້ນລະດັບສູງມອບໃຫ້ແກ່ຜູ້ມີກຽດຕ່າງປະເທດ.

ການປັກແສ່ວຂອງຊູໂຈວໄດ້ມີປະຫວັດ 2000 ກວ່າປີມາແລ້ວ, ແຕ່ສະໄໝ 3 ກົກ (ຄ.ສ 220-ຄ.ສ 280) ກໍໄດ້ມີການບັນທຶກກ່ຽວກັບວິທີປັກແສ່ວຂອງສິ່ງປັກແສ່ວຊູໂຈວແລ້ວ. ຈາກນັ້ນມາຜ່ານການພັດທະນາ ແລະ ເຮັດໃຫ້ຄືບຖ້ອນບໍລິບູນຢ່າງຕໍ່



ຊ່າງວິຈິດຕະກຳຊົມເບິ່ງບົດປະພັນ 《ບຶງດອກບົວແຕ້ມນ້ຳເບິກສີ》
工艺师观赏苏绣作品《彩墨荷塘》 新华社 图

ເນື່ອງຂອງແຕ່ລະຍຸກແຕ່ລະສະໄໝ, ຮອດສະໄໝລາຊະວົງມິງ (ຄ.ສ 1368-1644) ຜະລິດຕະພັນປັກແສ່ວຊູໂຈວໄດ້ກາຍເປັນຜະລິດຕະພັນກິດຈະກຳສຳຮອງຂອງມວນຊົນທົ່ວໄປຂອງເຂດຊູ່ໂຈວແລ້ວ, ຈົນກາຍເປັນສະຖານະພາບເຮືອນໃດກໍລ້ຽງມ້ອນຄອບຄົວໃດກໍປັກແສ່ວ". ມາຮອດສະໄໝລາຊະວົງຊິງ (ຄ.ສ 1644-ຄ.ສ 1911) ຜະລິດຕະພັນປັກແສ່ວຊູ່ໂຈວ ໂດຍເອົາຄວາມລະອຽດອ່ອນງາມຕາ" ຂຶ້ນຊື່ລືນາມ, ຊູ່ໂຈວໃນເວລານັ້ນກໍຖືກສັນລະເສີນວ່າເປັນ "ເມືອງປັກແສ່ວ". ຮອດສະໄໝ ກາງ ແລະທ້າຍສະໄໝລາຊະວົງຊິງ, ດ້ານເຕັກນິກການປັກແສ່ວຂອງສິ່ງປັກແສ່ວຊູ່ໂຈວໄດ້ມີການພັດທະນາອີກຕື່ມກ້າວໜຶ່ງໄດ້ປະກົດມີຜະລິດຕະພັນ "ແສ່ວ 2 ໜ້າທີ່ປານິດວິດງາມ, ພຽງແຕ່ເມືອງຊູ່ໂຈວແຫ່ງດຽວຫ້າງຮ້ານດຳເນີນທຸລະກິດເອົາການປັກແສ່ວເປັນອາຊີບສະເພາະນັ້ນກໍມີ 65 ຮ້ານ. ພາຍຫລັງປະເທດຈີນໃໝ່ສະຖາປະນາຂຶ້ນແລ້ວ, ຜະລິດຕະພັນການປັກແສ່ວຊູ່ໂຈວໄດ້ຟື້ນຟູຄືນແລະພັດທະນາໄປອີກຕື່ມກ້າວໜຶ່ງ. ຫລັງຈາກປີ 1950ແລ້ວ, ລັດໄດ້ສ້າງສະຖາບັນຄົ້ນຄວ້າຜະລິດຕະພັນປັກແສ່ວຊູ່ໂຈວສະເພາະຂຶ້ນ, ພ້ອມທັງໄດ້ເປີດຊຸດອົບຮົມວິຊາຊີບການປັກແສ່ວຂຶ້ນ.

ຜະລິດຕະພັນປັກແສ່ວຊູ່ໂຈວແຕ່ໃດມາໄດ້ຂຶ້ນຊື່ລືນາມເປັນສິ່ງປັກແສ່ວທີ່ມີຮູບແສ່ວສວຍງາມ, ໂຄງສ້າງແນວຄວາມຄິດຄ່ອງແຄ່ວລຽບແໜ້ນ, ວິທີປັກແສ່ວລະອຽດອ່ອນຊ້ອຍ ແລະ ມີຊີວິດຊີວາ, ສີສັນແຈ່ມແຈ້ງ ແລະ ມີບຸກຄະລິກສະເພາະຕົວ, ມີກິ່ນອາຍຂອງທ້ອງຖິ່ນເຂັ້ມຂົ້ນ. ຜະລິດຕະພັນປັກແສ່ວຊູ່ໂຈວໃຊ້ໄດ້ທັງເປັນຂອງປະດັບປະດາ ແລະ ທັງເປັນສິ່ງຂອງໃຊ້ໃນຊີວິດປະຈຳວັນຕົວຈິງ. ໃນນັ້ນໂດຍເອົາຜະລິດຕະພັນ "ແສ່ວ 2 ໜ້າ" ເປັນສິ່ງທີ່ປານິດວິດງາມກວ່າເພິ່ນ.




ງານປະດັບປະດາຊ້າງເຜືອກ
老挝圣象装饰
ດ້ວຍການອອກແບບໂຄງສ້າງທີ່ແຂງແຮງແລະທົນທານ
ພ້ອມເສີມເຫຼັກຊຸບກັນໜມຮັບ
ໄວ້ພາຍໃນວົງກົບແລະກອບບານ
ດ້ວຍເທັກໂນໂລຍີການເຊື່ອມຮອຍຕໍ່ຂອງ
ມູມວົງກົບແລະກອບບານດ້ວຍຄວາມຮ້ອນ
ຈົນສະໜິດເປັນເນື້ອດຽວກັນ
ເສີມລະບົບແຜ່ນຢາງແບບພິເສດ
ລະຫວ່າງວົງກົບແລະກອບບານ
ດ້ວຍການອອກແບບໂຄງສ້າງ
ພາຍໃນວົງກົບແລະກອບບານ
ໃຫ້ມີລ່ອງເກັບສຽງຫລາຍຊັ້ນ
ພວກເຮົາສາມາດເຮັດປະຕູແລະປ່ອງຢ້ຽມຕາມທີ່ທ່ານຕ້ອງການ
ເບີໂທ: (00856) 21 214071 ແຟກ: (00856) 21 213191
ທີ່ຢູ່: ຖະໜົນດົງໜ້ຽງ ຕໍ່ໜ້າວັດດົງໜ້ຽງ ວຽງຈັນ
地址：寮都公学十字路口
ມີອາຍຸການໃຊ້ງານ
ທີ່ທົນທານກ່ວາວັດສະດຸອື່ນໆ
ປ້ອງກັນນ້ຳໄຫລເຂົ້າມາໄດ້ເປັນຢ່າງດີ
ງ່າຍຕໍ່ການທຳຄວາມສະອາດ
ໂຈນບໍ່ສາມາດເຂົ້າມາໄດ້
ອອກແບບທັນຍຸກທັນສະໄໝ
NK 工作室

# Can't we blend art and commerce?

- With your participation, PHOTOMEKONG will a most successful 'bridge' ! Please just press your shutter for the most wonderful moment and join us, to blend art and commerce!
- We are expecting your agreement to work with us as a photographer at PHOTOMEKONG!
- PHOTOMEKONG includes numerous photos representing the natural and humanistic attractions, ethnic cultures, socio-economic development and local resources of China's Yunan province, Myanmar, Thailand, Laos, Cambodia and Vietnam along the Mekong River. With its professional services, exhibition of photos by photographers from Yunnan of China and Southeast Asian countries, and a transaction platform, PHOTOMEKONG also provides state-of-the-art photo resources for the clients engaged in newspapers, periodicals, magazines, pictorials and other media.



PHOTOMEKONG
湄 公 河 图 片 库

http://www.photomekong.com Fax: +86 871 3103179 E-mail: service@photomekong.com
Address: Room 1512, Hongcheng Plaza, Youth Road, Kunming City 650021 Yunnan Province, China



# ເສື້ອຜ້າອາພອນຊົນເຜົ່າອູຍກູເອີນ ຫຼາຍຮູບແບບທີ່ສວຍງາມ

## 绚丽多姿的维吾尔族服饰

维吾尔族是中国古老的、历史悠久的民族之一。维吾尔族人民勤劳勇敢，热情奔放，性格豪迈，并且能歌善舞，在漫长的历史发展过程中，还创造了丰富多彩的文化艺术。绚丽多姿的服饰是维吾尔族服饰文化的组成部分。维吾尔族服饰形式清晰、纹路多样、色彩鲜明。







ຊົນເຜົ່າອູຍອູເອີເປັນໜຶ່ງໃນຊົນເຜົ່າທີ່ມີປະຫວັດສາດເກົ່າແກ່ບູຮານອັນຍາວນານຂອງຈີນ. ປະຊາຊົນອູຍອູເອີກ້າຫານໝັ່ນພຽນ, ກະຕືລືລົ້ນ ແລະ ມີບຸກຄະລິກສະຫງ່າຜ່າເຜີຍ, ນິຍົມຮ້ອງເພງ ແລະ ຟ້ອນລຳ, ໃນຂະບວນວິວັດແຫ່ງການຂະຫຍາຍຕົວຂອງປະຫວັດສາດອັນຍາວນານນັ້ນ, ໄດ້ປະດິດຄິດສ້າງສິລະປະວັດທະນະທຳທີ່ຫຼາຍຮູບຫຼາຍສີອັນອຸດົມສົມບູນຂຶ້ນມາ. ເສື້ອຜ້າອາພອນມີຫຼາຍຮູບຫຼາຍແບບອັນສວຍງາມນັ້ນເປັນພາກສ່ວນປະກອບຂອງວັດທນະທຳເສື້ອຜ້າອາພອນຊົນເຜົ່າອູຍອູເອີ. ຮູບແບບເສື້ອຜ້າອາພອນຂອງອູຍອູເອີແຈ່ມແຈ້ງ, ລາຍດອກມີຫຼາຍຊະນິດ, ສີສັນສົດໃສ. ຈຸດພິເສດຂອງເສື້ອຜ້າອາພອນເຜົ່າອູຍອູເອີແມ່ນຍາມຮ້ອນນຸ່ງເສື້ອຜ້າໄໝຍາມໜາວນຸ່ງເສື້ອຜ້າເຮັດດ້ວຍໜັງ ແລະ ຂົນສັດ, ຜູ້ຊາຍສ່ວນຫຼາຍມັກນຸ່ງເສື້ອໃຫຍ່ຍາວຮອດແຂ່ງທີ່ເອີ້ນກັນວ່າ: "ເສັຍປ້ານ", ເສື້ອໃຫຍ່ຄຸມນອກຊະນິດດັ່ງກ່າວຄວາມຍາວຂອງມັນເກີນກວ່າຫົວເຂົ່າ, ແຂນກ້ວາງ, ບໍ່ມີຄໍ, ບໍ່ມີກະດຸມ, ສາມາດຮັດສາຍແອວເພື່ອໃຫ້ຕິດກັບຕົວ. ແອວໄດ້ຄັດຕິດກ່ອງຮູບສີ່ຫຼ່ຽມທີ່ທັງໃຫຍ່ທັງຍາວ, ເພື່ອໃຊ້ສຳລັບໄວ້ຂອງກິນ ແລະ ເຄື່ອງໃຊ້ຂອງສອຍອື່ນໆ. ຕາມທຳມະດາການຮັດສາຍແອວກໍບໍ່ຕ້ອງພິຖີພິຖັນປານໃດ, ແຕ່ຮອດມື້ມີພິທີກຳອັນສຳຄັນ ຫຼື ວັນບຸນທີ່ ສຳຄັນຕ້ອງມັດສາຍແອວທີ່ພິມລາຍດອກຫຼືປັກແສ່ວທີ່ມີສີສັນສະດຸ້ງຕາ, ເສື້ອຊັ້ນໃນຂ້ອນຂ້າງສັ້ນ, ສ່ວນຫຼາຍບໍ່ເປີດ ເອິກ, ສີຜ້າສ່ວນໃຫຍ່ແມ່ນສີຂາວ, ສີດຳຫຼືມີເສັ້ນລາຍສີເຂັ້ມ, ເສື້ອຊັ້ນໃນຂອງຊາວໜຸ່ມມັກກຸ້ມດ້ວຍຜ້າລາຍດອກ. ລະດູຮ້ອນສ່ວນຫຼາຍມັກນຸ່ງເສື້ອຍາວສີຂາວ, ຍາມໜາວນຸ່ງເສື້ອຍາວເຮັດ ດ້ວຍຝ້າຍເປັນສີດຳ, ສີຂີ້ເຖົ່າຊຶ່ງສ່ວນຫຼາຍເປັນສີເຂັ້ມ.

ເພດຍິງຂອງອູຍອູເອີສ່ວນຫລາຍມັກນຸ່ງເສື້ອຕິດກັບກະໂປງທີ່ມີສີສັນສວຍງາມເປັນເສື້ອຕິດກັບກະໂປງແຂນກ້ວາງມີລາຍງາມພິເສດ, ທາງນອກນຸ່ງເສື້ອກັກເປີດເອິກສີດຳທີ່ແສ່ວດ້ວຍໄໝຄຳ, ໜ້າເອິກທັງຄູ່ແສ່ວດອກໄມ້ນ້ອຍໃສ່ຕີນບ່າ. ເສື້ອຜ້າທີ່ແມ່ຍິງອູຍອູເອີນິຍົມພິເສດນັ້ນກໍຄື "ຜ້າໄໝອາຍເຕີ້ລາຍຊີ່" ທີ່ລີ່ຊີ່. ແມ່ຍິງແຕ່ລະທ້ອງຖິ່ນຂອງຊົນເຜົ່າອູຍອູເອີກ່ອນແຕ່ງງານໂດຍທົ່ວໄປແລ້ວແມ່ນຈຶ່ງຜົມເປຍນ້ອຍ, ບາງຄົນຈຶ່ງຜົມເປຍນ້ອຍເປັນສິບກວ່າສາຍ ຫຼື ຫຼາຍກວ່ານັ້ນກໍມີ. ຫຼັງແຕ່ງງານແລ້ວຮູບແບບຂອງຜົມມີອັນແຕກຕ່າງກັນໄປຕາມເຂດແຄ້ວນ, ແມ່ຍິງຢູ່ພາກໃຕ້ຂອງຊິ່ນຈ່ຽງຫຼັງຈາກແຕ່ງງານແລ້ວຈຶ່ງຜົມເປຍ 4 ສາຍ, ຢູ່ເບື້ອງໜ້າຜາກຂ້ອນຂ້າງນ້ອຍ ຢູ່ເບື້ອງກະດົ້ນຂ້ອນຂ້າງຫຼາຍເວລາຫວີຫົວເອົາຜົມເປຍ 2 ເສັ້ນຢູ່ເບື້ອງໜ້າທີ່ຂ້ອນຂ້າງນ້ອຍນັ້ນມັດຕິດກັບຜົມເປຍ 2 ສາຍຢູ່ກະດົ້ນ, ກາຍເປັນຜົມເປຍໃຫຍ່ 2ສາຍ; ພາກເໜືອຂອງຊິ່ນຈ່ຽງທົ່ວໄປແລ້ວມີແຕ່ຫົວຜົມເປຍ 2ສາຍເທົ່ານັ້ນ.

ບໍ່ວ່າຍິງຫຼືຊາຍຂອງຊົນເຜົ່າອູຍອູເອີ ລ້ວນແຕ່ມັກຖືເກີບໂບດໜັງ, ຢູ່ໃນເກີບໂບດຍັງມີເກີບສຸບ, ເມື່ອເຂົ້າໃນເຮືອນໄດ້ປົດເກີບເພື່ອຮັກສາຄວາມສະອາດຂອງເຮືອນ. ຮອດຍາມໜາວແມ່ນຖືເກີບໂບດຂົນສັດ.

ຊາວຊົນເຜົ່າອູຍອູເອີບໍ່ວ່າຈະແມ່ນຍິງຫຼືຊາຍລ້ວນແຕ່ມັກຖືໝວກແສ່ວດ້ວຍດອກໄມ້ນ້ອຍໃສ່ເປັນໝວກວ່ອມສີ່ຫລ່ຽມທີ່ປັກແສ່ວຢ່າງງາມຕາ, ອັນນີ້ເປັນສັນຍາລັດອັນສຳຄັນໃນການຈຳແນກຊົນເຜົ່າອູຍອູເອີ. ອີງຕາມພິທີກຳທາງສາສະໜາ, ຍິງຊາຍຂອງຊົນເຜົ່າອູຍອູເອີລ້ວນແຕ່ບໍ່ໃຫ້ເປືອຍຫົວຢູ່ເທິງເຮືອນ. ຖ້າວ່າຢູ່ນອກບ້ານ, ເທິງຫົວບໍ່ມີເຄື່ອງປົກປິດຖືເປັນການກະທຳທີ່ລົບລູ່ຊະນິດໜຶ່ງຕໍ່ຟ້າແຖນ. ດັ່ງນັ້ນຜູ້ຍິງຜູ້ຊາຍອອກນອກບ້ານຈຳຕ້ອງໄດ້ຖືໝວກ. ລະດູໜາວສ່ວນຫຼາຍຖືໝວກໜັງ. ແມ່ຍິງພາກໃຕ້ຂອງຊິ່ນຈ່ຽງເວລາອອກນອກບ້ານນອກຈາກຖືໝວກແລ້ວ, ຍັງເອົາຜ້າປົກຫົວສີຂາວຫຼືສີໝາກກະເບົາມາເປັນຜ້າປົກໜ້າ. ສະນັ້ນໝວກວ່ອມນ້ອຍທີ່ປັກແສ່ວດ້ວຍລາຍດອກອັນສວຍງາມແລະຫຼາຍຮູບຫຼາຍສີທີ່ປະໜີດນັ້ນໄດ້ກາຍເປັນເຄື່ອງເອ້ຢູ່ເທິງຫົວອັນສຳຄັນຂາດບໍ່ໄດ້ໃນຊີວິດປະຈຳວັນຂອງຊາວອູຍອູເອີ ແລະ ເຂົາເຈົ້າກໍເອົາມາເປັນຂອງຂວັນອັນລ້ຳຄ່າເພື່ອມອບໃຫ້ຍາດມິດຫຼືແຂກຜູ້ມີກຽດ.



# ອາຫານປະສົມກັນເປັນຄູ່,ທາດບຳລຸງ ຈະເພີ່ມຂຶ້ນ 1 ເທົ່າຕົວ

## 食物配好对　营养能加倍

每天我们吃掉的食物多种多样，而这些食物之间是否会发生相互作用呢？哪些食物搭配可以发挥最大效力呢？最新的营养学研究，发现了一些在协效性方面表现突出的食物，能够很好地促进人体健康。

ແຕ່ລະວັນອາຫານທີ່ພວກເຮົາຮັບປະທານນັ້ນມີຫລາຍສິ່ງຫລາຍແນວ, ແຕ່ວ່າລະຫວ່າງອາຫານດັ່ງກ່າວຈະເກີດມີປົດບາດຊຶ່ງກັນແລະກັນຫລືບໍ່?ອາຫານຊະນິດໃດເມື່ອຄອບເຂົ້າກັນແລ້ວ

ສາມາດເສີມຂະຫຍາຍປະສິດທິຜົນຫລາຍທີ່ສຸດ?ຫວ່າງໃກ້ໆນີ້ ຕາມການຄົ້ນຄ້ວາຂອງການບຳລຸງວິທະຍາໄດ້ພົບເຫັນອາຫານສ່ວນໜຶ່ງດ້ານລັກສະນະປະສົມປະສານເກີດສັບພະຄຸນນັ້ນສະແດງອອກຢ່າງໂດດເດັ່ນ,ສາມາດຊຸກຍູ້ສຸຂະພາບຮ່າງກາຍຂອງຄົນເປັນຢ່າງດີ.

ໝາກເລັ່ນປະສົມກັບດອກກະລຳຂຽວອະພັກ 2 ຊະນິດດັ່ງກ່າວທາດບຳລຸງຂອງໃຜລາວລ້ວນແຕ່ອຸດົມສົມບູນທີ່ສຸດ,ປະສົມເຂົ້າກັນມາຮັບປະທານແລ້ວກໍສາມາດເວົ້າໄດ້ວ່າປານເອົາຂອງແຂງບວກໃສ່ຂອງແຂງ,ເກີດສ່ວນປະກອບທາດບຳລຸງຍິ່ງຫລາຍກວ່າເກົ່າ,ສາມາດຜ່ອນຄາຍການແຜ່ຂະຫຍາຍເນື້ອງອກຂອງຕ່ອມລູກໝາກຢ່າງມີປະສິດທິຜົນ.

ໝາກໂປມກິນທັງເປືອກ: ການຄົ້ນຄວ້າໄດ້ສະແດງອອກໃຫ້ເຫັນວ່າ,ພາກສ່ວນຕ້ານມະເຮັງສ່ວນໃຫຍ່ໃນໝາກໂປມນັ້ນລ້ວນແຕ່ເຊື່ອງຊ້ອນຢູ່ໃນເປືອກຂອງມັນ,ວັດຖຸຕ້ານມະເຮັງຢູ່ໃນເນື້ອ ແລະ ເປືອກຂອງໝາກໂປມກໍຍິນດີຮ່ວມກັນສູ້ຮົບ,ສາມາດບັນລຸປະສິດທິຜົນຕ້ານພະຍາດມະເຮັງໄດ້ດີຂຶ້ນກວ່າເກົ່າ.

ເອົາມັນຝຣັ່ງທັງເປືອກມາຂົ້ວໃສ່ນ້ຳມັນໝາກກອກ: ເປືອກຂອງມັນຝຣັ່ງມີທາດບຳລຸງອຸດົມສົມບູນທີ່ສຸດ,ມັນບໍ່ພຽງແຕ່ກິນອັດຕາສ່ວນ 98% ຂອງ flavonal ຍັງເຈືອປົນສານກາລົດ 2 ຊະນິດ.ເອົາມັນຝຣັ່ງທັງເປືອກມາຂົ້ວໃສ່ນ້ຳມັນໝາກກອກ,ຮ່າງກາຍຂອງຄົນເຮົາສາມາດຮັບເອົາພາກສ່ວນທາດບຳລຸງໃນມັນຝຣັ່ງໄດ້ຫລາຍຂຶ້ນກວ່າເກົ່າ, ມັນມີສັບພະຄຸນຮັກສາຕັບ, ເຮັດໃຫ້ຕາແຈ້ງ.

ຜັກປະເພດດອກສີກີບ: ຢູ່ໃນຜັກປະເພດດອກສີກີບນັ້ນເຈືອປົນພາກສ່ວນສຳຄັນ 2 ຊະນິດຂອງການຕ້ານມະເຮັງ.ດັ່ງນັ້ນສະເໜີໃຫ້ເອົາປະເພດຜັກດອກສີກີບ 2 ຊະນິດ ຫລື ຫລາຍກວ່ານັ້ນປະສົມເຂົ້າກັນມາຮັບປະທານເຊັ່ນ: ເອົາດອກກະລຳຂຽວປະສົມກັບດອກກະລຳຂາວມາຮັບປະທານນຳກັນ.

ນອກນັ້ນ,ອາຫານທີ່ມີລັກສະນະປະສານກັນມີສັບພະຄຸນດີທີ່ສຸດດັ່ງຕໍ່ໄປນີ້ສາມາດມີບົດບາດຊຶ່ງກັນແລະກັນກັບອາຫານຫຼາຍຊະນິດມາຊຸກຍູ້ສຸຂະພາບຂອງຮ່າງກາຍຄົນເຮົາຄື:

ອາຫານທີ່ແມ່ນປະເພດທັນຍາຫານຄົບຊຸດ:ມີໄຂມັນຕ່ຳບໍ່ມີໂຄເລດເຕີໂລນ,ໂປຣຕີນສູງ,ມີໃຍຫລາຍສາມາດປ້ອງກັນພະຍາດຫລອດເລືອດຫົວໃຈ ແລະ ພະຍາດມະເຮັງ.

ປະເພດຜັກ: ທາດບຳລຸງໃນຜັກອຸດົມສົມບູນໂດຍສະເພາະແມ່ນຜັກທີ່ມີສີຂຽວແກ່ລັກສະນະປະສົມປະສານການເກີດສັບພະຄຸນຫລາຍທີ່ສຸດ.

ໝາກໄມ້ທີ່ມີເປືອກແຂງ: ມີອາຊິດໄຂມັນບໍ່ອີ່ມຕົວ,ສານຕ້ານອອກໄຊແລະສານປະລິມານໜ້ອຍ(trace element) ສ່ວນໜຶ່ງ,ແລ້ວມັນມີຜົນດີໃຫ້ແກ່ການຫລຸດຜ່ອນໂຄເລັດເຕີໂລນໃນເລືອດ,ເພີ່ມກຳລັງຕ້ານທານພະຍາດຫລຸດຜ່ອນການສ່ຽງໄພໄດ້ພະຍາດມະເຮັງບາງຊະນິດ.

ຊາ: ຊາມີສານສັງເຄາະປະເພດສ້ອນີນຣກທີ່ມີຜົນປະໂຫຍດໃຫ້ແກ່ສຸຂະພາບຂອງຄົນເຮົາ,ສານຕ້ານອອກໄຊໃນຊາຂຽວ ແລະ ຊາແດງສາມາດຕ້ານຍັບການເກີດຈູລັນຂອງມະເຮັງ.

ນ້ຳມັນໝາກກອກ: ເຈືອປົນດ້ວຍວັດຖຸສັງເຄາະຂອງພືດ 30ກວ່າຊະນິດ,ສາມາດຊຸກຍູ້ໃຫ້ຫົວໃຈມີສຸຂະພາບ,ປ້ອງກັນເກີດພະຍາດມະເຮັງ.

ປະເພດປາ: ອາຊິດໄຂມັນໂອມີກາ-3ໃນຊີ້ນປານັ້ນເມື່ອມີບົດບາດຮ່ວມກັນກັບໂປຕັດຊຽມແລ້ວສາມາດຊຸກຍູ້ໃຫ້ຫົວໃຈມີສຸຂະພາບ;ກິນປາເປັນປະຈຳຕໍ່ສຸຂະພາບສະໝອງຜູ້ອາຍຸສູງແມ່ນມີຜົນປະໂຫຍດທີ່ສຸດ.

ໝາກເລັ່ນ: ສານກາລົດ 4 ປະເພດໃນໝາກເລັ່ນນັ້ນມີສານຕ້ານອອກໄຊຢ່າງແຂງແຮງ 3 ຊະນິດຍັງມີສານສີແດງຂອງໝາກເລັ່ນລ້ວນແຕ່ມີບົດບາດປະສົມປະສານກັນເກີດສັບພະຄຸນຢ່າງຫລວງຫລາຍ.

ໝາກກ້ຽງ: ມີວິຕາມິນເຊອັນອຸດົມສົມບູນ ແລະ ວັດຖຸສັງເຄາະ flavonoid,ສາມາດມີບົດບາດປະສົມປະສານກັນເກີດສັບພະຄຸນກັບອາຫານອື່ນໆ.

ຜະລິດຕະພັນນ້ຳນົມໄຂມັນຕ່ຳ: ການລວມເຂົ້າກັນຂອງການໂຊມກັບວິຕາມິນບີໃນນ້ຳນົມທີ່ມີໄຂມັນຕ່ຳສາມາດຫລຸດຜ່ອນຄວາມສ່ຽງໄພເກີດມະເຮັງໄສ້ສຸດ.

ຈຶ່ງສະເໜີອາຫານການກິນ 9 ປະເພດທີ່ກ່າວມາຂ້າງເທິງນີ້,ດີທີ່ສຸດແຕ່ລະວັນໃຫ້ກິນຄົບ 5 ຊະນິດ.

绘图/刘金昆

# ພວກເຮົາພ້ອມກັນໄປເຊຍໃຫ້ແກ່ມະຫະກຳ ກິລາໂອລິມປິກ

wǒ men yì qǐ wéi ào yùn jiā yóu
我 们 一 起 为 奥 运 加 油

yī qíng jǐng duì huà
一、 情 景 对 话　　文/陆 蕊
ສະຖານະພາບຂອງການສົນທະນາ:




ào yùn huì jiù yào kāi mù le
A: 奥 运 会 就 要 开 幕 了!
ງານກິລາໂອລິມປິກຈະເປີດສາກແລ້ວ!

shì ya wǒ hǎo jī dòng
B: 是 呀! 我 好 激 动.
ແມ່ນລະບໍ່! ເຮົາຕື່ນເຕັ້ນທີ່ສຸດ.

yí hàn de shì wǒ men bù néng dào běi jīng qīn lín xiàn chǎng wéi ào yùn jiàn ér men jiā yóu
A: 遗 憾 的 是 我 们 不 能 到 北 京 亲 临 现 场 为 奥 运 健 儿 们 加 油!
ໜ້າເສຍດາຍແມ່ນພວກເຮົາບໍ່ສາມາດໄປປັກກິ່ງເຊຍໃຫ້ນັກກິລາໂອລິມປິກ.

méi guān xi de wǒ men kě yǐ zài jiā lǐ guān kàn diàn shì zhuǎn bō
B: 没 关 系 的, 我 们 可 以 在 家 里 观 看 电 视 转 播.
ບໍ່ເປັນຫຍັງ, ພວກເຮົາສາມາດຊົມການຖ່າຍທອດສົດທາງໂທລະພາບຢູ່ໃນເຮືອນກໍໄດ້.

diàn shì zhuǎn bō zěn me néng hé xiàn chǎng xiāng bǐ
A: 电 视 转 播 怎 么 能 和 现 场 相 比!
ການຖ່າຍທອດທາງໂທລະພາບຈະຄືກັນກັບການຊົມກັບທີ່ໄດ້ແນວໃດ!

zhè nǐ jiù cuò le xīn wén méi tǐ zǎo jiù zuò hǎo bào dào zhǔn bèi le tā men huì jí shí zhǔn què quán miàn dì bǎ ào yùn de zuì xīn qíng kuàng bào dào gěi guān zhòng
B: 这 你 就 错 了, 新 闻 媒 体 早 就 做 好 报 道 准 备 了, 他 们 会 及 时、准 确、全 面 地 把 奥 运 的 最 新 情 况 报 道 给 观 众.
ຖ້າເວົ້າຊັ້ນແມ່ນເຈົ້າຜິດໄປແລ້ວ, ສື່ມວນຊົນເຂົາກໍໄດ້ກະກຽມການລາຍງານຂ່າວງານກິລາຄັ້ງນີ້ໄວ້ກ່ອນໜ້ານີ້ແລ້ວ. ເຂົາເຈົ້າຈະລາຍງານໃຫ້ຜູ້ຊົມງານສະເພາະ ຫຼ້າສຸດຂອງງານແຂ່ງຂັນກິລາໂອລິມປິກຢ່າງທັນ ການ, ແມ່ນຢໍາ ແລະ ຮອບດ້ານ.

yě duì wǒ men yí yàng kě yǐ zài jiā lǐ wéi ào yùn jiàn ér men jiā yóu
A: 也 对, 我 们 一 样 可 以 在 家 里 为 奥 运 健 儿 们 加 油.
ກໍຖືກຕ້ອງ, ພວກເຮົາກໍສາມາດເຊຍໃຫ້ນັກກິລາໂອລິມປິກຢູ່ໃນເຮືອນໄດ້ຄືກັນ.

duì dào shí hòu jiù dào wǒ jiā lái ba wǒ tè yì zhǔn bèi de yī tái cùn de yè
B: 对, 到 时 候 就 到 我 家 来 吧, 我 特 意 准 备 的 一 台42 寸 的 液

jīng diàn shì
晶 电 视.

ແມ່ນລະບໍ່,ຮອດເວລານັ້ນແລ້ວໃຫ້ມາເຮືອນເຮົານີ້,ເຮົາໄດ້ຕັ້ງໃຈກຽມໂທລະພາບ liquid ctrstal 42ນີ້ວເຄື່ອງໜຶ່ງໄວ້ ແລ້ວ.

nǐ xiǎng dé zhēn zhōu dào
A: 你 想 得 真 周 到.

ເຈົ້າຈັ່ງແມ່ນຄຶດຮອບຄອບແທ້ນໍ້.

wǒ hái zhǔn bèi le lù xiàng jī
B: 我 还 准 备 了 录 像 机.

ຂ້ອຍຍັງໄດ້ກະກຽມເລື່ອງຖ່າຍພາບໄວ້ນຳ ດ້ວຍ.

nǐ kě zhēn xíng
A: 你 可 真 行.

ເຈົ້າຈັ່ງແມ່ນເອົາການເອົາງານແທ້ນໍ້.

zán yào bǎ zhè cì jī dòng rén xīn de
B: 咱 要 把 这 次 激 动 人 心 的

ào yùn huì jì lù xià lái
奥 运 会 记 录 下 来.

ພວກເຮົາຈະບັນທຶກເອົາພາບງານມະຫະກຳກິລາໂອລິມປິກທີ່ເຮັດໃຫ້ຄົນຕື່ນເຕັ້ນໃນຄັ້ງນີ້ໄວ້.

dào shí hòu yě gěi wǒ bèi fèn yī fèn
A: 到 时 候 也 给 我 准 备 一 份.

ຮອດເວລານັ້ນແລ້ວກະລຸນາໂກປີໃຫ້ເຮົາໜຶ່ງຊຸດແດ່.

méi wèn tí wǒ men yì qǐ wéi ào yùn
B: 没 问 题, 我 们 一 起 为 奥 运

jiā yóu
加 油!

ບໍ່ມີບັນຫາ,ພວກເຮົາພ້ອມກັນເຊຍໃຫ້ງານກິລາໂອລິມປິກນໍ້!

èr jiāo nǐ dú gǔ shī
## 二: 教 你 读 古 诗 编/陆 蕊

ສອນໃຫ້ທ່ານອ່ານກາບກອນບູຮານ

ຈ່ຽງເຊຍ(ທີມະໃນແມ່ນໍ້າ)ມີເນື້ອຫາດັ່ງນີ້:

yǐn hú shàng chū qíng hòu yǔ
### **饮 湖 上 初 晴 后 雨**

shuǐ guāng liàn yàn qíng fāng hǎo
水 光 潋 滟 晴 方 好,

shān sè kōng méng yǔ yì qí
山 色 空 濛 雨 亦 奇。

yù bǎ xī hú bǐ xī zǐ
欲 把 西 湖 比 西 子,

dàn zhuāng nóng mǒ zǒng xiāng yí
淡 妆 浓 抹 总 相 宜。

dà yì
大 意:

bō guāng lín lín qíng tiān xī hú duō
波 光 粼 粼, 晴 天 西 湖 多
me měi hǎo shān sè mí máng yǔ zhōng jǐng
么 美 好, 山 色 迷 茫, 雨 中 景
zhì yě hěn qí miào ruò bǎ xī hú dàng zuò
致 也 很 奇 妙。 若 把 西 湖 当 做
shì měi nǚ xī shī dàn zhuāng nóng mǒ dōu
是 美 女 西 施, 淡 妆 浓 抹 都
shì nà me měi lì duō jiāo
是 那 么 美 丽 多 娇。



ຄວາມໝາຍຂອງກະວີ:ແສງຫຍິບຫຍັບຢູ່ຕາມກະແສຄື່ນຂອງນໍ້າ,ໃນມື້ຟ້າໜອງຊີຮູແຈ້ງຈັ່ງແມ່ນສວຍງາມແທ້ນໍ້,ສີສັນຂອງພູເຂົາເຮັດໃຫ້ຄົນຫລົງໄຫລ,ທິວທັດໃນຍາມຝົນຕົກກໍປາຕິຫານທີ່ສຸດ.ຖ້າວ່າເອົາໜອງຊີຮູມາສົມທຽບເປັນນາງສາວຊີ່ຊີ່,ແລ້ວບໍ່ວ່າຈະແມ່ນແຕ່ງຕົວແບບລຽບງ່າຍ ຫລື ແຕ່ງຕົວ ແບບຫລູຫລາລ້ວນແຕ່ສວຍງາມ ແລະ ມີສະເໜ່ທັງນັ້ນ.




过门不入

# ກາຍໜ້າປະຕູໄປກໍ່ບໍ່ເຂົ້າເຮືອນ

ສະໄໝດຶກດຳບັນ, ເຄີຍມີໄພນ້ຳຖ້ວມຂະໜາດໃຫຍ່ເທື່ອໜຶ່ງ, ກິນເວລາໄປເປັນ 20 ກວ່າປີ, ເນື້ອທີ່ປະສົບໄພກວ້າງຂວາງທີ່ສຸດ.

ເວລານັ້ນພໍດີແມ່ນໄລຍະເວລາຊຸ້ນກຳອຳນາດການປົກຄອງ, ທ່ານໄດ້ແຕ່ງໃຫ້ອີໄປຈັດການກັບນ້ຳອີໄດ້ຖອດຖອນເອົາບົດຮຽນຈັດການຕໍ່ນ້ຳຂອງພໍ່, ນຳໃຊ້ວິທີລຸໂລງນ້ຳໄຫລ, ອີງຕາມພູມສັນຖານມາຈັດວາງຊ່ອງຂອງນ້ຳ, ຈັດການນ້ຳນອງໄຫລເຂົ້າສູ່ແມ່ນ້ຳໃຫຍ່, ໄຫລເຂົ້າສູ່ທະເລ, ສຸດທ້າຍໄດ້ເຮັດໃຫ້ນ້ຳຖ້ວມນັ້ນຢຸດຕິຄືນສູ່ສະພາບປົກກະຕິ.

ໃນໄລຍະເວລາຈັດການກັບນ້ຳນັ້ນ, ຢູ່ທູ້ຊ່ານ(ພາກຕາເວັນຕົກສ່ຽງເໜືອຂອງເມືອງສ້າວຊິ່ນແຂວງເຈີ້ຈ່ຽງໃນປະຈຸບັນ)ອີໄດ້ພົບກັບນາງສາວຜູ້ໜຶ່ງມີຊື່ວ່ານີ່ຈ່ຽວ, ເວລານັ້ນອາຍຸອີກໍ 30 ກວ່າປີແລ້ວ, ຍັງບໍ່ທັນໄດ້ແຕ່ງງານ. 2 ຄົນເມື່ອພົບກັນແລ້ວຕ່າງມີຄວາມມັກຮັກຕໍ່ກັນທີ່ສຸດ, ແລ້ວກໍແຕ່ງງານເປັນຜົວເມຍ. ແຕ່ຫລັງຈາກແຕ່ງງານໄດ້ 4 ວັນອີກໍຟ້າວໄປຈັດການ ກັບນ້ຳອີກ.

ຜ່ານເວລາຈັດການກັບນ້ຳ 13 ປີນັ້ນ, ອີເຄີຍໄດ້ກາຍໜ້າປະຕູເຮືອນຂອງຕົນ3ຄັ້ງ, ຄັ້ງທີ່ 1 ແມ່ນລູກຍັງໄຫ້ຢູ່ໃນທ້ອງຂອງແມ່, ອີກຄັ້ງໜຶ່ງແມ່ນລູກຫາກໍຮຽນປາກເອີ້ນພໍ່; ຍັງອີກຄັ້ງໜຶ່ງແມ່ນລູກໃຫຍ່ຂຶ້ນມາແລ້ວຢາກໃຫ້ພໍ່ຢູ່ນຳ. ແຕ່ວ່າອີບໍ່ໄດ້ເຂົ້າປະຕູເຮືອນຂອງຕົນແມ້ແຕ່ຄັ້ງດຽວເພາະວ່າເວລາຮີບດ່ວນເກີນໄປ.

ສຸພະສິດທີ່ວ່າ "ກາຍໜ້າປະຕູເຮືອນກໍບໍ່ເຂົ້າເຮືອນ" ກໍແມ່ນອອກຈາກນິທານເລື່ອງນີ້. ຄວາມໝາຍຂອງມັນຄືເດີນທາງຜ່ານໜ້າປະຕູເຮືອນຂອງຕົນ 3 ຄັ້ງແຕ່ຊ້ຳພັດບໍ່ເຂົ້າໄປໃນເຮືອນ, ເປັນການພັນລະນາເຖິງຜູ້ທີ່ປະຕິບັດພາລະໜ້າທີ່ຢ່າງຕັ້ງໜ້າ, ເພື່ອສ່ວນລວມແລ້ວບໍ່ເອົາຫົວຊາຕໍ່ຜົນປະໂຫຍດຂອງສ່ວນຕົວ.


Welcome to Laos... Land of Timeless Beauty
RDPL-34132
Lao Airlines
ການບິນລາວ
Lao Airlines
The Beauty of Lao Hospitality



中国选手林跃、火亮获得2008奥运男子10米双人跳台冠军　CFP 图